ພີ່ນ້ອງທີ່ຮັກ : ພຣະຄຳພີ ກໍຄື ຂໍ້ຄວາມຂ່າວສານຈາກພຣະເຈົ້າເຖິງເຮົາທັງຫຼາຍໃນໂລກນີ້, ຄົນສ່ວນໃຫຍ່ຈະຮູ້ສຶກວ່າພຣະຄຳພີເປັນເໝືອນຮູບຕໍ່ຂະໜາດໃຫຍ່; ພີ່ນ້ອງເຄີຍຕໍ່ຮູບພວກນັ້ນຈັກເທື່ອໜຶ່ງຫຼືບໍ? ຄືກ່ອນອື່ນຈະຕ້ອງຫາສິ້ນທີ່ເປັນມູມຂອງຮູບທັງສີ່ໃຫ້ໄດ້ກ່ອນ ແລ້ວກໍຫາສິ້ນທີ່ເປັນຂອບຮູບເອົາມາຕໍ່ກັນເປັນຂອບ, ຕໍ່ຈາກນັ້ນກໍຄ່ອຍໆຕໍ່ຮູບເຂົ້າກັນ ພາບກໍຈະຄ່ອຍໆປາກົດອອກມາ ເມື່ອໃສ່ສິ້ນສຸດທ້າຍລົງໄປກໍໄດ້ພາບທີ່ສົມບູນ.

ບົດຮຽນພຣະຄຳພີຈາກຍຸກສ້າງໂລກເຖິງຊີວິດພຣະເຢຊູຄຣິດຊຸດນີ້ມີສີ່ເຫຼັ້ມ, ເຫຼັ້ມທຳອິດເປັນເໝືອນສິ້ນສ່ວນທີ່ເປັນມູມຮູບຂອງພຣະຄຳພີ, ເຫຼັ້ມທີ່ສອງເປັນຂອບ ສ່ວນເຫຼັ້ມທີ່ສາມແລະສີ່ເປັນສິ້ນສ່ວນທີ່ຕໍ່ເປັນຮູບພາບໃນຂອບຊຶ່ງຈະເປັນພາບທີ່ງົດງາມຂອງພຣະຄຸນແລະຄວາມເມດຕາຂອງພຣະເຈົ້າ.

ທ້າຍສຸດຂອງປຶ້ມເຫຼັ້ມນີ້ຈະມີຄຳຖາມສັ້ນໆຂອງບົດຮຽນແຕ່ລະບົດ ເພື່ອຊ່ວຍໃຫ້ພວກເຮົາເຂົ້າໃຈເລື່ອງທີ່ອ່ານແຈ້ງຂຶ້ນ. ຂໍແນະນຳໃຫ້ອ່ານຄຳຖາມເຫຼົ່ານັ້ນກ່ອນ ແລ້ວຈິ່ງໄປອ່ານເນື້ອເລື່ອງແລະເມື່ອອ່ານເນື້ອເລື່ອງສຳເລັດແລ້ວ ກໍກັບມາຕອບຄຳຖາມເລີຍ ຈະດີກວ່າ.

ເມື່ອອ່ານໜັງສືເຫຼັ້ມນີ້ ແລະຕອບຄຳຖາມຄົບໝົດທຸກບົດແລ້ວໃຫ້ພີ່ນ້ອງຄ່ອຍໆຈີກໜ້າທີ່ເປັນຄຳຖາມເຫຼົ່ານັ້ນໃສ່ຊອງຕິດສະແຕມ ແລ້ວສົ່ງກັບມາຕາມທີ່ຢູ່ທີ່ແຈ້ງໄວ້, ສ່ວນໜັງສືນັ້ນພວກເຮົາຂໍມອບເປັນຂອງຂວັນໃຫ້ແກ່ພີ່ນ້ອງເກັບໄວ້ໄດ້ເລີຍແລະອີກປະມານສອງ-ສາມອາທິດ ພວກເຮົາຈະສົ່ງເຫຼັ້ມຕໍ່ໄປໃຫ້.

ຖ້າມີບັນຫາໃດທີ່ບໍ່ເຂົ້າໃຈ ຢາກໃຫ້ພວກເຮົາຊ່ວຍເຫຼືອ ກະລຸນາຂຽນຄຳຖາມສົ່ງມາຖາມໄດ້ຕາມທີ່ຢູ່ຂ້າງລຸ່ມນີ້:

## ທົບທວນ ບົດຮຽນທີ 7-12

ພຣະເຈົ້າໄດ້ຊົງເອີ້ນອັບຣາຮາມໃຫ້ອອກຈາກບ້ານເກີດຂອງເພິ່ນທີ່ເມືອງຮາລານ ຄືປະເທດອີຣັກໃນປະຈຸບັນແລະໃຫ້ເດີນທາງໄປຍັງແຜ່ນດິນການາອານ ຊຶ່ງກໍຄືປະເທດອິດສະຣາເອນໃນປະຈຸບັນນີ້. ພຣະເຈົ້າຊົງສັນຍາວ່າເຊື້ອສາຍຂອງອັບຣາຮາມຈະກາຍເປັນປະເທດໃຫຍ່ພຣະອົງຊົງບອກແກ່ອັບຣາຮາມວ່າຊື່ຂອງເພິ່ນຈະເປັນຊື່ທີ່ຍິ່ງໃຫຍ່ແລະພຣະອົງຈະຊົງປົກປ້ອງຄຸ້ມຄອງອັບຣາຮາມແລ້ວພຣະເຈົ້າກໍຊົງກະທຳພຣະສັນຍາທີ່ຍິ່ງໃຫຍ່ຂໍ້ໜຶ່ງກ່ຽວກັບ **"ພຣະຜູ້ຊ່ວຍໃຫ້ລອດພົ້ນ"** ທີ່ຈະສະເດັດມານັ້ນ ພຣະອົງຊົງບອກແກ່ອັບຣາຮາມວ່າ "ບັນດາຄອບຄົວທົ່ວແຜ່ນດິນໂລກຈະໄດ້ຮັບພຣະພອນຍ້ອນເຈົ້າ" ພຣະເຈົ້າຊົງສັນຍາວ່າ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຈະສະເດັດມານັ້ນຈະເປັນຄົນທີ່ເກີດໃນເຊື້ອສາຍຂອງອັບຣາຮາມ ຊຶ່ງຈະເປັນພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຈະຊ່ວຍບັນດາປະຊາຊາດທົ່ວໂລກ ໂດຍການປາບຊາຕານໃຫ້ປະລາໄຊໄປ.

ເຮົາໄດ້ຮຽນຮູ້ຈາກອັບຣາຮາມວ່າ ມະນຸດຈະສາມາດເປັນຄົນຊອບທຳຕໍ່ພຣະພັກພຣະເຈົ້າໄດ້ຢ່າງໃດ ພຣະເຈົ້າຊົງບໍລິສຸດແລະປາສະຈາກບາບ ສ່ວນມະນຸດນັ້ນເຕັມໄປດ້ວຍຄວາມບາບ ບໍ່ມີໃຜຈະໄດ້ຢູ່ກັບພຣະເຈົ້າເທິງສະຫວັນ ນອກຈາກວ່າພວກເຂົາຈະເປັນຄົນຊອບທຳ ອັບຣາຮາມໄດ້ຄົ້ນພົບສິ່ງທີ່ເຮົາແຕ່ລະຄົນຈຳເປັນຈະຕ້ອງຄົ້ນພົບດ້ວຍຕົວຂອງເຮົາເອງ ນັ້ນຄືຄຳຖາມທີ່ວ່າ "ຂ້ອຍຈະສາມາດເປັນຄົນຊອບທຳຕໍ່ພຣະພັກພຣະເຈົ້າໄດ້ຢ່າງໃດ? " ອັບຣາຮາມພົບວ່າຄຳຕອບນັ້ນງ່າຍຫຼາຍ.

*ປະຖົມມະການ 15:6 ອັບຣາຮາມເຊື່ອຟັງພຣະຜູ້ເປັນເຈົ້າແລະດ້ວຍຄວາມເຊື່ອນັ້ນພຣະອົງຈຶ່ງກໍເພິ່ນວ່າເປັນຄົນຊອບທຳ.*

ເຮົາໄດ້ຮຽນຮູ້ມາແລ້ວວ່າ ເມື່ອອັບຣາຮາມເຊື່ອພຣະເຈົ້າພຣະອົງກໍຊົງນັບວ່າອັບຣາຮາມເປັນຄົນຊອບທຳ ພຣະເຈົ້າໄດ້ຊົງສວມໃສ່ອາດາມແລະເອວາດ້ວຍໜັງສັດສັນໃດ ພຣະອົງກໍຊົງສວມໃສ່ອັບຣາຮາມດ້ວຍຄວາມຊອບທຳຂອງພຣະອົງສັນນັ້ນ.

ໂລດຊຶ່ງເປັນຫຼານຊາຍຂອງອັບຣາຮາມໄດ້ເດີນທາງອອກຈາກເມືອງຮາລານໄປຍັງແຜ່ນດິນການາອານພ້ອມກັບລຸງຂອງຕົນ, ໃນບໍ່ຊ້າຄົນທັງສອງກໍຮັ່ງມີຂຶ້ນ ແລະໄດ້ຕັດສິນໃຈທີ່ຈະແຍກຈາກກັນເສຍ ໂລດຕັດສິນໃຈຍ້າຍໄປທາງເມືອງໂຊໂດມຊຶ່ງເປັນເມືອງທີ່ຊົ່ວຮ້າຍແລະຊົ່ວຊາມຫຼາຍ ໂລດບໍ່ໄດ້ຄຳນຶງວ່າຈະໃຫ້ສິ່ງທີ່ດີທີ່ສຸດສຳລັບຄອບຄົວຂອງລາວ ແຕ່ຄຳນຶງວ່າຈະຫາເງິນຫຼາຍໆໄດ້ຢ່າງໃດເທົ່ານັ້ນ ປະຊາຊົນໃນເມືອງໂຊໂດມບໍ່ຕ້ອງການທີ່ຈະຮູ້ຈັກພຣະເຈົ້າຄົນເຫຼົ່ານີ້ຢາກຈະຫຼົງລະເລີງຢູ່ກັບສິ່ງຊົ່ວຮ້າຍທີ່ພວກເຂົາເຮັດຢູ່ເທົ່ານັ້ນ.

ພຣະເຈົ້າໄດ້ຕັດສິນພຣະໄທວ່າ ພຣະອົງບໍ່ສາມາດຈະອົດທົນກັບຄວາມບໍ່ເຊື່ອຟັງຂອງຊາວເມືອງໂຊໂດມໄດ້ອີກຕໍ່ໄປ ພຣະອົງຊົງອົດທົນກັບຄົນເຫຼົ່ານີ້ມາເປັນເວລາດົນແລະຊົງປາຖະໜາທີ່ຈະໃຫ້ພວກເຂົາກັບໃຈເສຍໃໝ່ ແຕ່ໃນທີ່ສຸດກໍເຖິງເວລາທີ່ພຣະອົງຈະເທການພິພາກສາລົງມາແລ້ວ ເວລານັ້ນໂລດອາໄສຢູ່ໃນເມືອງໂຊໂດມ ພຣະເຈົ້າໄດ້ສົ່ງເທວະດາ 2 ອົງໃຫ້ໄປຊ່ວຍຄອບຄົວຂອງ



## ຄຳຖາມບົດທີ 18

1. ເປັນຫຍັງພຣະເຢຊູຈຶ່ງຊົງມີສິດທິອຳນາດຍົກໂທດຄວາມຜິດບາບຂອງມະນຸດໄດ້?

   ......................................................................

2. ເປັນຫຍັງພຣະເຢຊູຈຶ່ງຊົງປິ່ນປົວຄົນເຈັບໄຂ້ໄດ້ປ່ວຍໄດ້?

   ......................................................................

3. ຕອນທີ່ພຣະເຢຊູຊົງເອີ້ນມັດທາຍນັ້ນລາວມີອາຊີບຫຍັງ?

   ......................................................................

4. ຄົນທີ່ເຊື່ອໝັ້ນວ່າຕົນເອງເປັນຄົນດີ ຄວາມດີຂອງພວກເຂົາຈະຊ່ວຍໃຫ້ພວກເຂົາໄປສະຫວັນໄດ້ຫຼືບໍ່?

   ......................................................................

5. ເຖິງວ່າພຣະເຢຊູຈະຊົງມີສາວົກແລະຜູ້ຕິດຕາມຫຼວງຫຼາຍ ພຣະອົງຊົງເລືອກໄວ້ເປັນຜູ້ຕິດຕາມຈັກຄົນ?

   ......................................................................

6. ຄົນທີ່ພຣະອົງຊົງເລືອກນັ້ນເປັນຄົນລ້ຳລວຍຮັ່ງມີແລະມີການສຶກສາດີແມ່ນຫຼືບໍ່?

   ......................................................................

7. ພຣະເຢຊູຊົງຮູ້ຫຼືບໍ່ວ່າຢູດາ ບໍ່ແມ່ນຜູ້ເຊື່ອທີ່ແທ້ຈິງ?

   ......................................................................

## ຄຳຖາມບົດທີ 17

1. ເປັນຫຍັງພວກວິນຍານຊົ່ວຈຶ່ງຢ້ານຢຳພຣະເຢຊູ?

   ......................................................................

2. ເລື່ອງຂອງຄົນພະຍາດຂີ້ທູດເຮັດໃຫ້ເຮົາໄດ້ຄິດເລື່ອງບາບວ່າຢ່າງໃດ?

   ......................................................................

3. ຖ້າເຮົາບັງເກີດໃໝ່ໃນດ້ານຈິດວິນຍານ ພຣະເຈົ້າຈະຊົງຍອມຮັບເຮົາເຂົ້າເປັນສ່ວນໃນຄອບຄົວຂອງພຣະອົງຫຼືບໍ່ ?

   ......................................................................

4. ເຮົາຈະບັງເກີດໃໝ່ໄດ້ຢ່າງໃດ?

   ......................................................................

5. ເລື່ອງລາວກ່ຽວກັບການທີ່ໂມເຊຍົກງູທອງສຳລິດຂຶ້ນໃນຖິ່ນທຸລະກັນດານເຕືອນໃຈເຮົາເລື່ອງການເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຂອງພຣະເຢຊູ ວ່າຢ່າງໃດ?

   ......................................................................



ໂລດໃຫ້ພົ້ນຈາກອັນຕະລາຍ ໂລດໄດ້ຮັບການຊ່ວຍໃຫ້ລອດພົ້ນຈາກການພິພາກສາຂອງພຣະເຈົ້າທີ່ມີຕໍ່ເມືອງໂຊໂດມ ເພາະໂລດເຊື່ອພຣະເຈົ້າ ພຣະເຈົ້າຊົງຊ່ວຍຜູ້ທີ່ເຊື່ອພຣະອົງໃຫ້ລອດພົ້ນຈາກການພິພາກສາຂອງພຣະອົງສະເໝີ.

ຫຼັງຈາກທີ່ພຣະເຈົ້າຊົງສັນຍາວ່າຈະປະທານລູກຊາຍແກ່ອັບຣາຮາມໄດ້ຜ່ານພົ້ນໄປເປັນເວລາ 25 ປີ ອັບຣາຮາມແລະພັນລະຍາກໍໄດ້ໃຫ້ກຳເນີດເດັກນ້ອຍເພດຊາຍຄົນໜຶ່ງແລະໄດ້ຕັ້ງຊື່ລູກນັ້ນວ່າ ອີຊາກ ຂະນະນັ້ນອັບຣາຮາມມີອາຍຸ 100 ປີ ສ່ວນນາງຊາຣາອາຍຸ 90 ປີແລ້ວ ແຕ່ບໍ່ມີອັນໃດເປັນໄປບໍ່ໄດ້ສຳລັບພຣະເຈົ້າ ອີຊາກເປັນຄວາມພູມໃຈແລະຄວາມປິຕິຍິນດີຂອງອັບຣາຮາມ ອີຊາກ ໄດ້ເຕີບໃຫຍ່ຂຶ້ນເປັນເດັກໜຸ່ມ. ຢູ່ມາມື້ໜຶ່ງພຣະເຈົ້າໄດ້ຕັດສິນພຣະໄທວ່າຈະຊົງທົດສອບອັບຣາຮາມ ເພື່ອຈະເບິ່ງວ່າອັບຣາຮາມຮັກພຣະເຈົ້າຫຼາຍກວ່າອີຊາກລູກຊາຍຂອງເພິ່ນຫຼືບໍ.

ພຣະເຈົ້າໄດ້ຕັດສັ່ງໃຫ້ອັບຣາຮາມເດີນທາງໄປກັບລູກຊາຍຂອງເພິ່ນເປັນເວລາ 3 ວັນແລະໃຫ້ຖວາຍລູກນັ້ນເປັນເຄື່ອງບູຊາເທິງພູເຂົາທີ່ພຣະອົງຊົງແຈງແກ່ເພິ່ນ ຊ່າງເປັນການທົດສອບທີ່ຍາກລຳບາກອັນໃດເຊັ່ນນີ້! ພຣະເຈົ້າໄດ້ຊົງສັນຍາວ່າຈະສົ່ງພຣະຜູ້ຊ່ວຍໃຫ້ລອດພົ້ນຜ່ານມາທາງເຊື້ອສາຍຂອງອີຊາກ ແລ້ວເຫດການດັ່ງກ່າວຈະເກີດຂຶ້ນໄດ້ຢ່າງໃດຖ້າອັບຣາຮາມຂ້າລູກຊາຍຂອງເພິ່ນເສຍແລ້ວ? ຢ່າງໃດກໍຕາມອັບຣາຮາມຍັງຮູ້ອີກວ່າພຣະເຈົ້າບໍ່ເຄີຍປ່ອຍປະໃນການທີ່ຈະກະທຳສິ່ງທີ່ພຣະອົງໄດ້ຊົງສັນຍາໄວ້ ເພາະສະນັ້ນອັບຣາຮາມເຊື່ອພຣະເຈົ້າ ໂດຍຮູ້ວ່າພຣະອົງຈະຕ້ອງຊຸບຊີວິດ

ໃຫ້ອີຊາກເປັນຄືນມາຈາກຄວາມຕາຍເພື່ອຈະກະທຳໃຫ້ສຳເລັດຕາມພຣະສັນຍາຂອງພຣະອົງ ອັບຣາຮາມສຳຜັດໄດ້ວ່າຈະມີບາງສິ່ງເກີດຂຶ້ນເພາະເພິ່ນບອກແກ່ພວກຄົນໃຊ້ຂອງເພິ່ນວ່າ ພວກເຂົາທັງສອງຈະກັບມານຳກັນ.

ໃນລະຫວ່າງທີ່ເດີນທາງໄປຍັງພູເຂົານັ້ນ ອີຊາກໄດ້ຖາມພໍ່ຂອງລາວວ່າ ເປັນຫຍັງເພິ່ນຈຶ່ງບໍ່ໄດ້ນຳແກະໂຕໜຶ່ງມາຖວາຍເປັນເຄື່ອງບູຊານຳ? ອັບຣາຮາມຕອບວ່າ ພຣະເຈົ້າຈະຊົງຈັດຕຽມລູກແກະໂຕໜຶ່ງສຳລັບເປັນເຄື່ອງບູຊາເອງ ແລະທີ່ພຣະອົງຈະຊົງກະທຳເຊັ່ນນີ້ກໍມີສາຍເຫດມາຈາກພຣະສັນຍາທັງຫຼາຍຂອງພຣະອົງທີ່ກ່ຽວຂ້ອງກັບພຣະຜູ້ຊ່ວຍໃຫ້ລອດພົ້ນແລະອີຊາກນັ້ນເອງ ອີຊາກເຕັມໃຈທີ່ຈະຢູ່ໃຕ້ອຳນາດຂອງພໍ່ແລະຍອມຖືກມັດຕິດກັບແທ່ນບູຊາ ບໍ່ມີທາງທີ່ອີຊາກຈະໜີລອດໄດ້ ອີຊາກຢູ່ໃນສະພາບທີ່ຊ່ວຍເຫຼືອຕົນເອງບໍ່ໄດ້ແລະບໍ່ສາມາດຈະຊ່ວຍຕົນເອງໃຫ້ລອດໄດ້ເລີຍ ພຣະເຈົ້າເຄີຍຊ່ວຍໂນອາແລະຄອບຄົວຂອງເພິ່ນໃຫ້ລອດພົ້ນຈາກນ້ຳຖ້ວມຄັ້ງໃຫຍ່, ພຣະເຈົ້າເຄີຍຊ່ວຍໂລດແລະລູກສາວທັງສອງຂອງເພິ່ນໃຫ້ລອດພົ້ນຈາກການທຳລາຍທີ່ເມືອງໂຊໂດມ ດັ່ງນັ້ນຈຶ່ງມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດຈະຊ່ວຍອີຊາກໃຫ້ລອດພົ້ນຈາກການຖືກຂ້າໄດ້ ໃນທຳນອງດຽວກັນມີພຽງແຕ່ພຣະຜູ້ຊ່ວຍໃຫ້ລອດພົ້ນເທົ່ານັ້ນທີ່ສາມາດຊ່ວຍເຮົາໃຫ້ລອດພົ້ນຈາກການລົງໂທດນິລັນດອນໃນບຶງໄຟໄດ້.

ພຣະເຈົ້າໄດ້ຊົງຊ່ວຍອີຊາກໃຫ້ລອດຊີວິດແລະອັບຣາຮາມຜ່ານການທົດສອບໄດ້! ອັບຣາຮາມພິສູດໃຫ້ເຫັນແລ້ວວ່າ ເພິ່ນຮັກ



## ຄຳຖາມບົດທີ 16

1. ຄຳວ່າ "ກັບໃຈເສຍໃໝ່" ໝາຍຄວາມວ່າຢ່າງໃດ?

   ..........................................................................

2. ໂຢຮັບຈັດຕຽມຜູ້ຄົນໄວ້ໃຫ້ພ້ອມຮັບສະເດັດໃຜ?

   ..........................................................................

3. ພວກເກັບພາສີຫຼືທຳມະຈານເປັນໃຜ?

   ..........................................................................

4. ພວກຟາຣີຊາຍເປັນໃຜ?

   ..........................................................................

5. ພວກຊະດູກາຍເປັນໃຜ?

   ..........................................................................

6. ຖ້າເຮົາຢາກຈະລອດພົ້ນຈາກໂທດຂອງຄວາມຜິດບາບທີ່ເຮົາເຮັດ ເຮົາຕ້ອງຮັບສິນບັບຕິດສະມາແມ່ນຫຼືບໍ່?

   ..........................................................................

7. ພຣະເຢຊູ ກັບ ຊາຕານໃຜເປັນໃຫຍ່ເໜືອໃຜ?

   ..........................................................................

## ຄຳຖາມບົດທີ 15

1. ເສກາຣິຢາຕັ້ງຊື່ລູກຊາຍຂອງຕົນວ່າແນວໃດ?

.....................................................................

2. ໂຢຣັນຄົນນີ້ເປັນໃຜ? ແລະຈະເຮັດຫຍັງ?

.....................................................................

3. ເປັນຫຍັງອົງພຣະຜູ້ຊ່ວຍໃຫ້ລອດພົ້ນຈຶ່ງຕ້ອງເກີດຈາກຍິງພົມມະຈາລີ?

.....................................................................

4. ພຣະເຢຊູຄືພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ພຣະເຈົ້າຊົງສັນຍາໄວ້ແມ່ນຫຼືບໍ່ ?

.....................................................................

5. ໃນໂລກນີ້ມີພຣະຜູ້ຊ່ວຍໃຫ້ລອດຢູ່ຫຼວງຫຼາຍ ຫຼືມີພຽງແຕ່ອົງດຽວ?

.....................................................................

6. ພຣະນາມ “ ອິມມານູເອນ “ ໝາຍຄວາມວ່າແນວໃດ?

.....................................................................

7. ພຣະເຢຊູບໍ່ເຄີຍຊົງເຮັດຜິດເລີຍ ເພາະອັນໃດ?

.....................................................................

8. ພຣະເຢຊູຄຣິດຊົງເປັນພຣະເຈົ້າແທ້ແລະເປັນພຣະເຈົ້າຜູ້ຊົງມີຊີວິດຢູ່ແມ່ນຫຼືບໍ່?

.....................................................................



ພຣະເຈົ້າຫຼາຍກວ່າຜູ້ອື່ນຫຼືສິ່ງອື່ນໃດໃນຊີວິດຂອງເພິ່ນ ພຣະເຈົ້າໄດ້ຊົງບັນດານໃຫ້ມີແກະຜູ້ໂຕໜຶ່ງຊຶ່ງເຂົາຂອງມັນຄາຕິດຢູ່ພຸ່ມໄມ້ ອັບຣາຮາມຈຶ່ງຖວາຍແກະຜູ້ໂຕນັ້ນເປັນເຄື່ອງບູຊາແກ່ພຣະເຈົ້າ ອີຊາກເປັນອິດສະຫຼະເພາະພຣະເຈົ້າໄດ້ຊົງຈັດຕຽມຕົວແທນເພື່ອຈະຕາຍແທນລາວ ແກະຜູ້ໂຕນັ້ນແຫຼະທີ່ເປັນຕົວແທນຂອງອີຊາກ.

ໃນທີ່ສຸດອີຊາກກໍແຕ່ງງານແລະມີລູກຊາຍ 2 ຄົນ ຊື່ ເອຊາວ ແລະຢາໂຄບ, ເອຊາວເປັນເໝືອນຢ່າງກາອິນ ເອຊາວວາງແບບແຜນຊີວິດຂອງລາວຕາມຄວາມຄິດຂອງຕົນເອງແລະເຮັດຕາມໃຈປາຖະໜາຂອງຕົນເອງ ເອຊາວບໍ່ສົນໃຈເລື່ອງຂອງພຣະເຈົ້າ, ຢ່າງໃດກໍຕາມ ຢາໂຄບເຊື່ອພຣະເຈົ້າເໝືອນອັບຣາຮາມແລະອີຊາກພໍ່ຂອງລາວ ຢູ່ມາມື້ໜຶ່ງອີຊາກໄດ້ສັ່ງໃຫ້ຢາໂຄບເດີນທາງໄປຍັງບ້ານເກີດຂອງແມ່ຕົນເອງແລະໃຫ້ເລືອກຄົນໃນຄອບຄົວຂອງແມ່ມາເປັນເມຍ.

ຄືນໜຶ່ງໃນລະຫວ່າງການເດີນທາງຂອງຢາໂຄບລາວໄດ້ນອນຫຼັບໄປທ່າມກາງພູເຂົາ ພຣະເຈົ້າຊົງບັນດານໃຫ້ຢາໂຄບຝັນວ່າໄດ້ເຫັນຂັ້ນໄດທີ່ຢັ່ງຈາກແຜ່ນດິນໂລກໄປສູ່ສະຫວັນ ໂດຍໃນຄວາມຝັນນັ້ນພຣະເຈົ້າໄດ້ສະແດງໃຫ້ຢາໂຄບຮູ້ວ່າ “ພຣະຜູ້ຊ່ວຍໃຫ້ລອດພົ້ນ” ທີ່ຈະສະເດັດມານັ້ນຈະຊົງເຊື່ອມຊ່ອງວ່າງລະຫວ່າງມະນຸດກັບພຣະເຈົ້າ, ມີພຽງພຣະເຈົ້າຜູ້ດຽວເທົ່ານັ້ນທີ່ສາມາດກຳນົດວິທີທີ່ມະນຸດຈະເປັນທີ່ຍອມຮັບຂອງພຣະອົງໄດ້ ເມື່ອອາດາມແລະເອວາບໍ່ເຊື່ອຟັງພຣະເຈົ້າ “ຂັ້ນໄດ” ທີ່ນຳໄປເຖິງພຣະເຈົ້າກໍຖືກເອົາອອກໄປເສຍ ພຣະເຈົ້າໄດ້ຊົງສັນຍາວ່າຈະສົ່ງ “ພຣະຜູ້ຊ່ວຍໃຫ້

ລອດພົ້ນ” ໃຫ້ສະເດັດມາຊຶ່ງພຣະອົງຈະເປັນ “ຂັ້ນໄດ” ນັ້ນ ເພື່ອມະນຸດຈະສາມາດເປັນທີ່ຍອມຮັບຂອງພຣະເຈົ້າໄດ້.

ຢາໂຄບໄດ້ເດີນທາງໄປຈົນເຖິງຄອບຄົວຂອງແມ່ລາວ ໄດ້ແຕ່ງງານແລະມີລູກຫຼາຍຄົນ ແລ້ວຢາໂຄບກໍກັບໄປຫາອີຊາກພໍ່ຂອງເພິ່ນ ໂຢເຊບເປັນລູກຊາຍຄົນທີ່ຢາໂຄບຮັກທີ່ສຸດ ຊຶ່ງໄດ້ເຮັດໃຫ້ອ້າຍທັງຫຼາຍຮູ້ສຶກກຽດຊັງໂຢເຊບເປັນຢ່າງຍິ່ງ ຢູ່ມາມື້ໜຶ່ງພວກອ້າຍໄດ້ຂາຍໂຢເຊບໄປເປັນຂ້າທາດຂອງກຸ່ມພໍ່ຄ້າທີ່ກຳລັງເດີນທາງໄປຍັງປະເທດອີຢີບ, ບັນດາອ້າຍເຫຼົ່ານັ້ນໄດ້ເຮັດໃຫ້ພໍ່ເຂົ້າໃຈໄປວ່າສັດປ່າໂຕໜຶ່ງໄດ້ຂ້າໂຢເຊບຕາຍແລ້ວ.

ໂຢເຊບໄດ້ຖືກຂາຍໄປເປັນຂ້າທາດໃນປະເທດອີຢີບ ແຕ່ພຣະເຈົ້າຊົງມີແຜນການພິເສດສຳລັບຊີວິດຂອງໂຢເຊບ ສຸດທ້າຍກໍລົງເອີຍດ້ວຍການທີ່ໂຢເຊບໄດ້ເປັນເຖິງຜູ້ສຳເລັດລາຊະການ, ເບິ່ງແຍງທົ່ວປະເທດອີຢີບ, ໃນລະຫວ່າງທີ່ເກີດການອຶດຫິວອາຫານຢ່າງຮຸນແຮງນັ້ນກະສັດຟາໂຣໄດ້ຊົງອະນຸຍາດໃຫ້ຄອບຄົວຂອງໂຢເຊບຈາກແຜ່ນດິນການາອານເຂົ້າມາອາໄສຢູ່ໃນເຂດແດນສ່ວນທີ່ດີທີ່ສຸດຂອງປະເທດ ອີຢີບ ຊຶ່ງເປັນສະຖານທີ່ທີ່ພວກເຂົາໄດ້ອາໄສຢູ່ເລື້ອຍໆມາເປັນເວລາດົນເຖິງ 400 ປີ ຈົນກາຍເປັນຊົນຊາດໃຫຍ່ຊົນຊາດໜຶ່ງ.

ປະມານ 350 ປີ ຫຼັງຈາກທີ່ໂຢເຊບໄດ້ເສຍຊີວິດໄປແລ້ວກະສັດຂອງປະເທດອີຢີບ ໄດ້ຕັດສິນພະໄທທີ່ຈະບັງຄັບຊາວຍິວ (ອີກຊື່ໜຶ່ງຂອງຊົນຊາດອິດສະຣາເອນ)ໃຫ້ມາເປັນຂ້າທາດໃຊ້ງານ.



## ຄຳຖາມບົດທີ 14

1. ເມື່ອໂຢຊວຍຕາຍໄປແລ້ວ ຄົນອິດສະຣາເອນເປັນຢ່າງໃດ?

..............................................................................

2. ໃຜຫຼອກລວງມະນຸດໃຫ້ນະມັດສະການຮູບເຄົາລົບແລະສິ່ງຕ່າງໆ ທີ່ສ້າງຂຶ້ນຈາກມືມະນຸດ?

..............................................................................

3. ພຣະເຈົ້າຊົງລົງໂທດຄົນອິດສະຣາເອນທີ່ກາບໄຫວ້ຮູບເຄົາລົບຢ່າງໃດ?

..............................................................................

4. ພຣະເຈົ້າຊົງເຮັດຢ່າງໃດເມື່ອຄົນອິດສະຣາເອນສຳນຶກຜິດບາບແລະທູນຂໍໃຫ້ຊົງຊ່ວຍກູ້ພວກເຂົາໃຫ້ພົ້ນຈາກມືຂອງສັດຕູ?

..............................................................................

5. ເກີດຫຍັງຂຶ້ນຫຼັງຈາກກະສັດຊາໂລໂມນສິ້ນພະຊົນ?

..............................................................................

6. ພຣະເຈົ້າຊົງຍິນຍອມໃຫ້ເກີດຫຍັງຂຶ້ນກັບຊົນຊາດສິບເຜົ່າທາງຝ່າຍເໜືອ?

..............................................................................

7. ພຣະເຈົ້າຊົງຍິນຍອມໃຫ້ເກີດຫຍັງຂຶ້ນກັບຊົນສອງເຜົ່າທາງຝ່າຍໃຕ້?

..............................................................................

## ຄຳຖາມບົດທີ 13

1. ໃຜຄືຊາຍສອງຄົນທີ່ກັບມາລາຍງານໂມເຊວ່າແຜ່ນດິນທີ່ພຣະເຈົ້າໃຫ້ແກ່ຄົນອິດສະຣາເອນນັ້ນເປັນແຜ່ນດິນທີ່ດີ?

    ......................................................................

    ......................................................................

2. ອັນໃດຄືສອງສິ່ງທີ່ຄົນສິບຄົນເບິ່ງເຫັນໃນແຜ່ນດິນທີ່ພຣະເຈົ້າໃຫ້ ແລ້ວເກີດຄວາມຢ້ານ?

    ......................................................................

    ......................................................................

3. ຊົນຊາດອິດສະຣາເອນເຊື່ອຟັງໃຜ ຄົນສິບຄົນ ຫຼືໂຢຊວຍກັບຄາເລບ?

    ......................................................................

    ......................................................................

4. ການຕັດສິນໃຈເຊັ່ນນັ້ນມີຜົນຕໍ່ພວກທ່ານຢ່າງໃດ?

    ......................................................................

    ......................................................................

5. ຫຼັງຈາກໂມເຊຕາຍແລ້ວໃຜໄດ້ເປັນຜູ້ນຳຂອງອິດສະຣາເອນ?

    ......................................................................

    ......................................................................



ຂໍໃຫ້ລະນຶກເຖິງພຣະສັນຍາຂອງພຣະເຈົ້າທີ່ມີຕໍ່ອັບຣາຮາມແລະເຊື້ອສາຍຂອງເພິ່ນວ່າ “ເຮົາຈະອວຍພອນຜູ້ທີ່ອວຍພອນເຈົ້າ ແລະສາບແຊ່ງຜູ້ທີ່ສາບແຊ່ງເຈົ້າ” ພຣະເຈົ້າຈະຊົງພິພາກສາປັບໂທດຊົນຊາດ ອີຢິບແລະຊົງປົດປ່ອຍຊົນຊາດຂອງພຣະອົງໃຫ້ໄດ້ຮັບອິດສະຫຼະພາຍໃນເວລາດຽວກັນ ພຣະເຈົ້າໄດ້ຊົງເລືອກໂມເຊໃຫ້ນຳຊົນຊາດຂອງພຣະອົງກັບໄປຍັງແຜ່ນດິນທີ່ພຣະອົງຊົງສັນຍາໄວ້ແກ່ອັບຣາຮາມ.

ກະສັດຟາໂຣບໍ່ເຊື່ອພຣະເຈົ້າແລະປະຕິເສດທີ່ຈະປົດປ່ອຍຊົນຊາດອິສະຣາເອນໃຫ້ເປັນອິດສະຫຼະ ພຣະເຈົ້າຈຶ່ງຊົງບັນດານໃຫ້ເກີດໄພພິບັດຫຼາຍປະການເພື່ອສະແດງໃຫ້ກະສັດຟາໂຣຮູ້ວ່າ ພຣະອົງເປັນພຣະເຈົ້າທ່ຽງແທ້ທີ່ຊົງພຣະຊົນຢູ່ ຢ່າງໃດກໍຕາມກະສັດຟາໂຣຍັງຄົງປະຕິເສດທີ່ຈະປ່ອຍຊົນຊາດອິດສາະຣາເອນໃຫ້ໄດ້ຮັບອິດສະຫຼະພາບ ພຣະເຈົ້າຊົງຮູ້ວ່າຫຼັງຈາກໄພພິບັດເທື່ອສຸດທ້າຍໄດ້ເກີດຂຶ້ນແລ້ວກະສັດຟາໂຣກໍຈະປົດປ່ອຍຊົນຊາດອິດສາລະເອນໃຫ້ເປັນອິດສະຫຼະໃນທີ່ສຸດ ພຣະເຈົ້າໄດ້ກ່າວບອກແກ່ໂມເຊວ່າ ໄພພິບັດປະການສຸດທ້າຍຈະນຳຄວາມຕາຍມາສູ່ລູກຊາຍຫົວປີທຸກຄົນແຕ່ພຣະອົງໄດ້ຊົງຈັດຕຽມວິທີທີ່ຈະໃຫ້ຊົນຊາດເຫຼົ່ານີ້ໄດ້ຮັບການປົກປ້ອງຄຸ້ມຄອງໃຫ້ພົ້ນຈາກໄພພິບັດດັ່ງກ່າວ ທຸກຄົນທີ່ປະຕິບັດຕາມຄຳສັ່ງເຫຼົ່ານີ້ຢ່າງເຄັ່ງຄັດກໍຈະໄດ້ຮັບການຄຸ້ມຄອງຈາກພຣະອົງ.

ພວກເຂົາຈະຕ້ອງເລືອກລູກແກະຫຼືແບ້ທີ່ປາສະຈາກຕຳນິເພື່ອນຳໄປບູຊາພຣະເຈົ້າ ສັດໂຕນັ້ນຈະຕ້ອງບໍ່ເຈັບປ່ວຍຫຼືພິການ

ພຣະເຈົ້າຊົງສົມບູນພ້ອມທຸກຢ່າງ ດັ່ງນັ້ນພຣະອົງຈຶ່ງຊົງປະສົງເຄື່ອງບູຊາທີ່ສົມບູນພ້ອມທຸກຢ່າງດ້ວຍ ພວກເຂົາຈະຕ້ອງຂ້າສັດໂຕນັ້ນໂດຍໃຫ້ເລືອດຂອງມັນໄຫຼລົງໄປໃນອ່າງ ພວກເຂົາຈະຕ້ອງເອົາເລືອດໄປທາທີ່ເສົາປະຕູຂອງເຮືອນ ພວກເຂົາຈະປີ້ງແລະກິນສັດໂຕນັ້ນ ພຣະເຈົ້າຊົງສັນຍາວ່າເມື່ອພຣະອົງທອດພຣະເນດເຫັນເລືອດທາໄວ້ທີ່ເຮືອນຫຼັງໃດ ພຣະອົງກໍຈະສະເດັດຜ່ານເຮືອນຫຼັງນັ້ນໄປໂດຍບໍ່ປ່ອຍໃຫ້ໄພພິບັດເຂົ້າໄປຂ້າລູກຊາຍຫົວປີທີ່ຢູ່ໃນເຮືອນຫຼັງນັ້ນ ເຫດການນີ້ໄດ້ສະແດງໃຫ້ເຫັນພາບວ່າ“ພະຜູ້ຊ່ວຍໃຫ້ລອດພົ້ນ” ທີ່ຈະສະເດັດມານັ້ນຈະຊົງຊ່ວຍມະນຸດໃຫ້ລອດພົ້ນຈາກການພິພາກສາສໍາລັບຄວາມບາບແລະການຖືກແຍກຈາກພຣະເຈົ້າໄດ້ຢ່າງໃດ.

ຄືນນັ້ນເອງລູກຊາຍຫົວປີຂອງກະສັດຟາໂຣໄດ້ສິ້ນພະຊົນເພາະໄພພິບັດເທື່ອນີ້ ທີ່ຈິງແລ້ວພຣະຄໍາພີບອກເຮົາວ່າ ບໍ່ມີເຮືອນຫຼັງໃດໃນປະເທດອີຢິບທີ່ບໍ່ມີຄົນຕາຍ ໃນທີ່ສຸດກະສັດຟາໂຣກໍອະນຸຍາດໃຫ້ຊົນຊາດອິດສະຣາເອນເດີນທາງອອກໄປໄດ້ ກະສັດຟາໂຣກ່າວບອກແກ່ໂມເຊໃຫ້ນໍາຊົນຊາດອິສະຣາເອນອອກຈາກປະເທດ ອີຢິບກັບໄປຍັງການາອານຊຶ່ງເປັນແຜ່ນດິນທີ່ພຣະເຈົ້າຊົງສັນຍາໄວ້ແກ່ອັບຣາຮາມ.

ໃນລະຫວ່າງການເດີນທາງໄປຍັງແຜ່ນດິນການາອານ ພຣະເຈົ້າໄດ້ນໍາພວກອິດສະຣາເອນໄປຍັງພູເຂົາຊີນາຍ ພຣະເຈົ້າຊົງປາຖະໜາທີ່ຈະໃຫ້ຊົນຊາດອິດສະຣາເອນທັງຫຼາຍສໍານຶກວ່າ ພຣະອົງຊົງບໍລິສຸດຫຼາຍພຽງໃດແລະພວກເຂົານັ້ນເປັນຄົນທີ່ມີຄວາມບາບ



## ຄໍາຊີ້ແຈງ

ເມື່ອອ່ານບົດຮຽນຕ່າງໆແລະຕອບຄໍາຖາມໃນໜ້າຖັດໄປຮຽບຮ້ອຍແລ້ວໃຫ້ທ່ານຄ່ອຍໆ ຈີກໜ້າທີ່ມີຄໍາຖາມຄໍາຕອບເຫຼົ່ານັ້ນໃສ່ຊອງຕິດສະແຕມສົ່ງມາຕາມທີ່ຢູ່ທີ່ແຈ້ງໄວ້ ສ່ວນໜັງສືເຫຼັ້ມທີ່3ນີ້ເຮົາຂໍມອບເປັນຂອງຂວັນແກ່ທ່ານ ແລະເຮົາຈະສົ່ງເຫຼັ້ມທີ 4 ໄປໃຫ້ພາຍໃນ 2-3 ອາທິດໜ້າ

ທຸກຄໍາຕອບຢູ່ໃນໜັງສືຮຽນ ອ່ານແລະເອົາຄໍາຕອບອອກມາຈາກໜັງສືຮຽນ

ທີ່ກໍ່ໃຫ້ເກີດຄວາມພໍໃຈຢ່າງບໍລິບູນ ພຣະເຢຊູຈະຊົງຕອບສະໜອງ ໃນສິ່ງທີ່ຈຳເປັນຢ່າງຍິ່ງໃຫ້ແກ່ເຮົາເພາະມີພຽງພຣະອົງເທົ່ານັ້ນທີ່ ສາມາດນຳເຮົາກັບໄປມີສຳພັນກັບພຣະເຈົ້າໄດ້ ພຣະອົງສະເດັດ ມາເພື່ອຈະປະທານຊີວິດໃໝ່ທີ່ເປັນນິລັນດອນແລະເປັນຊີວິດທີ່ ສາມາດຕອບສະໜອງຄວາມຕ້ອງການໄດ້ຢ່າງຄົບບໍລິບູນ.

ພຣະເຢຊູຄຣິດຊົງເປັນຜູ້ດຽວເທົ່ານັ້ນທີ່ຄົນບາບຕ້ອງການ ເພື່ອຈະເຮັດໃຫ້ພວກເຂົາສາມາດເປັນທີ່ຍອມຮັບຂອງພຣະເຈົ້າ ແລະເພື່ອພຣະເຈົ້າຈະຊົງປະທານຊີວິດນິລັນດອນແກ່ພວກເຂົາໄດ້ ທຸກຄົນທີ່ໄວ້ວາງໃຈໃນພຣະເຢຊູໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ ຂອງພວກເຂົາແລ້ວກໍ່ບໍ່ຈຳເປັນທີ່ຈະຕ້ອງໄວ້ວາງໃຈໃນຄວາມດີ ຂອງຕົນເອງຫຼືໄວ້ວາງໃຈໃນຜູ້ໜຶ່ງຜູ້ໃດຫຼືສິ່ງໜຶ່ງສິ່ງໃດອີກເລີຍ?

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 18 ໃນໜ້າ 81 *



ຫຼວງຫຼາຍພຽງໃດ ຄົນເຫຼົ່ານີ້ເຕັມໄປດ້ວຍຄວາມຈອງຫອງແລະຍັງ ຄິດວ່າພວກເຂົາສາມາດຈະໄດ້ຮັບການຍອມຮັບຈາກພຣະເຈົ້າ ໂດຍອາໄສຄວາມພະຍາຍາມຂອງຕົນເອງ. ດັ່ງນັ້ນພຣະເຈົ້າຈຶ່ງຊົງ ເຮັດພັນທະສັນຍາ (ພຣະບັນຍັດຂອງພຣະເຈົ້າ) ກັບຊົນຊາດອິດສະ ຣາເອນ ພຣະເຈົ້າຊົງປາຖະໜາທີ່ຈະສອນພວກເຂົາທັງຫຼາຍວ່າ ພວກເຂົາບໍ່ສາມາດຈະໄດ້ຮັບການຍອມຮັບຈາກພຣະເຈົ້າໂດຍ ຄວາມພະຍາຍາມຂອງຕົນເອງ ແລະໃຫ້ພວກເຂົາໄດ້ຄິດເຖິງຄວາມ ບາບຂອງພວກເຂົາໂດຍການກະທຳຜິດທີ່ຊ້ຳໆຂອງຕົນເອງ ພຣະ ອົງຍັງຊົງປາຖະໜາທີ່ຈະສະແດງໃຫ້ພວກເຂົາເຫັນວ່າຄວາມຫວັງ ພຽງຢ່າງດຽວຂອງພວກເຂົານັ້ນມາໂດຍທາງ "ພຣະຜູ້ຊ່ວຍໃຫ້ລອດ ພົ້ນ" ທີ່ຈະສະເດັດມານັ້ນ.

ພຣະບັນຍັດຂອງພຣະເຈົ້າເປັນເໝືອນກັບແວ່ນແຍງ, ແວ່ນ ແຍງທີ່ແທ້ຈິງນັ້ນສະແດງໃຫ້ເຮົາເຫັນຮູບລັກສະນະພາຍນອກຂອງ ເຮົາເປັນຢ່າງໃດ ແຕ່ກົດບັນຍັດຂອງພຣະເຈົ້ານັ້ນສະແດງໃຫ້ເຮົາ ເຫັນຄວາມຊົ່ວຮ້າຍທີ່ຢູ່ພາຍໃນຈິດໃຈຂອງເຮົາ ເມື່ອທ່ານເບິ່ງແວ່ນ ແລະໄດ້ເຫັນສິ່ງເປິະເປື້ອນຢູ່ເທິງໃບໜ້າຂອງທ່ານ, ທ່ານກໍຈະຕ້ອງ ຢາກຊຳລະລ້າງໃຫ້ສະອາດ ໃນທຳນອງດຽວກັນເມື່ອກົດບັນຍັດຂອງ ພຣະເຈົ້າສະແດງໃຫ້ທ່ານເຫັນ "ສິ່ງເປິະເປື້ອນ" ທີ່ຢູ່ພາຍໃນຈິດໃຈ ນັ້ນ ທ່ານກໍຄວນປາຖະໜາທີ່ຈະໃຫ້ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ຊຳລະທ່ານໃຫ້ສະອາດ ແວ່ນແຍງສະທ້ອນໃຫ້ເຫັນສິ່ງເປິະເປື້ອນ ສັນໃດ ພຣະບັນຍັດຂອງພຣະເຈົ້າກໍເຮັດໃຫ້ເຮົາຄິດເຖິງຄວາມບາບ ທີ່ຢູ່ໃນຈິດໃຈຂອງເຮົາສັນນັ້ນ.

ຄົນສ່ວນໃຫຍ່ຍອມຮັບວ່າ ພວກເຂົາເປັນຄົນບາບ ຢ່າງໃດກໍຕາມມີຄົນພຽງໜ້ອຍດຽວເທົ່ານັ້ນທີ່ຍອມຮັບວ່າຕົນເອງເປັນຄົນບາບທີ່ຊ່ວຍເຫຼືອຕົນເອງບໍ່ໄດ້ ແລະນີ້ເປັນຂໍ້ແຕກຕ່າງທີ່ເຫັນໄດ້ຢ່າງຊັດເຈນ ຄົນເຫຼົ່ານັ້ນທີ່ພຽງແຕ່ກ່າວວ່າຕົນເອງເປັນຄົນບາບເຊື່ອວ່າພວກເຂົາສາມາດຈະເຮັດບາງສິ່ງທີ່ຈະເຮັດໃຫ້ຕົນເອງເປັນທີ່ຍອມຮັບຂອງພຣະເຈົ້າໄດ້ ຄວາມເຊື່ອທີ່ວ່າ ຄວາມດີຂອງຜູ້ໜຶ່ງຜູ້ໃດອາດຈະມີນໍ້າໜັກຫຼາຍກວ່າຄວາມຊົ່ວຂອງພວກເຂົາແລະເຮັດໃຫ້ພວກເຂົາໄດ້ຮັບການຍອມຮັບຈາກພຣະເຈົ້າໄດ້ນັ້ນ ຄວາມຄິດນີ້ເປັນຄວາມຄິດທີ່ຜິດ ແລະເປັນການລໍ້ລວງທີ່ມາຈາກຊາຕານ ການເຮັດດີເປັນສິ່ງທີ່ໜ້າຊື່ນຊົມ ແຕ່ການເຮັດຄວາມດີເຫຼົ່ານີ້ກໍບໍ່ມີຈັກສິ່ງທີ່ຈະສາມາດຟື້ນຟູຄວາມສຳພັນລະຫວ່າງເຮົາກັບພຣະເຈົ້າທີ່ຂາດສະບັ້ນລົງໄດ້ ຄົນບາບທີ່ຊ່ວຍເຫຼືອຕົນເອງບໍ່ໄດ້ນັ້ນຄວນຈະຮູ້ວ່າບໍ່ມີສິ່ງໃດເລີຍທີ່ພວກເຂົາສາມາດຈະເຮັດເພື່ອໃຫ້ຕົນເອງເປັນທີ່ຍອມຮັບຂອງພຣະເຈົ້າໄດ້ ພຣະເຈົ້າຊົງປາຖະໜາໃຫ້ເຮົາຍອມຮັບວ່າ ເຮົາທັງຫຼາຍໄດ້ເຮັດຜິດພຣະບັນຍັດຂອງພຣະອົງແລະເຮົາບໍ່ສາມາດຈະຊ່ວຍຕົວເຮົາເອງໃຫ້ລອດພົ້ນໄດ້ ພຣະອົງຊົງປາຖະໜາໃຫ້ເຮົາເບິ່ງໄປຍັງ “ພຣະຜູ້ຊ່ວຍໃຫ້ລອດພົ້ນ” ຊຶ່ງເປັນຜູ້ດຽວເທົ່ານັ້ນທີ່ສາມາດຈະເຮັດໃຫ້ເຮົາເປັນຄົນຊອບທຳ ແລະເປັນທີ່ຍອມຮັບຂອງພຣະເຈົ້າໄດ້.



ຫວັນແລະນໍ້າຈາກຫີນສີລາແກ່ຊົນຊາດອິດສະຣາເອນທັງຫຼາຍເພື່ອຊ່ວຍພວກເຂົາໃຫ້ລອດພົ້ນຈາກຄວາມຕາຍຝ່າຍຮ່າງກາຍໃນຖິ່ນທຸລະກັນດານ, ພຣະເຈົ້າໄດ້ສົ່ງພຣະເຢຊູຈາກສະຫວັນໃຫ້ເຂົ້າມາໃນໂລກເພື່ອຊ່ວຍຄົນບາບທັງຫຼາຍໃຫ້ລອດພົ້ນຈາກຄວາມຕາຍນິລັນດອນ ຖ້າຄົນໜຶ່ງຄົນໃດປະຕິເສດທີ່ຈະກິນອາຫານ ພວກເຂົາກໍຈະຕາຍຝ່າຍຮ່າງກາຍ ແລະຖ້າຄົນໜຶ່ງຄົນໃດປະຕິເສດທີ່ຈະໄວ້ວາງໃຈໃນພຣະເຢຊູໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຂອງພວກເຂົາ ພວກເຂົາກໍຍັງຄົງຖືກແຍກອອກຈາກພຣະເຈົ້າແລະຈະຕ້ອງຢູ່ໃນບຶງໄຟຕະຫຼອດໄປເປັນນິດ.

ທ່ານຈື່ໄດ້ບໍວ່າ ເມື່ອອາດາມແລະເອວາກະທຳບາບ ພວກເຂົາກໍຖືກແຍກອອກຈາກພຣະເຈົ້າທັນທີ ເຖິງແມ່ນວ່າທັງສອງຄົນຈະຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າພ້ອມດ້ວຍຄວາມສາມາດທີ່ຈະຮູ້ຈັກຮັກແລະເຊື່ອຟັງພຣະອົງ ແຕ່ພວກເຂົາກໍບໍ່ສາມາດຈະຕອບສະໜອງຕໍ່ພຣະເຈົ້າໃນລັກສະນະນີ້ໄດ້ອີກຕໍ່ໄປ ຄົນທັງສອງຕ້ອງຕົກຢູ່ໃຕ້ການຄວບຄຸມຂອງຊາຕານ ພວກເຂົາບໍ່ສາມາດຈະມີຄວາມສາມັກຄີທຳກັບພຣະເຈົ້າໄດ້ອີກຕໍ່ໄປ ແລະໃນຖານະທີ່ເຮົາທັງຫຼາຍເປັນເຊື້ອສາຍຂອງອາດາມເຮົາຈຶ່ງເກີດມາເປັນຄົນບາບແລະຖືກແຍກອອກຈາກພຣະເຈົ້າ

ອາຫານພຽງຄາບໜຶ່ງຄົງຈະເຮັດໃຫ້ທ່ານຮູ້ສຶກພໍໃຈກັບຄວາມອີ່ມໄດ້ບໍ່ຈັກຊົ່ວໂມງ ແຕ່ອີກບໍ່ດົນເຈົ້າກໍຈະຢາກອີກ ຄົນເຫຼົ່ານັ້ນໄດ້ກິນສິ່ງທີ່ພຣະເຢຊູປະທານແກ່ພວກເຂົາ ແຕ່ຄາບຕໍ່ມາພວກເຂົາກໍຕ້ອງການອາຫານອີກ ພຣະເຢຊູກ່າວວ່າຜູ້ທີ່ໄວ້ວາງໃຈໃນພຣະອົງຈະໄດ້ຊີວິດນິລັນດອນ ພວກເຂົາທັງຫຼາຍຈະພົບຊີວິດໃໝ່

ພຣະເຢຊູຊົງຮູ້ແລ້ວວ່າພຣະອົງຈະຊົງກະທຳປະການໃດ ພຣະອົງກ່າວຖາມຄຳຖາມນີ້ແກ່ຟີລິບຊຶ່ງເປັນຄົນໜຶ່ງໃນສາວົກ 12 ຄົນເພື່ອຈະທົດສອບລາວ ຟີລິບໄດ້ເຫັນພຣະເຢຊູກະທຳການອັດສະຈັນມາຫຼວງຫຼາຍ ແຕ່ລາວກໍຍັງບໍ່ໄວ້ວາງໃຈວ່າພຣະເຢຊູຈະສາມາດລ້ຽງຄົນເຫຼົ່ານີ້ທັງໝົດໄດ້ ສາວົກອີກຄົນໜຶ່ງ ເອົາເຂົ້າຈີ່ກ້ອນນ້ອຍໆ 5 ກ້ອນກັບປາ 2 ໂຕຊຶ່ງເດັກໜຸ່ມຄົນໜຶ່ງໄດ້ມອບແກ່ພຣະເຢຊູມາໃຫ້ພຣະອົງ ພຣະເຢຊູຈຶ່ງຊົງຫັກເຂົ້າຈີ່ແລະປາ ແລ້ວອາຫານເຫຼົ່ານີ້ກໍທະວີຄູນຂຶ້ນໃນພຣະຫັດຂອງພຣະອົງ ພຣະເຢຊູຊົງລ້ຽງຜູ້ຊາຍ 5,000 ຄົນໂດຍຍັງບໍ່ນັບລວມຜູ້ຍິງແລະເດັກນ້ອຍ ພຣະເຢຊູສາມາດຈະກະທຳສິ່ງນີ້ໄດ້ເພາະພຣະອົງຊົງເປັນພຣະເຈົ້າຜູ້ຊົງລິດທານຸພາບນັ້ນເອງ.

ປະຊາຊົນຕ້ອງການໃຫ້ພຣະເຢຊູເປັນກະສັດຂອງພວກເຂົາ ເພື່ອວ່າພຣະອົງຈະຊົງປິ່ນປົວຮັກສາຄວາມເຈັບປ່ວຍຂອງພວກເຂົາໃຫ້ຫາຍດີ, ຊົງປະທານອາຫານແກ່ພວກເຂົາແລະຊ່ວຍພວກເຂົາໃຫ້ຫຼຸດພົ້ນຈາກການຄວບຄຸມຂອງພວກໂຣມັນ. ໃນຕອນກາງຄືນພຣະເຢຊູແລະສາວົກຂອງພຣະອົງທັງ 12 ຄົນໄດ້ແລ່ນເຮືອຂ້າມທະເລສາບ,ວັນຕໍ່ມາປະຊາຊົນເຫຼົ່ານີ້ມີຫຼາຍຄົນໄດ້ແລ່ນເຮືອຂ້າມທະເລສາບໄປຫາພຣະອົງ.

ຄົນເຫຼົ່ານີ້ຍັງຄົງບໍ່ເຊື່ອພຣະເຢຊູ ພວກເຂົາທັງຫຼາຍຕ້ອງການຈະເຫັນການອັດສະຈັນອີກ ພວກເຂົາເຝົ້າເບິ່ງເຫດການອັນຍິ່ງໃຫຍ່ທັງຫຼາຍທີ່ພຣະອົງຊົງກະທຳແທນທີ່ຈະສົນໃຈຟັງຄວາມຈິງທີ່ພຣະອົງຊົງເທດສະໜາ ພຣະເຈົ້າໄດ້ຊົງປະທານມານາຈາກສະ



# ບົດທີ 13

# ທຳເຕັນສັກສິດ ແລະຊ່ວງເວລາ 40 ປີ ໃນຖິ່ນທຸລະກັນດານ

ໃນບົດຮຽນທີ່ແລ້ວ ເຮົາໄດ້ສຶກສາວ່າ ພຣະເຈົ້າຊົງປະທານພຣະບັນຍັດຂອງພຣະອົງ (ພຣະບັນຍັດ 10 ປະການ) ດ້ວຍວິທີການໃດ? ນອກຈາກນີ້ພຣະເຈົ້າຍັງຊົງເຫັນຊອບກັບຊົນຊາດອິດສະຣາເອນວ່າຖ້າພວກເຂົາເຊື່ອຟັງພຣະບັນຍັດຂອງພຣະອົງ ພຣະອົງກໍຈະຊົງສະຖິດຢູ່ກັບພວກເຂົາທັງຫຼາຍ ປົກປ້ອງຄຸ້ມຄອງພວກເຂົາແລະຊົງປະທານທຸກຢ່າງທີ່ພວກເຂົາຕ້ອງການ ແຕ່ຖ້າພວກເຂົາບໍ່ເຊື່ອຟັງພຣະບັນຍັດຂອງພຣະອົງ ພວກເຂົາຈະຕ້ອງຖືກລົງໂທດກໍຄື ຄວາມຕາຍນັ້ນເອງ. ພຣະເຈົ້າຊົງຮູ້ວ່າ ພວກອິດສະຣາເອນເປັນຄົນບາບທີ່ບໍ່ສາມາດເຊື່ອຟັງກົດບັນຍັດຂອງພຣະອົງໄດ້ຕະຫຼອດເວລາ ພຣະເຈົ້າຊົງຮູ້ວ່າພວກເຂົາທັງຫຼາຍຈະບໍ່ເຊື່ອຟັງພຣະອົງແລະພຣະອົງຈະຕ້ອງລົງໂທດພວກເຂົາ, ຢ່າງໃດກໍຕາມພຣະເຈົ້າກໍຍັງຄົງຮັກຊົນຊາດອິດສະຣາເອນ ດັ່ງນັ້ນພຣະອົງຈຶ່ງຊົງຈັດຕຽມຫົນທາງທີ່ຈະຊ່ວຍພວກເຂົາໃຫ້ລອດພົ້ນຈາກການລົງໂທດ ພຣະເຈົ້າກ່າວບອກໃຫ້ພວກເຂົາສ້າງສະຖານທີ່ພິເສດຂຶ້ນມາແຫ່ງໜຶ່ງ ຊຶ່ງຈະເປັນບ່ອນທີ່ພຣະອົງຈະສະຖິດຢູ່ແລະຕິດຕໍ່ກັບພວກເຂົາ.

ພຣະເຈົ້າຊົງມີພຣະບັນຊາທີ່ສະເພາະເຈາະຈົງວ່າ ຈະສ້າງຫໍເຕັນສັກສິດບ່ອນຊຶ່ງພຣະອົງຈະຊົງປະທັບໃຫ້ເປັນທີ່ປາກົດແກ່ຊົນຊາດອິດສະຣາເອນນັ້ນຢ່າງໃດ ເຮົາຈະບໍ່ໃຊ້ເວລາໃນການສຶກສາກ່ຽວກັບຫໍເຕັນສັກສິດຫຼາຍປານໃດ ຢ່າງໃດກໍຕາມການສຶກສາກ່ຽວກັບຫໍເຕັນສັກສິດກໍຄຸ້ມຄ່າຫຼາຍ ເພາະເຮົາຈະໄດ້ຮຽນຮູ້ຫຼາຍສິ່ງກ່ຽວກັບພຣະເຈົ້າ ເມື່ອຜູ້ໜຶ່ງຜູ້ໃດປາຖະໜາທີ່ຈະເຂົ້າໃກ້ພຣະເຈົ້າ ຂັ້ນຕອນທຳອິດຂອງເຂົາກໍຄື ການທີ່ຈະຕ້ອງນຳສັດມາຖວາຍແກ່ພຣະເຈົ້າ ເຂົາຈະຕ້ອງວາງມືເທິງຫົວຂອງສັດໂຕນັ້ນແລະຂ້າມັນເສຍ ໂດຍການເຮັດເຊັ່ນນີ້ເຂົາກໍໄດ້ຍອມຮັບຕໍ່ພຣະເຈົ້າວ່າເຂົາເອງເປັນຄົນບາບແລະສົມຄວນຈະຕ້ອງຕາຍ ແລະໂດຍການວາງມືເທິງສັດໂຕນັ້ນ ພວກເຂົາກໍໄດ້ສະແດງວ່າຕົນເອງເປັນສັດໂຕນັ້ນ ຊຶ່ງຈະຕ້ອງຕາຍແທນພວກເຂົານັ້ນເອງ ພຣະເຈົ້າຊົງອະນຸຍາດໃຫ້ໃຊ້ແກະຫຼືແບ້ງົວໂຕຜູ້ແລະນົກສຳລັບເປັນເຄື່ອງບູຊາ ສັດເຫຼົ່ານັ້ນຈະຕ້ອງເປັນສັດໂຕຜູ້ທີ່ສົມບູນແລະເລືອດຂອງມັນຈະຕ້ອງຖືກເຮັດໃຫ້ໄຫຼອອກມາ ເລືອດຂອງສັດເຫຼົ່ານີ້ບໍ່ໄດ້ຊຳລະຄວາມຜິດບາບຂອງຄົນທັງຫຼາຍ ແຕ່ເປັນພຽງເຄື່ອງເຕືອນໃຈໃຫ້ລະນຶກວ່າຄວາມຕາຍເປັນໂທດຖານສຳລັບຄວາມຜິດບາບນັ້ນ, ນີ້ເປັນພາບທີ່ສະແດງໃຫ້ເຫັນເຖິງພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ພຣະເຈົ້າໄດ້ຊົງສັນຍາວ່າຈະເປັນຜູ້ທີ່ມີໄຊຊະນະເໜືອຄວາມບາບແລະຊາຕານ ແລ້ວສັດໂຕນັ້ນກໍຈະຖືກນຳໄປເຜົາເທິງແທ່ນບູຊາ ພຣະເຈົ້າຊົງສັນຍາວ່າ ຖ້າພວກເຂົາທັງຫຼາຍເຂົ້າມາຫາພຣະເຈົ້າຕາມວິທີທີ່ພຣະອົງໄດ້ບັນຊາໄວ້ ພຣະອົງກໍຈະຊົງຢັບຢັ້ງການລົງໂທດທີ່ພວກເຂົາສົມຄວນຈະໄດ້ຮັບແລະຈະຊົງອະໄພໂທດຕໍ່ຄວາມຜິດບາບຂອງພວກເຂົາ ພວກເຂົາທັງຫຼາຍຈະຕ້ອງເຂົ້າມາຫາພຣະອົງໂດຍມີຄວາມເຊື່ອໃນພຣະອົງແລະນຳ



*ພຣະອົງໄປ ເພາະພວກເຂົາເຫຼົ່ານັ້ນໄດ້ເຫັນການອັດສະຈັນທີ່ພຣະອົງໄດ້ຊົງກະທຳຕໍ່ບັນດາຄົນເຈັບ.*

ມີຫຼາຍຄົນໃນກຸ່ມຄົນເຫຼົ່ານັ້ນທີ່ຕິດຕາມພຣະເຢຊູເພາະຫວັງວ່າຈະໄດ້ຜົນປະໂຫຍດທາງດ້ານວັດຖຸຈາກພຣະອົງ ແຕ່ສິ່ງເຫຼົ່ານີ້ບໍ່ໄດ້ຊ່ວຍຜູ້ໜຶ່ງຜູ້ໃດເລີຍຖ້າພວກເຂົາປະພຶດຕາມຄຳສັ່ງສອນໃນພຣະຄຳເພື່ອຈະໃຫ້ໄດ້ຮັບປະໂຫຍດຫຼືຊັບສົມບັດໃນໂລກເທົ່ານັ້ນ, ພຣະເຢຊູບໍ່ໄດ້ສະເດັດມາເພື່ອຈະປະທານຄວາມມັ່ງຄັ່ງໃນໂລກ ພຣະເຢຊູສະເດັດມາເພື່ອຈະຊົງເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຈາກອຳນາດຂອງຊາຕານ ຄວາມບາບແລະຄວາມຕາຍນິລັນດອນ.

*ໂຢຮັນ 6:5-7 ເມື່ອພຣະເຢຊູຊົງເງີຍພຣະພັກທອດພຣະເນດແລະເຫັນຄົນເປັນຈຳນວນຫຼາຍພາກັນມາຫາພຣະອົງ ພຣະອົງຈຶ່ງກ່າວກັບຟີລິບວ່າ "ເຮົາຈະຊື້ອາຫານທີ່ໃດໃຫ້ຄົນເຫຼົ່ານີ້ກິນໄດ້" ພຣະອົງກ່າວຢ່າງນັ້ນເພື່ອຈະລອງໃຈຟີລິບ ເພາະພຣະອົງຊົງຮູ້ແລ້ວວ່າພຣະອົງຈະຊົງກະທຳປະການໃດ ຟີລິບທູນຕອບພຣະອົງວ່າ "ສອງຮ້ອຍຫຼຽນເດນາລິອົນ ກໍບໍ່ພໍຊື້ອາຫານໃຫ້ພວກເຂົາກິນກັນຄົນລະນ້ອຍ".*



ພຣະເຢຊູມີສາວົກຫຼວງຫຼາຍທີ່ຕິດຕາມພຣະອົງເພື່ອຮຽນຮູ້ຖ້ອຍຄຳຫຼືພຣະຄຳຂອງພຣະເຈົ້າ ພຣະເຢຊູໄດ້ຊົງເລືອກ 12 ຄົນຈາກເຫຼົ່າສາວົກກຸ່ມໃຫຍ່ເພື່ອຊ່ວຍເຫຼືອໃນງານຂອງພຣະອົງກ່ຽວກັບການສັ່ງສອນ ການປິ່ນປົວພະຍາດແລະການຂັບໄລ່ຜີ ພຣະເຢຊູຊົງມີແຜນການທີ່ຈະຝຶກຄົນເຫຼົ່ານີ້ໃຫ້ເປັນຕົວແທນພິເສດຂອງພຣະອົງ ສາວົກສ່ວນໃຫຍ່ໃນ 12 ຄົນທີ່ພຣະເຢຊູໄດ້ເລືອກມານີ້ບໍ່ໄດ້ມີການສຶກສາສູງແຕ່ປະການໃດ ຄົນເຫຼົ່ານີ້ບໍ່ໄດ້ເປັນຄົນຮັ່ງມີດ້ວຍ ບາງຄົນໃນສາວົກພວກນີ້ເປັນຊາວປະມົງກ່ອນທີ່ພວກເຂົາຈະເລີ່ມເປັນສາວົກຕິດຕາມພຣະເຢຊູໄປ.

ສາວົກເຫຼົ່ານີ້ທຸກຄົນເຊື່ອພຣະເຢຊູ ຍົກເວັ້ນສາວົກຄົນໜຶ່ງທີ່ຊື່ ຢູດາ ອິສະກາຣີອົດ, ຢູດາກ່າວວ່າລາວເຫັນດ້ວຍກັບພຣະເຈົ້າແລະເຊື່ອໃນພຣະເຢຊູ ແຕ່ຢູດາເວົ້າວ່າເຊື່ອແຕ່ປາກເທົ່ານັ້ນລາວບໍ່ໄດ້ເຊື່ອໃນຈິດໃຈຂອງລາວເລີຍ ຢູດາເປັນຄົນໜ້າຊື່ໃຈຄົດເພາະຄວາມຄິດແລະຈິດໃຈຂອງລາວບໍ່ໄດ້ເຫັນດ້ວຍກັບພຣະເຈົ້າ ຢູດາບໍ່ໄດ້ໄວ້ວາງໃຈຢ່າງແທ້ຈິງວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຂອງລາວຊຶ່ງຈະຊ່ວຍລາວໃຫ້ຫຼຸດພົ້ນຈາກການຄວບຄຸມຂອງຊາຕານ ຄວາມບາບແລະຄວາມຕາຍ ສາວົກຄົນອື່ນໆອີກ 11 ຄົນນັ້ນບໍ່ຮູ້ວ່າຢູດາບໍ່ແມ່ນຜູ້ເຊື່ອຢ່າງແທ້ຈິງ ແຕ່ພຣະເຢຊູຊົງຮູ້ວ່າຢູດາເປັນຄົນຢ່າງໃດ ພຣະເຢຊູຊົງຮູ້ວ່າ ບໍ່ວັນໃດກໍວັນໜຶ່ງ ຢູດາຈະທໍລະຍົດມອບພຣະອົງໄວ້ແກ່ພວກສັດຕູຂອງພຣະອົງ.

*ໂຢຮັນ 6:1, 2 ພາຍຫຼັງເຫດການເຫຼົ່ານີ້ພຣະເຢຊູກໍສະເດັດໄປຂ້າມທະເລກາລີເລ ຄືທະເລທິເບເລຽດ ຄົນເປັນຈຳນວນຫຼາຍໄດ້ຕິດຕາມ*



ເຄື່ອງບູຊາດ້ວຍເລືອດມາຖວາຍສຳລັບຄວາມຜິດບາບຂອງຕົນເອງ.



ຫຼັງຈາກທີ່ຫໍເຕັນສັກສິດໄດ້ສ້າງສຳເລັດຮຽບຮ້ອຍແລ້ວພຣະເຈົ້າໄດ້ຊົງນຳຊົນຊາດອິດສະຣາເອນໄປຍັງຊາຍແດນຂອງ "ແຜ່ນດິນທີ່ຊົງສັນຍາ" ນີ້ເປັນແຜ່ນດິນທີ່ພຣະເຈົ້າຊົງສັນຍາໄວ້ວ່າຈະປະທານໃຫ້ແກ່ອັບຣາຮາມເມື່ອ 430 ປີກ່ອນໜ້ານີ້ ພຣະເຈົ້າຊົງສັ່ງໃຫ້ໂມເຊເລືອກຊາຍຜູ້ໜຶ່ງຈາກຕະກຸນຂອງຊົນຊາດອິດສະຣາເອນແຕ່ລະຕະກຸນ ເພື່ອໃຫ້ອອກໄປສອດແນມໃນແຜ່ນດິນນັ້ນເມື່ອພວກສອດແນມກັບມາແລ້ວມີ 10 ຄົນ ທີ່ລາຍງານຂ່າວຮ້າຍໃຫ້ຮູ້ ແຕ່ອີກ 2 ຄົນນັ້ນນຳຂ່າວດີກັບມາລາຍງານໃຫ້ຮູ້ ຜູ້ສອດແນມ 10 ຄົນໄດ້ມາລາຍງານແກ່ພວກອິດສະຣາເອນວ່າ ມີຄົນຍັກອາໄສຢູ່ໃນແຜ່ນດິນນັ້ນແລະຍັງມີກຳແພງອັນແຂງແກ່ນລ້ອມເມືອງໄວ້ອີກດ້ວຍ ຄົນເຫຼົ່ານີ້ບໍ່ເຊື່ອວ່າພຣະເຈົ້າຈະຊົງມີລິດທານຸພາບທີ່ຈະເອົາຊະນະຊາວເມືອງການາອານ (ແຜ່ນດິນທີ່ຊົງສັນຍາໄວ້) ແລະປະທານແຜ່ນດິນນັ້ນແກ່ພວກເຂົາໄດ້ ຢ່າງໃດກໍຕາມໂຢຊວຍ (ຊຶ່ງ

ເປັນແມ່ທັບຂອງໂມເຊ) ແລະກາເລັບໄດ້ເຫັນກຳແພງອັນແຂງແກ່ນ ແລະຂະໜາດໃຫຍ່ຂອງຊາວເມືອງນັ້ນເຊັ່ນກັນ ແຕ່ຄົນທັງສອງລະນຶກເຖິງບັນດາເຫດການອັນຍິ່ງໃຫຍ່ທີ່ພຣະເຈົ້າໄດ້ຊົງກະທຳແລະເຊື່ອວ່າພຣະເຈົ້າຈະຊົງປະທານແຜ່ນດິນນັ້ນແກ່ພວກເຂົາ.

*ຈົດເຊັ່ນບັນຊີ14:1-3 ປະຊາຊົນຕ່າງໆກໍຮ້ອງໄຫ້ດ້ວຍຄວາມທຸກໃຈຕະຫຼອດທັງຄືນ ພວກເຂົາຈົ່ມຮ້າຍໃສ່ໂມເຊແລະອາໂລນວ່າ ຕາຍຢູ່ອີຢີບຫຼືຢູ່ທີ່ກົ່ນແຫ້ງແລ້ງກັນດານກໍຍັງດີກວ່າ ເປັນຫຍັງພຣະຜູ້ເປັນເຈົ້າຈຶ່ງຈະນຳພວກເຮົາໄປໃນດິນແດນນັ້ນ? ພວກເຮົາຈະຖືກຂ້າຕາຍໃນສະໜາມຮົບແລະບັນດາລູກເມຍຂອງເຮົາກໍຈະຖືກຈັບໄປ ເຮົາກັບຄືນໄປອີຢີບບໍ່ດີກວ່າບໍ?.*

ຊາວອິດສະຣາເອນທັງຫຼາຍເຫັນດີກັບຜູ້ສອດແນມ 10 ຄົນ ແລະບໍ່ເຊື່ອວ່າພຣະເຈົ້າຈະຊົງປະທານແຜ່ນດິນນັ້ນແກ່ພວກເຂົາ ພວກເຂົາຄິດວ່າພຣະເຈົ້າຕົວະ, ພຣະເຈົ້າເຄີຍກ່າວລ່ວງໜ້າໄວ້ວ່າພຣະອົງຈະຊົງປະທານແຜ່ນດິນນັ້ນແກ່ພວກເຂົາທັງຫຼາຍ ແຕ່ພວກເຂົາບໍ່ເຊື່ອພຣະອົງ ພວກເຂົາເຕັມໄປດ້ວຍຄວາມຢ້ານກົວເພາະຊາວເມືອງການາອານໂຕໃຫຍ່ແລະແຂງແຮງກວ່າຄົນຢິວ ພຣະເຈົ້າຊົງຄຽດຊາວອິດສະຣາເອນທັງຫຼາຍເພາະພວກເຂົາບໍ່ເຊື່ອພຣະອົງ ພຣະເຈົ້າຈຶ່ງຊົງບອກແກ່ເຂົາທັງຫຼາຍວ່າ ທຸກຄົນທີ່ມີອາຍຸ 20 ປີແລະຫຼາຍກວ່າ 20 ປີ ຊຶ່ງບໍ່ເຊື່ອພຣະເຈົ້າ ຈະຕ້ອງຕາຍໃນຖິ່ນທຸລະກັນດານ ມີພຽງໂຢຊວຍແລະກາເລັບເທົ່ານັ້ນທີ່ເຊື່ອພຣະເຈົ້າ ພຣະເຈົ້າກ່າວວ່າຫຼັງຈາກນີ້ອີກ 40 ປີ ຄືພາຍຫຼັງຈາກທີ່ຄົນເຫຼົ່ານັ້ນຕາຍໝົດແລ້ວ ພຣະອົງກໍຈະຊົງນຳລູກຫຼານຂອງພວກເຂົາພ້ອມທັງໂຢຊວຍແລະກາເລັບເຂົ້າໄປໃນແຜ່ນດິນນັ້ນແລະຊົງປະທານແຜ່ນດິນນັ້ນແກ່ເຂົາທັງຫຼາຍ.



ພວກນັກທຳແລະພວກຟາຣີຊາຍເປັນຄົນຈອງຫອງ ຄົນເຫຼົ່ານີ້ເຊື່ອວ່າຕົນເອງປະເສີດກວ່າຄົນອື່ນໆຫຼາຍ ເພາະພວກເຂົາຖືສິນອົດອາຫານ, ອະທິຖານແລະກະທຳສິ່ງອື່ນໆອີກຫຼວງຫຼາຍດ້ວຍຄວາມພະຍາຍາມທີ່ຈະເຮັດໃຫ້ພຣະເຈົ້າພໍພຣະໄທ, ພວກເຂົາບໍ່ຍອມກິນຮ່ວມກັບຄົນບາງກຸ່ມເຊັ່ນຄົນເກັບພາສີ ຊຶ່ງກະທຳບາບຢ່າງເປີດເຜີຍ ພຣະເຢຊູຈຶ່ງກ່າວບອກແກ່ພວກເຂົາວ່າ ຄົນທີ່ມີສຸຂະພາບດີບໍ່ຕ້ອງການໝໍ ແຕ່ຄົນເຈັບປ່ວຍຕ້ອງການໝໍ ພຣະເຢຊູບໍ່ໄດ້ສະເດັດມາເພື່ອຊ່ວຍຄົນທີ່ຄິດວ່າຕົນເອງບໍ່ມີບາບຫຼືດີພໍແລ້ວທີ່ພຣະເຈົ້າຈະຍອມຮັບພວກເຂົາໄດ້ ແທນທີ່ຈະເປັນເຊັ່ນນັ້ນພຣະອົງກັບສະເດັດມາເພື່ອຈະຊົງເປັນພຣະຜູ້ຊ່ວຍໃຫ້ລອດພົ້ນສຳລັບຜູ້ທີ່ຍອມຮັບວ່າພວກເຂົາເອງເປັນຄົນບາບທີ່ຊ່ວຍເຫຼືອຕົນເອງບໍ່ໄດ້ ແຕ່ຈະໄດ້ຮັບການຊ່ວຍໃຫ້ລອດພົ້ນໄດ້ໂດຍພຣະເມດຕາຂອງພຣະເຈົ້າເທົ່ານັ້ນ.

*ມາຣະໂກ 3:13-15 ແລ້ວພຣະອົງສະເດັດຂຶ້ນພູເຂົາ ແລະພໍພຣະໄທຈະເອີ້ນຜູ້ໃດພຣະອົງກໍຊົງເອີ້ນຜູ້ນັ້ນ ແລ້ວພວກເຂົາໄດ້ມາຫາພຣະອົງ ພຣະອົງຈຶ່ງຊົງຕັ້ງສາວົກສິບສອງຄົນໄວ້ໃຫ້ພວກເຂົາຢູ່ກັບພຣະອົງ ເພື່ອພຣະອົງຈະຊົງໃຊ້ພວກເຂົາໄປປະກາດ ແລະໃຫ້ມີອຳນາດປິ່ນປົວພະຍາດຕ່າງໆ ແລະຂັບໄລ່ຜີອອກໄດ້*



ພຣະເຢຊູຊົງເອີ້ນເລວີ ຊຶ່ງຮູ້ຈັກກັນອີກຊື່ໜຶ່ງວ່າ ມັດທາຍ ໃຫ້ເປັນສາວົກຕິດຕາມພຣະອົງໄປ ຂະນະນັ້ນມັດທາຍກໍາລັງເຮັດວຽກເກັບພາສີໃຫ້ກັບພວກໂຣມັນ ຄົນເກັບພາສີນັ້ນເປັນທີ່ກຽດຊັງ ແລະຖືກດູໝິ່ນຢຽດຫຍາມຈາກພວກຢິວ ຫຼາຍເທື່ອທີ່ຄົນເກັບພາສີ ມັກຈະມີຊື່ສຽງໄປໃນທາງທີ່ບໍ່ຄ່ອຍດີໃນເລື່ອງການເກັບພາສີເກີນຈາກປະຊາຊົນແລະເກັບເງິນນັ້ນໄວ້ໃຊ້ເສຍເອງ ມັດທາຍເປັນຄົນບາບເຊັ່ນດຽວກັບຄົນອື່ນໆທຸກຄົນທີ່ເກີດມາໃນໂລກນີ້ ພວກເຂົາສົມຄວນຈະຕາຍແລະໄດ້ຮັບການລົງໂທດນິລັນດອນສໍາລັບຄວາມບາບຂອງພວກເຂົາ ຢ່າງໃດກໍຕາມມັດທາຍໄດ້ກັບໃຈຈາກຄວາມບາບຂອງຕົນເອງ ມັດທາຍໄດ້ປ່ຽນແປງຄວາມຄິດກ່ຽວກັບຕົນເອງ. ຄວາມບາບຂອງລາວແລະພຣະຄໍາຂອງພຣະເຈົ້າ. ລາວໄດ້ເຫັນດ້ວຍກັບພຣະເຈົ້າແລະໄວ້ວາງໃຈວ່າ ພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ພຣະເຈົ້າໄດ້ໃຊ້ໃຫ້ສະເດັດເຂົ້າມາໃນໂລກ ຫຼາຍປີຕໍ່ມາອົງພຣະຜູ້ເປັນເຈົ້າຊົງໃຊ້ມັດທາຍໃຫ້ຂຽນພຣະທໍາເຫຼັ້ມທໍາອິດຂອງພຣະຄໍາພີໃໝ່ ພຣະເຈົ້າພຣະວິນຍານບໍລິສຸດຊົງດົນໃຈໃຫ້ມັດທາຍຂຽນສິ່ງທີ່ລາວຄວນຈະບັນທຶກນັ້ນ.

*ມາຣະໂກ 2:16-17 ຝ່າຍພວກນັກທໍາແລະພວກຟາຣີຊາຍ ເມື່ອເຫັນພຣະອົງຊົງສະເຫວີຍອາຫານກັບພວກຄົນເກັບພາສີແລະຄົນບາບ ຈຶ່ງຖາມສາວົກຂອງພຣະອົງວ່າ "ເຫດໃດພຣະອົງຈຶ່ງກິນແລະດື່ມຮ່ວມກັບພວກຄົນເກັບພາສີແລະຄົນບາບພວກນັ້ນ" ຄັນພຣະເຢຊູຊົງໄດ້ຍິນດັ່ງນັ້ນ ພຣະອົງຈຶ່ງກ່າວແກ່ພວກເຂົາວ່າ "ຄົນປົກກະຕິບໍ່ຕ້ອງການໝໍ ແຕ່ຄົນເຈັບຕ້ອງການໝໍ ເຮົາບໍ່ໄດ້ມາເພື່ອຈະ ເອີ້ນຄົນຊອບທໍາ ແຕ່ມາ ເອີ້ນຄົນບາບໃຫ້ກັບໃຈເສຍໃໝ່"*



ການບໍ່ເຊື່ອພຣະເຈົ້ານັ້ນເປັນການກະທໍາທີ່ຜິດຫຼາຍທີ່ສຸດ ພຣະເຈົ້າຊົງປາຖະໜາທີ່ຈະນໍາຊົນຊາດອິດສະຣາເອນເຂົ້າໄປໃນແຜ່ນດິນການາອານທັນທີ ຢ່າງໃດກໍຕາມພຣະເຈົ້າຊົງເຮັດໃຫ້ພວກເຂົາທັງຫຼາຍຕ້ອງພະເນຈອນໃນຖິ່ນທຸລະກັນດານເປັນເວລາ 40 ປີ ເພາະພວກເຂົາເລືອກທີ່ຈະບໍ່ເຊື່ອພຣະອົງ ຜູ້ໃຫຍ່ເຫຼົ່ານັ້ນທຸກຄົນທີ່ມີອາຍຸຕັ້ງແຕ່ 20 ປີ ຂຶ້ນໄປຊຶ່ງບໍ່ເຊື່ອພຣະເຈົ້າກໍຕາຍໃນຖິ່ນທຸລະກັນດານໃນຊ່ວງໄລຍະເວລາ 40 ປີນັ້ນເອງ.

ພຣະທໍາຂອງພຣະເຈົ້າໄດ້ບອກໃຫ້ເຮົາຮູ້ເຖິງເຫດການບາງຢ່າງທີ່ເກີດຂຶ້ນຕໍ່ຊົນຊາດອິດສະຣາເອນໃນຊ່ວງໄລຍະເວລາ 40 ປີແຫ່ງການພະເນຈອນໃນຖິ່ນທຸລະກັນດານນີ້ ເຮົາຈະມາສຶກສາເຫດການຢ່າງໜຶ່ງໃນບົດນີ້ນໍາກັນ. ຕາມປົກກະຕິແລ້ວເມື່ອເວລາຜ່ານໄປບໍ່ດົນປານໃດຊາວອິດສະຣາເອນກໍຈະເລີ່ມຮ້ອງທຸກແລະຈົ່ມເມື່ອມີຄວາມທຸກລໍາບາກເກີດຂຶ້ນ ພຣະເຈົ້າໄດ້ຊົງຈັດຕຽມອາຫານແລະນໍ້າສໍາລັບຊາວອິດສະຣາເອນທັງຫຼາຍ, ຫຼັງຈາກທີ່ພວກເຂົາເລີ່ມເດີນທາງອອກຈາກປະເທດອີຢີບ ແຕ່ພວກເຂົາກໍຍັງບໍ່ໄວ້ວາງໃຈແລະເພິ່ງພາພຣະອົງ ແລ້ວພວກເຂົາກໍລືມສິ່ງທີ່ພຣະເຈົ້າໄດ້ຊົງກະທໍາສໍາລັບພວກເຂົາຢ່າງໄວວາ ແລະເລີ່ມຈະຈົ່ມເພາະພວກເຂົາຂາດແຄນນໍ້າອີກ.

*ຈົດເຊັ່ນບັນຊີ 21:5-6 ແລະປະຊາຊົນໄດ້ຈົ່ມຮ້າຍໃສ່ພຣະຜູ້ເປັນເຈົ້າແລະໂມເຊວ່າ "ເປັນຫຍັງທ່ານຈຶ່ງນໍາພວກເຮົາອອກຈາກອີຢີບມາຕາຍຢູ່ເທິງຖິ່ນແຫ້ງແລ້ງກັນດານ ບ່ອນບໍ່ມີອາຫານແລະບໍ່ມີນໍ້າເຊັ່ນນີ້? ພວກເຮົາບໍ່ອາດທົນກິນອາຫານຕາຍໆ ເຊັ່ນນີ້ໄດ້ດອກ! "ແລ້ວພຣະຜູ້ເປັນເຈົ້າກໍໄດ້ສົ່ງງູພິດມາຕອດຊາວອິດສະຣາເອນຢ່າງຫຼວງຫຼາຍ.*

ມີຊາວອິດສະຣາເອນຫຼວງຫຼາຍທີ່ຕາຍເພາະຖືກງູກັດ ພຣະເຈົ້າໄດ້ກ່າວໄວ້ຕັ້ງແຕ່ຕົ້ນແລ້ວວ່າ ຄວາມບາບຈະນຳໄປສູ່ຄວາມຕາຍທາງດ້ານຮ່າງກາຍ ສ່ວນທາງດ້ານຄວາມສຳພັນກັບພຣະເຈົ້ານັ້ນຈະຖືກແຍກຈາກພຣະເຈົ້າຊົ່ວນິລັນດອນແລະຈະເປັນຄວາມຕາຍຊົ່ວນິລັນດອນ ບັດນີ້ຄວາມຈິງໃນເລື່ອງດັ່ງກ່າວກໍໄດ້ສະແດງອອກມາໃຫ້ເຫັນຈະແຈ້ງແລ້ວໂດຍທີ່ຄົນເປັນຈຳນວນຫຼາຍໄດ້ຕາຍລົງ, ນີ້ເປັນການພິພາກສາຂອງພຣະເຈົ້າທີ່ມີຕໍ່ພວກເຂົາທັງຫຼາຍເພາະຄວາມຜິດບາບຂອງພວກເຂົາເອງຄົນເຫຼົ່ານີ້ຖືກງູກັດແລະຕາຍສັນໃດ ມະນຸດທຸກຄົນກໍຖືກ "ງູພິດແຫ່ງຄວາມບາບ" ກັດສັນນັ້ນ. ຜົນທີ່ເກີດຂຶ້ນເຮັດໃຫ້ເຮົາຖືກແຍກຈາກພຣະເຈົ້າແລະຈະຕ້ອງຕາຍຝ່າຍຮ່າງກາຍໃນວັນໃດວັນໜຶ່ງ ສຳລັບຜູ້ທີ່ຕາຍໂດຍຖືກແຍກຈາກພຣະເຈົ້າກໍຈະຕ້ອງຖືກແຍກຈາກພຣະເຈົ້າໄປຢູ່ໃນບຶງໄຟຕະຫຼອດໄປເປັນນິດ ແລະສຳລັບຜູ້ທີ່ໄດ້ຮັບການຍອມຮັບຈາກພຣະເຈົ້າກ່ອນຈະຕາຍກໍຈະໄດ້ຢູ່ກັບພຣະເຈົ້າໃນສະຫວັນຊົ່ວນິລັນດອນ ເມື່ອເຂົາຕາຍໄປແລ້ວ. ທ່ານອາດຈະຖາມຕົນເອງວ່າ "ແລ້ວຂ້ອຍຈະໄດ້ຮັບການຍອມຮັບຈາກພຣະເຈົ້າໄດ້ຢ່າງໃດ?" ເນື້ອຫາໃນພຣະຄຳພີກໍກ່ຽວຂ້ອງກັບເລື່ອງນີ້ທັງໝົດ ແລະເປົ້າໝາຍຂອງບົດຮຽນເຫຼົ່ານີ້ກໍເພື່ອຈະຊ່ວຍໃຫ້ທ່ານເຂົ້າໃຈເນື້ອໃນແລະຂໍ້ຄວາມເຫຼົ່ານີ້ ເພື່ອທ່ານຈະໄດ້ຮັບການຍອມຮັບຈາກພຣະເຈົ້າແລະໄດ້ຢູ່ກັບພຣະເຈົ້າໃນສະຫວັນຊົ່ວນິລັນດອນ.

ຄົນຢິວບໍ່ສາມາດໜີພົ້ນຈາກງູພິດທີ່ພຣະເຈົ້າສົ່ງມາໄດ້ ເມື່ອພຣະເຈົ້າຊົງຕັດສິນພຣະໄທທີ່ຈະລົງໂທດຄົນບາບແລ້ວກໍບໍ່ມີທີ່ໃດທີ່ພວກເຂົາຈະສາມາດໜີໄປຫຼົບຊ່ອນໄດ້ ໃນສະໄໝໂນອາຫຼັງຈາກທີ່ພຣະເຈົ້າຊົງປິດປະຕູທີ່ເຂົ້າສູ່ເຮືອແລ້ວກໍບໍ່ມີທາງທີ່ຄົນເຫຼົ່ານັ້ນຊຶ່ງ



*ມາຣະໂກ 2:5-7 ເມື່ອພຣະເຢຊູທອດພຣະເນດເຫັນຄວາມເຊື່ອຂອງພວກເຂົາທັງຫຼາຍ ພຣະອົງຈຶ່ງກ່າວກັບຄົນອຳມະພາດວ່າ "ລູກເອີຍບາບຂອງເຈົ້າໄດ້ຮັບການອະໄພແລ້ວ" ແຕ່ມີພວກນັກທຳບາງຄົນນັ່ງຢູ່ບ່ອນນັ້ນ ແລະພວກເຂົາຄິດໃນໃຈວ່າ "ເປັນຫຍັງຄົນນີ້ເວົ້າໝິ່ນປະມາດເຊັ່ນນັ້ນ ໃຜຈະຍົກຄວາມຜິດບາບໄດ້ເວັ້ນແຕ່ພຣະເຈົ້າເທົ່ານັ້ນ"*

ພຣະເຢຊູຊົງເຫັນວ່າຊາຍຜູ້ນີ້ເຊື່ອໃນພຣະອົງຢ່າງແທ້ຈິງພຣະອົງຈຶ່ງຊົງອະໄພໂທດສຳລັບຄວາມບາບທັງຫຼາຍຂອງລາວກຸ່ມຄົນທີ່ນັ່ງຟັງຢູ່ນັ້ນເວົ້າຖືກແລ້ວ ເມື່ອພວກເຂົາກ່າວວ່າມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດຈະຍົກຄວາມຜິດບາບໄດ້ ແຕ່ພວກເຂົາກໍເວົ້າຜິດເມື່ອພວກເຂົາກ່າວວ່າພຣະເຢຊູໄດ້ກະທຳບາບ ພຣະເຢຊູຊົງເປັນພຣະເຈົ້າແລະຊົງມີສິດທິອຳນາດທີ່ຈະອະໄພໂທດສຳລັບຄວາມຜິດບາບທັງຫຼາຍຂອງມະນຸດໄດ້ ພວກນັກທຳແລະພວກຟາຣີຊາຍບໍ່ເຊື່ອວ່າພຣະເຢຊູຊົງເປັນພຣະເຈົ້າທີ່ສະເດັດມາເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ ດັ່ງນັ້ນພຣະເຢຊູຈຶ່ງຊົງສະແດງລິດອຳນາດຂອງພຣະອົງໃນຖານະທີ່ຊົງເປັນພຣະເຈົ້າໂດຍການປິ່ນປົວຮັກສາຊາຍທີ່ປ່ວຍເປັນອຳມະພາດໃຫ້ຫາຍດີ ປະຊາຊົນທັງປວງຕ່າງກໍພາກັນຮູ້ສຶກປະຫຼາດໃຈຢ່າງຍິ່ງ.

*ມາຣະໂກ 2:14 ເມື່ອພຣະອົງກຳລັງສະເດັດໄປນັ້ນພຣະອົງກໍທອດພຣະເນດເຫັນເລວີລູກຊາຍອັນເຟອັດນັ່ງຢູ່ທີ່ດ່ານເກັບພາສາຈຶ່ງກ່າວແກ່ລາວວ່າ "ຈົ່ງຕາມເຮົາມາເຖີດ" ລາວກໍລຸກຂຶ້ນຕາມພຣະອົງໄປ.*

*ມາຣະໂກ 2:3-4 ແລ້ວມີຄົນນຳຄົນອຳມະພາດຄົນໜຶ່ງມາຫາພຣະອົງ ມີສີ່ຄົນຫາມ ເມື່ອພວກເຂົາເຂົ້າໄປຫາພຣະອົງບໍ່ໄດ້ເພາະຄົນຫຼາຍ ພວກເຂົາຈຶ່ງຮື້ດາດຟ້າຫຼັງຄາບ່ອນທີ່ພຣະອົງປະທັບນັ້ນ ແລະເມື່ອຮື້ເປັນຊ່ອງແລ້ວ ພວກເຂົາກໍຢ່ອນຕຽງທີ່ຄົນອຳມະພາດນອນຢູ່ລົງມາ.*



ຊາຍຜູ້ນີ້ບໍ່ສາມາດຈະເຮັດຫຍັງເພື່ອຈະປິ່ນປົວຮັກສາຕົນເອງໃຫ້ຫາຍດີໄດ້ເລີຍ ເພາະລາວປ່ວຍເປັນອຳມະພາດບໍ່ມີໝໍຄົນໃດສາມາດຈະປິ່ນປົວຮັກສາລາວໃຫ້ຫາຍດີແລະເພື່ອນໆຂອງລາວກໍບໍ່ສາມາດຊ່ວຍລາວໃຫ້ດີຂຶ້ນໄດ້ ເຫດການນີ້ເຕືອນສະຕິເຮົາໃຫ້ລະນຶກວ່າ ມະນຸດທຸກຄົນບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ບໍ່ມີໃຜທີ່ສາມາດຈະຊ່ວຍຕົນເອງໃຫ້ຫຼຸດພົ້ນຈາກການຄອບຄອງຂອງຊາຕານຄວາມບາບທີ່ຄວບຄຸມຊີວິດຂອງຕົນເອງແລະການລົງໂທດສຳລັບບາບຂອງພວກເຂົາໄດ້. ການກະທຳຄວາມດີຫຼືການມີຊີວິດທີ່ດີກໍບໍ່ສາມາດຈະຊ່ວຍເຮົາໃຫ້ລອດພົ້ນໄດ້ ເຮົາທັງຫຼາຍບໍ່ສາມາດຈະຊ່ວຍເຫຼືອຕົນເອງໃຫ້ຫຼຸດພົ້ນໄດ້ເລີຍ.



ຢູ່ນອກເຮືອຈະໜີລອດໄດ້ ຊາວເມືອງໂຊໂດມແລະໂກໂມຣາບໍ່ສາມາດຈະໜີພົ້ນຈາກການພິພາກສາຂອງພຣະເຈົ້າ ເມື່ອພຣະອົງສົ່ງໄຟລົງມາທຳລາຍເມືອງນັ້ນ ເມື່ອພຣະເຈົ້າຊົງຕັດສິນພຣະໄທວ່າເຖິງເວລາທີ່ຈະລົງໂທດມະນຸດແລ້ວກໍຈະບໍ່ມີທີ່ໃດທີ່ພວກເຂົາຈະສາມາດໜີໄປຫຼົບໃຫ້ລອດພົ້ນໄດ້ເລີຍ.

*ຈົດເຊັ່ນບັນຊີ 21:7 ປະຊາຊົນຈຶ່ງພາກັນມາຫາໂມເຊແລະຮ້ອງຂໍວ່າ "ພວກເຮົາເຮັດບາບແລ້ວ ເມື່ອຈົ່ມຮ້າຍໃສ່ພຣະຜູ້ເປັນເຈົ້າແລະທ່ານ, ບັດນີ້ຂໍທ່ານຈົ່ງອ້ອນວອນພຣະຜູ້ເປັນເຈົ້າໃຫ້ໄລ່ງູເຫົ່ານີ້ໜີໄປເກີດ" ດັ່ງນັ້ນໂມຈຶ່ງໄດ້ອ້ອນວອນເພື່ອພວກເຂົາ.*

ເປົ້າໝາຍຂອງພຣະເຈົ້າສຳລັບການພິພາກສາ ຄືການທີ່ຈະກໍ່ໃຫ້ເກີດການປ່ຽນແປງຈິດໃຈຂອງຜູ້ທີ່ໄດ້ກະທຳຄວາມຜິດບາບ, ພຣະຄຳພີອະທິບາຍລັກສະນະຂອງຄຳນີ້ວ່າ ເປັນການກັບໃຈໃໝ່. ຊົນຊາດອິດສະຣາເອນທັງຫຼາຍໄດ້ປ່ຽນແປງ ທັດສະນະຄະຕິຂອງຕົນເອງທີ່ມີຕໍ່ພຣະເຈົ້າແລະຍອມຮັບຄວາມຜິດບາບຂອງຕົນເອງຢ່າງວ່ອງໄວ ບັດນີ້ພວກເຂົາສຳນຶກໄດ້ວ່າ ມີພຽງພຣະເຈົ້າເທົ່ານັ້ນທີ່ຊ່ວຍພວກເຂົາໃຫ້ລອດພົ້ນຈາກການລົງໂທດໄດ້ ພວກເຂົາເອງບໍ່ສາມາດຈະຊ່ວຍຕົນເອງໃຫ້ລອດພົ້ນຈາກງູເຫຼົ່ານັ້ນໄດ້.

*ຈົດເຊັ່ນບັນຊີ 21:8, 9 ແລ້ວພຣະຜູ້ເປັນເຈົ້າກໍໄດ້ບອກໂມເຊ ໃຫ້ເຮັດງູເປັນໂລຫະຕອກຕິດໄວ້ກັບເສົາເພື່ອວ່າຜູ້ໃດທີ່ຖືກງູຕອດເມື່ອແນມເບິ່ງງູນັ້ນແລ້ວ ຜູ້ນັ້ນກໍໄດ້ຮັບການປິ່ນປົວໃຫ້ດີ ສະນັ້ນ ໂມເຊຈຶ່ງເຮັດງູທອງສຳລິດຕອກໄວ້ກັບເສົາ ຜູ້ໃດທີ່ຖືກງູພິດຕອດເມື່ອຫຼຽວເບິ່ງງູທອງສຳລິດນັ້ນແລ້ວຜູ້ນັ້ນກໍໄດ້ຮັບການປິ່ນປົວໃຫ້ດີ.*



ພຣະເຈົ້າປ່ຽມລົ້ນດ້ວຍຄວາມຮັກ ພຣະເມດຕາແລະພຣະກະລຸນາຄຸນ ພຣະອົງໄດ້ຕັດສິນພຣະໄທທີ່ຈະຈັດຕຽມຫົນທາງເພື່ອຊ່ວຍເຫຼືອຜູ້ທີ່ເຊື່ອພຣະອົງໃຫ້ລອດພົ້ນໄດ້ ເຖິງວ່າພວກເຂົາບໍ່ສົມຄວນທີ່ຈະໄດ້ຮັບການຊ່ວຍເຫຼືອຈາກພຣະເຈົ້າ ແຕ່ພຣະອົງກໍຍັງຊົງຊ່ວຍທຸກຄົນທີ່ໄວ້ວາງໃຈໃນພຣະອົງໃຫ້ລອດພົ້ນ ພຣະເຈົ້າບໍ່ໄດ້ບອກໃຫ້ພວກຢິວຊອກຫາວິທີຂອງຕົນເອງເພື່ອຈະໄດ້ຮັບການປິ່ນປົວໃຫ້ເຊົາ ແຕ່ພຣະອົງຊົງບອກໃຫ້ໂມເຊສ້າງງູທອງສຳລິດໂຕໜຶ່ງແລ້ວນຳໄປຕິດໄວ້ທີ່ເສົາ ຖ້າພວກເຂົາເຊື່ອພຣະອົງ ພວກເຂົາກໍຈະລອດພົ້ນຈາກຄວາມຕາຍ ສິ່ງທີ່ພວກເຂົາຈະຕ້ອງເຮັດກໍຄື ການເບິ່ງງູທອງສຳລິດເທົ່ານັ້ນ ພວກເຂົາກໍຈະບໍ່ຕາຍ ພຣະເຈົ້າໄດ້ຊົງຈັດຕຽມຫົນທາງສຳລັບພວກເຂົາທີ່ຈະໜີພົ້ນຈາກຄວາມຕາຍ ແຕ່ຈະຕ້ອງເຮັດຕາມວິທີການຂອງພຣະເຈົ້າ ບໍ່ແມ່ນວິທີການຂອງເຂົາເອງ.

ທ່ານຄິດວ່າຖ້າຄົນເຫຼົ່ານີ້ພຽງແຕ່ອະທິຖານ ແລ້ວບໍ່ຕ້ອງເບິ່ງງູທອງສຳລິດ ພວກເຂົາຈະມີຊີວິດລອດຫຼືບໍ? ບໍ່ລອດແນ່ນອນ ແລະ



# ບົດທີ 18
# ພຣະເຢຊູຊົງພິສູດວ່າ ພຣະອົງເປັນພຣະເຈົ້າ

*ມາຣະໂກ 2:1, 2 ຄັນລ່ວງໄປຫຼາຍວັນ ພຣະອົງໄດ້ສະເດັດໄປໃນເມືອງກາເປນາອຸມອີກ ແລະຄົນທັງຫຼາຍໄດ້ຍິນວ່າພຣະອົງປະທັບທີ່ເຮືອນ ແລະໃນເວລານັ້ນຄົນເປັນຈຳນວນຫຼາຍມາຊຸມນຸມກັນຈົນບໍ່ມີທີ່ຈະຮັບ ຈະເຂົ້າໃກ້ປະຕູກໍບໍ່ໄດ້ ພຣະອົງຈຶ່ງເທດສະໜາພຣະຄຳນັ້ນໃຫ້ພວກເຂົາຟັງ.*

ປະຊາຊົນມາຫາພຣະເຢຊູດ້ວຍເຫດຜົນຫຼາຍປະການທີ່ແຕກຕ່າງກັນ ບາງຄົນຢາກຮູ້ຢາກເຫັນ ບາງຄົນປາຖະໜາທີ່ຈະໄດ້ຮັບການປິ່ນປົວໃຫ້ຫາຍດີ ບາງຄົນຄິດວ່າຊ່ວຍປົດປ່ອຍພວກເຂົາໃຫ້ຫຼຸດພົ້ນຈາກການປົກຄອງຂອງພວກໂຣມັນ ບາງຄົນກໍປາຖະໜາທີ່ຈະມາຟັງພຣະອົງ ເພາະວ່າພຣະອົງກ່າວພຣະຄຳຂອງພຣະເຈົ້າດ້ວຍລິດອຳນາດ ແຕ່ຄົນອື່ນໆກັບຫວັງວ່າພຣະອົງຈະກ່າວຫຼືກະທຳອັນໃດບາງຢ່າງທີ່ພວກເຂົາສາມາດຈະຈັບຜິດໄດ້ ຄົນເຫຼົ່ານີ້ຕ້ອງການຈະຕັ້ງຂໍ້ຫາພຣະອົງວ່າກໍ່ຄະດີຮ້າຍແຮງ ບໍ່ແມ່ນເພາະພຣະອົງໄດ້ກະທຳຄວາມຜິດໃດໆ ແຕ່ເພາະພວກເຂົາອິດສາໃນພັນທະກິດຂອງພຣະອົງທີ່ຊົງກະທຳທ່າມກາງປະຊາຊົນນັ້ນເອງ.

ຖ້າພວກເຂົາບໍ່ໄດ້ເບິ່ງງູທອງສຳລິດ ແຕ່ໄດ້ຖວາຍຂອງກຳນັນຫຼືເງິນແກ່ພຣະເຈົ້າແທນເດ່ ພວກເຂົາຈະມີຊີວິດລອດຫຼືບໍ? ບໍ່ລອດເລີຍ ພວກເຂົາຈະຕ້ອງເບິ່ງງູທອງສຳລິດຕາມທີ່ພຣະເຈົ້າໄດ້ສັ່ງໄວ້ແລ້ວ.

ເຫດການນີ້ເກີດຂຶ້ນເມື່ອປະມານ 3,400 ປີມາແລ້ວ ພຣະເຈົ້າຊົງໃຫ້ເຫດການນີ້ຖືກບັນທຶກຢູ່ໃນພຣະຄຳພີ ເພື່ອພວກເຮົາຈະໄດ້ຮຽນຮູ້ວ່າ ພວກເຮົາຈຳເປັນທີ່ຈະຕ້ອງຟັງພຣະເຈົ້າແລະເຊື່ອໃນພຣະອົງ ຊົນຊາດອິດສະຣາເອນທັງຫຼາຍໄດ້ພະເນຈອນຢູ່ໃນຖິ່ນທຸລະກັນດານເປັນເວລາ 40 ປີ ແລະຄົນເຫຼົ່ານັ້ນທຸກຄົນຊຶ່ງປະຕິເສດທີ່ຈະເຊື່ອວ່າພຣະເຈົ້າຈະຊົງປະທານແຜ່ນດິນທີ່ຊົງສັນຍາໄວ້ໃຫ້ແກ່ເຂົາ ກໍຕາຍໄປໃນຖິ່ນທຸລະກັນດານນັ້ນ ນີ້ເປັນການລົງໂທດຂອງພຣະເຈົ້າທີ່ມີຕໍ່ພວກເຂົາທັງຫຼາຍ ເພາະພວກເຂົາປະຕິເສດທີ່ຈະເຊື່ອຄຳສັ່ງຫຼືພຣະຄຳຂອງພຣະອົງ ຊົນຊາດອິດສະຣາເອນໄດ້ຮັບພຣະຄຳຂອງພຣະເຈົ້າຜ່ານທາງໂມເຊສັນໃດ ເຮົາທັງຫຼາຍກໍໄດ້ຮັບພຣະຄຳຂອງພຣະເຈົ້າຜ່ານທາງພຣະຄຳພີສັນນັ້ນ ພຣະເຈົ້າຊົງຖືວ່າເຮົາຈະຕ້ອງຮັບຜິດຊອບໃນສິ່ງທີ່ເຮົາໄດ້ຮູ້ກ່ຽວກັບພຣະອົງ ພຣະເຈົ້າຊົງປະທານພຣະຄຳຂອງພຣະອົງແກ່ເຮົາເພື່ອເຮົາຈະໄດ້ເຊື່ອພຣະອົງ ຖ້າເຮົາປະຕິເສດທີ່ຈະເຊື່ອພຣະເຈົ້າແລ້ວ ເຮົາກໍຈະເປັນເໝືອນຊົນຊາດອິດສະຣາເອນ ຄືຈະຕ້ອງຕາຍໃນຄວາມບາບຂອງເຮົາ.

ໂມເຊຕາຍກ່ອນທີ່ພຣະເຈົ້າພ້ອມທີ່ຈະສົ່ງຊົນຊາດອິດສະຣາເອນເຂົ້າໄປໃນແຜ່ນດິນທີ່ຊົງສັນຍາໄວ້ພຽງເລັກນ້ອຍ ພຣະເຈົ້າຈຶ່ງຊົງແຕ່ງຕັ້ງໂຢຊວຍໃຫ້ເປັນຜູ້ນຳຄົນໃໝ່ຂອງຊົນຊາດອິດສະຣາເອນ ພຣະເຈົ້າໄດ້ຊົງໃຊ້ໂຢຊວຍໃຫ້ນຳຊົນຊາດຂອງພຣະອົງເຂົ້າ

ໄປໃນແຜ່ນດິນການາອານ ຄົນທີ່ອາໄສຢູ່ໃນແຜ່ນດິນນັ້ນໄດ້ຕໍ່ສູ້ກັບຊົນຊາດອິດສະຣາເອນ, ຢ່າງໃດກໍຕາມພຣະເຈົ້າຊົງປົກປ້ອງຄຸ້ມຄອງກອງທັບຂອງຊົນຊາດອິດສະຣາເອນແລະຊົງຊ່ວຍໃຫ້ສາມາດເອົາຊະນະຜູ້ຄົນທີ່ອາໄສຢູ່ໃນແຜ່ນດິນນັ້ນ.

ພຣະເຈົ້າໄດ້ຊົງສັນຍາວ່າຈະປະທານແຜ່ນດິນການາອານແກ່ຊົນຊາດອິດສະຣາເອນ ເຖິງແມ່ນວ່າຊາຕານແລະກະສັດຂອງປະເທດອີຢິບຈະພະຍາຍາມຂັດຂວາງບໍ່ໃຫ້ຊົນຊາດອິດສະຣາເອນເດີນທາງອອກຈາກປະເທດອີຢິບ ແລະເຖິງວ່າຊົນຊາດອິດສະຣາເອນທັງຫຼາຍຈະເກີດຄວາມສົງໄສໃນພຣະເຈົ້າຫຼາຍເທື່ອຫຼາຍທີກໍຕາມ ແຕ່ພຣະເຈົ້າກໍຍັງເຮັດສິ່ງທີ່ພຣະອົງໄດ້ຊົງສັນຍາໄວ້ແລ້ວພຣະອົງຊົງນຳພວກເຂົາ ຊົງປົກປ້ອງຄຸ້ມຄອງພວກເຂົາແລະຊົງປະທານອາຫານແລະນ້ຳເປັນເວລາ 40 ປີ ຂະນະທີ່ພວກເຂົາພະເນຈອນໃນຖິ່ນທຸລະກັນດານ ພຣະເຈົ້າບໍ່ເຄີຍປະປ່ອຍທີ່ຈະເຮັດສິ່ງໜຶ່ງສິ່ງໃດທີ່ພຣະອົງໄດ້ຊົງສັນຍາໄວ້.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 13 ໃນໜ້າ 76 *



ຄວາມຕາຍໄດ້ ພຣະເຈົ້າໄດ້ຊົງຊ່ວຍຊົນຊາດອິດສະຣາເອນໃຫ້ລອດພົ້ນອອກມາໄດ້ ແລະມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດຊ່ວຍເຮົາໃຫ້ລອດໄດ້ເຊັ່ນກັນ ພຣະເຢຊູກ່າວວ່າມີພຽງທາງດຽວເທົ່ານັ້ນທີ່ເຮົາຈະສາມາດໄດ້ຮັບການຊ່ວຍເຫຼືອໃຫ້ລອດພົ້ນຈາກຊາຕານຄວາມບາບແລະຄວາມຕາຍ ແລະບັງເກີດໃໝ່ເຂົ້າສູ່ຄອບຄົວຂອງພຣະເຈົ້າໄດ້ ພຣະເຢຊູຍັງກ່າວອີກວ່າ ພຣະອົງຈະຕ້ອງຖືກຍົກຂຶ້ນເໝືອນທີ່ງູທອງສຳລິດໄດ້ຖືກຍົກຂຶ້ນໃນຖິ່ນທຸລະກັນດານ ເພື່ອວ່າຜູ້ໃດທີ່ໄວ້ວາງໃຈໃນພຣະອົງຈະໄດ້ບັງເກີດໃໝ່ເຂົ້າສູ່ຄອບຄົວຂອງພຣະເຈົ້າແລະຈະໄດ້ເປັນລູກຂອງພຣະເຈົ້າ ທຸກຄົນທີ່ມອບຄວາມໄວ້ວາງໃຈໄວ້ກັບພຣະເຢຊູກໍຈະໄດ້ຮັບຊີວິດນິລັນດອນຈາກພຣະເຈົ້າ

ບໍ່ມີຜູ້ໃດຈຳເປັນຈະຕ້ອງຄອຍຖ້າຈົນກວ່າຈະຕາຍເພື່ອຈະຮູ້ວ່າຕົວພວກເຂົາເອງໄດ້ຮັບການຍອມຮັບຫຼືໄດ້ຮັບການປະຕິເສດຈາກພຣະເຈົ້າ ເພາະຄົນເຫຼົ່ານັ້ນທີ່ປະຕິເສດພຣະຜູ້ຊ່ວຍໃຫ້ລອດພົ້ນ ກໍຖືກພິພາກສາລົງໂທດແລະຖືກປະຕິເສດຈາກພຣະເຈົ້າ ດຽວນີ້ເອງ, ສ່ວນຜູ້ທີ່ເຫັນດ້ວຍກັບພຣະເຈົ້າແລະໄວ້ວາງໃຈໃນພຣະຜູ້ຊ່ວຍໃຫ້ລອດພົ້ນກໍຈະບໍ່ຖືກພິພາກສາລົງໂທດ ແລະໄດ້ຮັບການຍອມຮັບຈາກພຣະເຈົ້າແລ້ວ.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 17 ໃນໜ້າ 80 *

*ໂຢຮັນ 3:14-15 ໂມເຊໄດ້ຍົກງູຂຶ້ນໃນຖິ່ນທຸລະກັນດານສັນໃດ ບຸດມະນຸດຈະຕ້ອງຖືກຍົກຂຶ້ນສັນນັ້ນ ເພື່ອຜູ້ໃດທີ່ເຊື່ອໃນພຣະອົງຈະບໍ່ຈິບຫາຍ ແຕ່ມີຊີວິດນິລັນດອນ.*

ນີໂກເດມຍັງຄົງບໍ່ເຂົ້າໃຈວ່າລາວຈະເກີດໃໝ່ແລະຢູ່ໃນຄອບຄົວຂອງພຣະເຈົ້າໄດ້ຢ່າງໃດ ພຣະເຢຊູຈຶ່ງຊົງອະທິບາຍໂດຍເຕືອນພວກເຂົາໃຫ້ລະນຶກເຖິງເຫດການທີ່ໄດ້ເກີດຂຶ້ນກັບບັນພະບຸລຸດຂອງພວກຢິວໃນຖິ່ນທຸລະກັນດານ ຊາວອິດສະຣາເອນເຫຼົ່ານັ້ນໄດ້ກະທຳບາບຕໍ່ພຣະເຈົ້າ ພຣະອົງຈຶ່ງໃຫ້ງູພິດໄປກັດພວກເຂົາທັງຫຼາຍແລະພວກເຂົາກໍເລີ່ມລົ້ມຕາຍລົງ ເມື່ອພວກເຂົາກັບໃຈເສຍໃໝ່ພຣະເຈົ້າກໍສັ່ງໂມເຊໃຫ້ສ້າງງູທີ່ເຮັດຂຶ້ນຈາກທອງສຳລິດແລ້ວນຳໄປຕິດໄວ້ທີ່ເສົາ ພຣະເຈົ້າຊົງສັນຍາວ່າຜູ້ໃດກໍຕາມທີ່ຖືກງູກັດກໍໃຫ້ຫຼຽວໄປຍັງງູທອງສຳລິດນັ້ນແລ້ວພວກເຂົາກໍຈະມີຊີວິດລອດ.

ນີໂກເດມໄດ້ພະຍາຍາມທີ່ຈະຖືຮັກສາພຣະທຳຂອງພຣະເຈົ້າ ລາວບໍ່ໄດ້ຄິດວ່າການໃຊ້ຄວາມພະຍາຍາມຂອງຕົນເອງນັ້ນບໍ່ສາມາດທີ່ຈະເຮັດໃຫ້ລາວເປັນທີ່ຍອມຮັບຂອງພຣະເຈົ້າໄດ້ໂດຍສິ້ນເຊີງ ພວກເຂົາຈຳເປັນທີ່ຈະຕ້ອງກະທຳສິ່ງທີ່ຊາວອິດສະຣາເອນທັງຫຼາຍໄດ້ກະທຳມາແລ້ວ ຄືພຽງແຕ່ເຊື່ອແລະວາງໃຈໃນອົງພຣະຜູ້ເປັນເຈົ້າເທົ່ານັ້ນ ເຮົາທັງຫຼາຍຕ່າງກໍຕົກຢູ່ໃນສະພາບດຽວກັບນີໂກເດມ, ເມື່ອອາດາມໄດ້ກະທຳຄວາມບາບຕໍ່ພຣະເຈົ້າ ລາວກໍຕາຍໄປ ບັດນີ້ເຊື້ອສາຍທຸກຄົນຂອງອາດາມກໍຖືກແຍກອອກຈາກພຣະເຈົ້າແລ້ວ ຄ່າຈ້າງສຳລັບຄວາມບາບຄືຄວາມຕາຍ ຊົນຊາດອິດສະຣາເອນທັງຫຼາຍບໍ່ສາມາດຊ່ວຍເຫຼືອຕົນເອງໃຫ້ລອດຈາກງູເຫຼົ່ານັ້ນເໝືອນທີ່ເຮົາບໍ່ສາມາດຊ່ວຍຕົນຂອງເຮົາເອງໃຫ້ລອດພົ້ນຈາກ



# ບົດທີ 14

# ຍຸກຜູ້ປົກຄອງແລະກະສັດ

ຫຼັງຈາກທີ່ໂຢຊວຍຕາຍໄປບໍ່ດົນ ຊົນຊາດອິດສະຣາເອນກໍລືມພຣະເຈົ້າ ພວກເຂົາໄດ້ຫັນໄປປະພຶດຕາມວິທີຂອງປະຊາຊາດທັງຫຼາຍທີ່ບໍ່ຮູ້ຈັກພຣະເຈົ້າທ່ຽງແທ້ຜູ້ຊົງພຣະຊົນຢູ່ ໃນບໍ່ຊ້າພວກເຂົາກໍສ້າງຮູບເຄົາລົບ ແລະນະມັດສະການຮູບເຄົາລົບເຫຼົ່ານັ້ນແທນພຣະເຈົ້າ, ພຣະເຈົ້າຊົງປາຖະໜາທີ່ຈະຂັບໄລ່ຜູ້ທີ່ອາໄສຢູ່ໃນແຜ່ນດິນການາອານໃຫ້ອອກໄປເສຍຈາກແຜ່ນດິນທີ່ຊົງສັນຍາໄວ້ ເພື່ອຈະປະທານແຜ່ນດິນນັ້ນແກ່ຊົນຊາດອິດສະຣາເອນ ຢ່າງໃດກໍຕາມພວກເຂົາໄດ້ປະຕິເສດທີ່ຈະເຊື່ອແລະບໍ່ເຊື່ອຟັງພຣະເຈົ້າ ພຣະອົງຈຶ່ງຊົງປ່ອຍໃຫ້ຊາວການາອານບາງສ່ວນອາໄສຢູ່ໃນແຜ່ນດິນນັ້ນຕໍ່ໄປ.

ຊາວອິດສະຣາເອນໄດ້ຕັ້ງຖິ່ນຖານທ່າມກາງກຸ່ມຄົນເຫຼົ່ານີ້ ແຕ່ແທນທີ່ພວກເຂົາທັງຫຼາຍຈະໄວ້ວາງໃຈພຣະເຈົ້າພວກເຂົາກັບຮັບເອົາທຳນຽມປະຕິບັດອັນຊົ່ວຮ້າຍຂອງຊາວການາອານທັງຫຼາຍມາຍຶດຖືເປັນຂອງຕົນເອງ ຊາວການາອານນະມັດສະການພະທຽມອັນໄດ້ແກ່ພະບາອານແລະພະອັດທາໂລດ ພວກເຂົາຄິດວ່າພະເຫຼົ່ານີ້ເປັນພຣະເຈົ້າທ່ຽງແທ້ ແຕ່ບໍ່ໄດ້ສຳນຶກວ່າຊາຕານກຳລັງລໍ້ລວງພວກເຂົາໃຫ້ນະມັດສະການຕົວຊາຕານເອງ ເມື່ອຜູ້ໃດຜູ້ໜຶ່ງບໍ່ໄດ້

ນະມັດສະການພຣະເຈົ້າທ່ຽງແທ້ຜູ້ຊົງພຣະຊົນຢູ່ ທີ່ຈິງແລ້ວພວກເຂົາກໍນະມັດສະການຊາຕານນັ້ນເອງ ຊາຕານກຽດຊັງພຣະເຈົ້າແລະບໍ່ຕ້ອງການທີ່ຈະໃຫ້ຄົນໃດທີ່ຈະນະມັດສະການພຣະອົງ.



ພຣະເຈົ້າຊົງລົງໂທດຊົນຊາດອິດສະຣາເອນ ເພາະພວກເຂົາໄດ້ຫຼົງລືມພຣະອົງແລະນະມັດສະການຮູບເຄົາລົບ ພຣະເຈົ້າຊົງປ່ອຍໃຫ້ປະຊາຊາດທັງຫຼາຍທີ່ອາໄສຢູ່ອ້ອມຮອບ ຮົບຊະນະພວກອິດສະຣາເອນແລະບັງຄັບພວກເຂົາເປັນຂ້າທາດ ພຣະເຈົ້າເຄີຍເຕືອນພວກເຂົາໄວ້ແລ້ວວ່າ ເຫດການນີ້ຈະເກີດຂຶ້ນ ແຕ່ພວກເຂົາບໍ່ຍອມຟັງພຣະອົງ, ເມື່ອໃດກໍຕາມທີ່ຊົນຊາດອິດສະຣາເອນກັບມາຫາພຣະເຈົ້າ ພຣະເຈົ້າກໍຈະເລືອກຊາຍຜູ້ໜຶ່ງມານຳພວກເຂົາໃຫ້ຫຼຸດພົ້ນຈາກອຳນາດຂອງສັດຕູ ຜູ້ທີ່ໄດ້ຮັບການເລືອກສັນຈາກພຣະເຈົ້າ ນີ້ເອີ້ນວ່າຜູ້ປົກຄອງ. ດັ່ງນັ້ນຊ່ວງເວລາໃນຍຸກນີ້ຈຶ່ງເອີ້ນວ່າ ຍຸກຜູ້ປົກຄອງ ເມື່ອຊົນຊາດອິດສະຣາເອນທັງຫຼາຍຫຼົງລືມພຣະເຈົ້າແລະຫັນໄປບູຊາຮູບເຄົາລົບ ພຣະເຈົ້າກໍຈະປ່ອຍໃຫ້ພວກເຂົາຕ້ອງປະລາໄຊຕໍ່ສັດຕູ ແລະທຸກເທື່ອທີ່ພວກເຂົາກັບໃຈມາຫາພຣະເຈົ້າ ພຣະເຈົ້າກໍຈະໃຫ້



*ພຣະເຢຊູກ່າວຕອບວ່າ "ເຮົາບອກຄວາມຈິງແກ່ທ່ານວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດຈາກນໍ້າແລະພຣະວິນຍານ ຜູ້ນັ້ນຈະເຂົ້າໃນອານາຈັກຂອງພຣະເຈົ້າບໍ່ໄດ້ ສິ່ງບັງເກີດຈາກເນື້ອໜັງກໍເປັນເນື້ອໜັງ ແລະສິ່ງບັງເກີດຈາກພຣະວິນຍານກໍຄືຈິດວິນຍານ ຢ່າປະຫຼາດໃຈທີ່ເຮົາບອກທ່ານວ່າ ທ່ານຕ້ອງບັງເກີດໃໝ່... "*

ນີໂກເດມ ຮູ້ສຶກປະຫຼາດໃຈຢ່າງຍິ່ງທີ່ໄດ້ຍິນພຣະເຢຊູກ່າວເຊັ່ນນັ້ນ ພວກເຂົາຄິດວ່າພຣະເຢຊູຄົງໝາຍຄວາມວ່າມະນຸດຈະຕ້ອງບັງເກີດເປັນເດັກນ້ອຍເທື່ອທີ່ສອງ. ນໍ້າທີ່ພຣະເຢຊູກ່າວເຖິງນັ້ນບໍ່ແມ່ນການຮັບບັບຕິສະມາ ເພາະພິທີບັບຕິສະມາບໍ່ສາມາດຈະເຮັດໃຫ້ເຮົາເປັນບຸດຂອງພຣະເຈົ້າຫຼືສາມາດຊໍາລະຄວາມບາບຂອງເຮົາໄດ້ ພຣະເຢຊູບໍ່ໄດ້ກ່າວເຖິງການບັງເກີດຝ່າຍຮ່າງກາຍເໝືອນຢ່າງທີ່ນີໂກເດມກໍາລັງຄິດຢູ່ ແຕ່ກ່າວເຖິງການບັງເກີດຝ່າຍຈິດວິນຍານທີ່ກະທໍາໂດຍພຣະວິນຍານບໍລິສຸດ

ພຣະເຢຊູກໍາລັງອະທິບາຍເຖິງການບັງເກີດໃໝ່ ຊຶ່ງກໍຄືການທີ່ບຸກຄົນໜຶ່ງສາມາດຮັບຈິດໃຈໃໝ່ ສາມາດຈະຮັກແລະເຊື່ອຟັງພຣະເຈົ້າ ແລະໄດ້ຮັບຊີວິດໃໝ່ໂດຍການໄດ້ຟັງ ເຂົ້າໃຈແລະເຊື່ອພຣະຄໍາຂອງພຣະເຈົ້າ ພວກເຂົາທັງຫຼາຍຈະໄດ້ຮັບການປ່ຽນແປງໂດຍພຣະວິນຍານບໍລິສຸດ ເພື່ອວ່າພວກເຂົາຈະສາມາດຮູ້ຈັກພຣະເຈົ້າ ເຂົ້າໃຈພຣະຄໍາຂອງພຣະອົງສາມາດຈະຮັກພຣະອົງ ແລ້ວພວກເຂົາຈະຫຼຸດພົ້ນຈາກການຄວບຄຸມຂອງຊາຕານ ແລະເຂົ້າສູ່ອານາຈັກຂອງພຣະເຈົ້າໄດ້.

ເຂົາຈິ່ງຕົກຢູ່ໃຕ້ການຄວບຄຸມຂອງຊາຕານ ກາອິນ, ອາເບັນແລະຄົນທັງປວງທີ່ເກີດມາໃນໂລກຕັ້ງແຕ່ເວລານັ້ນເປັນຕົ້ນມາກໍເກີດມາໂດຍບໍ່ສາມາດຈະຮູ້ຈັກ, ເຂົ້າໃຈ, ຮັກແລະເຊື່ອຟັງພຣະເຈົ້າໄດ້. ມະນຸດທຸກຄົນທີ່ອາໄສຢູ່ໃນທຸກສະຖານທີ່ບໍ່ວ່າຈະມີເຊື້ອຊາດ, ສີຜິວ, ຫຼືເວົ້າພາສາໃດຕ່າງກໍເກີດມາພາຍໃຕ້ອຳນາດຂອງຊາຕານທັງໝົດ.

ພຣະເຢຊູຊົງບອກແກ່ນີໂກເດມວ່າ ຫົນທາງດຽວທີ່ຜູ້ໃດຜູ້ໜຶ່ງຈະສາມາດໜີພົ້ນຈາກອຳນາດຂອງຊາຕານແລະສາມາດຈະຮູ້ຈັກຮັກແລະເຊື່ອຟັງພຣະເຈົ້າໄດ້ຄືການບັງເກີດໃໝ່ນັ້ນເອງ ພຣະເຢຊູກຳລັງບອກແກ່ນີໂກເດມວ່າ ລາວຈະຕ້ອງຮັບຄວາມຄິດແລະຈິດໃຈໃໝ່ ຊຶ່ງຈະເຮັດໃຫ້ລາວສາມາດຮູ້ຈັກແລະເຂົ້າໃຈພຣະເຈົ້າໄດ້. ເຮົາທັງຫຼາຍບໍ່ຕ້ອງເຮັດຫຍັງເພື່ອຈະເກີດມາພາຍໃຕ້ການຄວບຄຸມຂອງຊາຕານ ແລະເຮົາກໍບໍ່ສາມາດຈະເຮັດສິ່ງໜຶ່ງສິ່ງໃດເພື່ອຈະໜີໃຫ້ພົ້ນຈາກຊາຕານແລະປ່ຽນແປງຊີວິດຂອງເຮົາໃຫ້ເປັນທີ່ພໍພຣະໄທພຣະເຈົ້າໄດ້ ການກະທຳຄວາມດີຂອງເຮົາບໍ່ສາມາດຈະນຳເຮົາອອກຈາກອານາຈັກຂອງຊາຕານແລະເຂົ້າໄປສູ່ອານາຈັກຂອງພຣະເຈົ້າໄດ້ ມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດຈະນຳເຮົາເຂົ້າສູ່ອານາຈັກຂອງພຣະອົງໄດ້ ພຣະອົງຊົງມີລິດທານຸພາບສູງສຸດແລະບໍ່ມີສິ່ງໃດທີ່ເປັນໄປບໍ່ໄດ້ສຳລັບພຣະອົງ ແລະໂດຍລິດອຳນາດຂອງພຣະອົງພຣະອົງກໍສາມາດຈະກະທຳໃຫ້ຄົນບັງເກີດໃໝ່ຝ່າຍຈິດວິນຍານເພື່ອເຂົ້າສູ່ຄອບຄົວຂອງພຣະເຈົ້າໄດ້.

*ໂຢຮັນ 3:4-7 ນີໂກເດມ ທູນພຣະອົງວ່າ "ຄົນຊະລາແລ້ວຈະບັງເກີດໃໝ່ຢ່າງໃດໄດ້ ຈະເຂົ້າໃນມົດລູກແມ່ເທື່ອທີ່ສອງແລະບັງເກີດໃໝ່ໄດ້ຫຼື"*



ມີຜູ້ປົກຄອງຄົນໃໝ່ເກີດຂຶ້ນ ເພື່ອນຳພວກເຂົາໃຫ້ລອດພົ້ນແລະປົກຄອງເໜືອພວກເຂົາ, ຫຼັງຈາກທີ່ຜູ້ປົກຄອງຄົນນັ້ນຕາຍໄປແລ້ວ ຊົນຊາດອິດສະຣາເອນກໍກັບໄປບູຊາຮູບເຄົາລົບອີກແລະວັດທະຈັກດຽວກັນນີ້ໄດ້ເກີດຂຶ້ນຊ້ຳແລ້ວຊ້ຳອີກເປັນເວລາດົນເຖິງ 350 ປີ.

ຊົນຊາດອິດສະຣາເອນເປັນຊົນຊາດທີ່ໄດ້ປຽບທີ່ສຸດໃນບັນດາຊົນຊາດທັງຫຼາຍ ເພາະຜູ້ປົກຄອງແລະກະສັດຂອງພວກເຂົາຄືພຣະເຈົ້ານັ້ນເອງ ແຕ່ຫຼັງຈາກທີ່ຍຸກຜູ້ປົກຄອງໄດ້ຜ່ານພົ້ນໄປແລ້ວ ພວກອິດສະຣາເອນກໍປະຕິເສດພຣະເຈົ້າແລະທູນຂໍທີ່ຈະມີກະສັດເໝືອນກັບປະເທດທັງຫຼາຍທີ່ອາໄສຢູ່ໂດຍອ້ອມຮອບ ມີກະສັດຫຼາຍອົງທີ່ໄດ້ຄອບຄອງເໜືອຊົນຊາດອິດສະຣາເອນເປັນໄລຍະເວລາເຖິງ 450 ປີ ໃນບັນດາກະສັດເຫຼົ່ານີ້ມີພຽງບໍ່ເທົ່າໃດພະອົງເທົ່ານັ້ນທີ່ເຊື່ອແລໄວ້ວາງໃຈພຣະເຈົ້າ.

ດາວິດຊົງເປັນກະສັດທີ່ຍິ່ງໃຫຍ່ທີ່ສຸດຂອງປະເທດອິດສະຣາເອນ ພະອົງຊົງເປັນກະສັດທີ່ແຕກຕ່າງຈາກກະສັດອົງອື່ນໆທີ່ໄດ້ຄອບຄອງເໜືອຊົນຊາດອິດສະຣາເອນ ເພາະກະສັດດາວິດເຊື່ອໃນພຣະເຈົ້າຢ່າງແທ້ຈິງແລະປາຖະໜາທີ່ຈະເຊື່ອຟັງພຣະອົງໃນທຸກເລື່ອງ ກະສັດດາວິດກໍເໝືອນກັບເຮົາທັງຫຼາຍທຸກຄົນທີ່ເກີດມາເປັນຄົນບາບແລະຖືກແຍກຈາກພຣະເຈົ້າ ກະສັດດາວິດຊົງຮູ້ວ່າພະອົງເອງເປັນຄົນບາບແລະຊົງຮູ້ວ່າຄ່າຈ້າງຂອງຄວາມບາບຄືຄວາມຕາຍ ພະອົງຊົງຮູ້ວ່າຄວາມຫວັງພຽງຢ່າງດຽວຂອງພະອົງ ກໍຄືການຍອມຮັບພຣະເມດຕາຂອງພຣະເຈົ້າແລະການອະໄພໂທດຈາກພຣະອົງ, ກະສັດດາວິດຊົງຖວາຍເຄື່ອງບູຊາດ້ວຍເລືອດສຳລັບ

ຄວາມບາບທັງຫຼາຍຂອງຕົນເອງ ແລະພຣະເຈົ້າກໍຊົງຍອມຮັບດາວິດເຊັ່ນດຽວກັບທີ່ຍອມຮັບອາເບັນ ໂນອາ ອັບຣາຮາມ ໂມເຊ ແລະໂຢຊວຍ. ນອກຈາກນີ້ ພຣະເຈົ້າຍັງຊົງສັນຍາກັບດາວິດວ່າ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຈະສະເດັດມານັ້ນຈະເປັນເຊື້ອສາຍຄົນໜຶ່ງຂອງກະສັດດາວິດ.

ກະສັດດາວິດຍັງເປັນຜູ້ປະກາດພຣະທຳຄົນໜຶ່ງຂອງພຣະເຈົ້າດ້ວຍ ພຣະເຈົ້າຊົງເລືອກກະສັດດາວິດໃຫ້ຂຽນພຣະທຳເພງສັນລະເສີນຫຼາຍບົດໃນພຣະຄຳພີ ກະສັດດາວິດເປັນຄົນລ້ຽງແກະກ່ອນທີ່ພະອົງຈະຊົງຂຶ້ນຄອງລາດເປັນກະສັດຂອງປະເທດອິດສະຣາເອນ. ພຣະທຳເພງສັນລະເສີນບາງບົດກໍເກີດຂຶ້ນໂດຍອາໄສຈິນຕະນາການທີ່ມາຈາກຄວາມຮູ້ເລື່ອງການລ້ຽງແກະຂອງກະສັດດາວິດນັ້ນເອງ, ພຣະເຈົ້າຊົງໃຊ້ຈິນຕະນາການໃນເລື່ອງນີ້ເພື່ອຈະອະທິບາຍແກ່ເຮົາວ່າ ສະພາບຂອງເຮົາທັງຫຼາຍໃນຖານະທີ່ເປັນຄົນບາບກໍເໝືອນກັບແກະທີ່ຫຼົງຫາຍ ເຮົາຈຳເປັນທີ່ຈະຕ້ອງມີຜູ້ລ້ຽງແກະທີ່ມີຄວາມເມດຕາກະລຸນາ ແຂງແກ່ນແລະມີປັນຍາເພື່ອຈະປ້ອງກັນເຮົາບໍ່ໃຫ້ຫຼົງຫາຍແລະນຳເຮົາໃຫ້ເດີນໃນເສັ້ນທາງທີ່ຖືກຕ້ອງ ພຣະເຈົ້າຊົງເປັນຜູ້ດຽວເທົ່ານັ້ນທີ່ສາມາດຈະກະທຳສິ່ງເຫຼົ່ານີ້ເພື່ອເຮົາທັງຫຼາຍໄດ້.

ຫຼັງຈາກທີ່ກະສັດດາວິດໄດ້ສິ້ນພະຊົນແລ້ວ ຊາໂລໂມນໂອລົດຂອງກະສັດດາວິດກໍຂຶ້ນຄອງລາຊະສົມບັດສືບທອດຕໍ່ໄປ, ຄວາມມັ່ງຄັ່ງຂອງກະສັດຊາໂລໂມນນັ້ນເກີນກວ່າທີ່ໃຜໆຈະຄາດຫວັງໄດ້ ກະສັດຊາໂລໂມນໄດ້ສ້າງພຣະວິຫານທີ່ສວຍງາມສຳລັບ



*ໂຢຮັນ 3:1-3 ມີຊາຍຄົນໜຶ່ງໃນພວກຟາຣີຊາຍຊື່ນີໂກເດມ ເປັນເຈົ້ານາຍຂອງພວກຢິວ. ຜູ້ນີ້ໄດ້ມາຫາພຣະເຢຊູໃນເວລາກາງຄືນ ທູນພຣະອົງວ່າ "ພຣະອາຈານເອີຍ,ພວກຂ້ານ້ອຍຊາບຢູ່ວ່າທ່ານເປັນຄູທີ່ມາຈາກພຣະເຈົ້າ ເພາະບໍ່ມີຜູ້ໃດອາດເຮັດໝາຍສຳຄັນທີ່ທ່ານເຮັດຢູ່ນັ້ນ ເວັ້ນແຕ່ພຣະເຈົ້າຊົງສະຖິດຢູ່ນຳ" ພຣະເຢຊູຊົງຕອບວ່າ "ເຮົາບອກທ່ານຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ບັງເກີດມາໃໝ່ ຜູ້ນັ້ນຈະເຫັນລາຊະແຜ່ນດິນຂອງພຣະເຈົ້າບໍ່ໄດ້.*



ຄົນຢິວໂດຍສະເພາະແມ່ນພວກຟາຣີຊາຍຮູ້ສຶກຈອງຫອງຫຼາຍ ພວກເຂົາເປັນເຊື້ອສາຍຂອງອັບຣາຮາມ ພວກເຂົາຄິດວ່າຕົນເອງຢູ່ໃນຄອບຄົວຂອງພຣະເຈົ້າເພາະພວກເຂົາເປັນລູກຫຼານຂອງອັບຣາຮາມ ພວກເຂົາບໍ່ໄດ້ຄິດວ່າມະນຸດທຸກຄົນທີ່ເກີດມາໃນໂລກກໍເກີດມາພາຍໃຕ້ການຄອບຄອງຂອງຊາຕານ ເມື່ອອາດາມແລະເອວາໄດ້ກະທຳບາບ ພວກເຂົາກໍຕາຍຝ່າຍຈິດວິນຍານແລະຖືກແຍກອອກຈາກພຣະເຈົ້າ ພວກເຂົາຍັງຄົງມີຈິດໃຈ ແຕ່ບັດນີ້ບໍ່ສາມາດຈະຮູ້ຈັກພຣະເຈົ້າ ແລະເຂົ້າໃຈພຣະຄຳຂອງພຣະອົງໄດ້ ພວກ

ທຸກຢ່າງໃນໂລກນີ້ເກີດຂຶ້ນເນື່ອງຈາກຄວາມບາບຂອງມະນຸດແລະການຄອບຄອງຂອງຊາຕານ ອົງພຣະຜູ້ເປັນເຈົ້າຊົງຫ່ວງໃຍທ່ານດ້ວຍ ພຣະອົງບໍ່ຊົງປ່ຽນແປງເລີຍ ພຣະອົງຍັງເໝືອນເດີມໃນປະຈຸບັນ ພຣະອົງຊົງຮູ້ວ່າເຮົາຍັງຢູ່ໃຕ້ອຳນາດຂອງຊາຕານຫຼືບໍ່? ແລະອົງພຣະຜູ້ເປັນເຈົ້າຊົງປາຖະໜາທີ່ຈະຊ່ວຍກອບກູ້ມະນຸດທຸກຄົນໃຫ້ລອດພົ້ນຈາກການຄອບຄຸມຂອງຊາຕານ.

*ມາຣະໂກ 1:40-42 ຄົນຂີ້ທູດຜູ້ໜຶ່ງໄດ້ມາຫາພຣະອົງຂໍໃຫ້ພຣະອົງຊົງໂຜດຊ່ວຍ, ລາວໄດ້ຄຸເຂົ່າລົງທູນວ່າ "ຖ້າທ່ານພໍໃຈກໍອາດຈະເຮັດໃຫ້ຂ້ານ້ອຍດີສະອາດໄດ້". ພຣະເຢຊູຈຶ່ງມີພຣະໄທສົງສານຄົນນັ້ນແລ້ວຊົງຢຽດພຣະຫັດອອກຖືກລາວຊົງກ່າວວ່າ "ເຮົາພໍໃຈແລ້ວຈົ່ງດີສະອາດເສຍ" ແລະໃນທັນໃດນັ້ນພະຍາດຂີ້ທູດກໍຫາຍດີແລະຄົນນັ້ນກໍສະອາດ.*

ຊາຍຜູ້ນີ້ຮູ້ວ່າລາວບໍ່ສາມາດປິ່ນປົວຕົນເອງໃຫ້ຫາຍດີໄດ້ ແລະຮູ້ວ່າບໍ່ມີໃຜຈະສາມາດຊ່ວຍລາວໄດ້ ແຕ່ພຣະເຢຊູນັ້ນແຕກຕ່າງຈາກຜູ້ອື່ນຢ່າງສິ້ນເຊີງ ລາວຄິດວ່າພຣະເຢຊູຈະສາມາດຊ່ວຍລາວໄດ້ ລາວເຂົ້າມາຫາພຣະເຢຊູເພື່ອທູນຂໍພຣະເມດຕາແລະຄວາມຊ່ວຍເຫຼືອຈາກພຣະອົງ ການເຈັບປ່ວຍດ້ວຍພະຍາດຂີ້ທູດກໍເໝືອນກັບຄວາມບາບໃນຊີວິດຂອງເຮົາ ບໍ່ມີທາງທີ່ເຮົາຈະສາມາດກຳຈັດຄວາມບາບອອກຈາກຊີວິດຂອງເຮົາໄດ້ ມີພຽງພຣະເຢຊູຄຣິດເທົ່ານັ້ນທີ່ສາມາດຊ່ວຍເຮົາທັງຫຼາຍໄດ້ ໃນຍຸກພຣະຄຳພີ ຄົນພະຍາດຂີ້ທູດເປັນກຸ່ມຄົນທີ່ບໍ່ມີໃຜຄົບຄ້າສະມາຄົມຫຼືແມ່ນແຕ່ຈະຍ່າງເຂົ້າໄປໃກ້ໆ ພຣະເຢຊູຊົງແຕະຊາຍຜູ້ນີ້ເພາະພຣະອົງຊົງຮັກລາວ ພຣະເຢຊູພຽງແຕ່ສັ່ງເທົ່ານັ້ນພະຍາດຂີ້ທູດກໍຫາຍໄປທັນທີ.



ເປັນທີ່ປະທັບຂອງພຣະເຈົ້າ ແຕ່ຫຼັງຈາກທີ່ກະສັດຊາໂລໂມນສິ້ນພະຊົນແລ້ວ ຊົນຊາດອິດສະຣາເອນກໍເກີດການໂຕ້ແຍ້ງກັນວ່າ ໃຜສົມຄວນຈະໄດ້ເປັນກະສັດອົງຕໍ່ໄປ ແລະໃນທີ່ສຸດພວກເຂົາກໍແຍກອອກເປັນ 2 ອານາຈັກ ຊົນເຜົ່າ 10 ຕະກຸນທີ່ອາໄສຢູ່ທາງເໜືອເອີ້ນວ່າ ອິດສະຣາເອນ ສ່ວນອີກ 2 ຕະກຸນທີ່ຢູ່ທາງໃຕ້ນັ້ນ ເອີ້ນວ່າຢູດາ.

ພຣະເຈົ້າຊົງຮັກມະນຸດທຸກຄົນຈາກທຸກປະເທດແລະທຸກວັດທະນະທຳ ພຣະອົງຊົງປາຖະໜາໃຫ້ມະນຸດທຸກຄົນໄດ້ຮັບການຊ່ວຍໃຫ້ຫຼຸດພົ້ນຈາກອຳນາດຂອງຊາຕານ ຄວາມບາບແລະຄວາມຕາຍ. ດັ່ງນັ້ນ ຕັ້ງແຕ່ທຳອິດມາແລ້ວທີ່ພຣະເຈົ້າໄດ້ສົ່ງຜ່ານບັນດາ "ຜູ້ສົ່ງຂ່າວ" ຂອງພຣະອົງເພື່ອຈະສອນໃຫ້ມະນຸດຮູ້ຈັກທາງທັງຫຼາຍຂອງພຣະອົງແລະເພື່ອຈະເຕືອນພວກເຂົາໃຫ້ຮູ້ເຖິງການພິພາກສາຂອງພຣະອົງຊຶ່ງເປັນຜົນຈາກຄວາມບາບຂອງພວກເຂົານັ້ນເອງ "ຜູ້ສົ່ງຂ່າວ" ຂອງພຣະເຈົ້າເອີ້ນວ່າ ຜູ້ປະກາດພຣະທຳ. ທັງ ເອຊາຢາ, ເຢເຣມີຢາ, ເອເສກຽນແລະດານຽນ ຕ່າງກໍເປັນ "ຜູ້ສົ່ງຂ່າວ" ຂອງພຣະເຈົ້າທີ່ຮູ້ຈັກກັນໂດຍທົ່ວໄປ ທ່ານຈະພົບວ່າຊື່ຕ່າງໆ ເຫຼົ່ານີ້ ແລະຊື່ຂອງຜູ້ປະກາດພຣະທຳຄົນອື່ນໆ ໄດ້ຖືກນຳມາໃຊ້ເປັນຊື່ພຣະທຳໃນພຣະຄຳພີເດີມຊຶ່ງຜູ້ປະກາດພຣະທຳເຫຼົ່ານີ້ໄດ້ຂຽນຂຶ້ນ.

ບັນດາຜູ້ປະກາດພຣະທຳຂອງພຣະເຈົ້າໄດ້ປະກາດໃຫ້ປະຊາຊົນກັບໃຈໃໝ່ແລະໄວ້ວາງໃຈໃນພຣະເຈົ້າພຽງແຕ່ພຣະອົງດຽວ, ການກັບໃຈໃໝ່ໝາຍເຖິງການມີຈິດໃຈທີ່ປ່ຽນແປງໃໝ່ ຊຶ່ງສົ່ງຜົນໃຫ້ເກີດການປ່ຽນແປງທັດສະນະຄະຕິແລະເປົ້າໝາຍໃນຊີວິດ ການທີ່

ກັບໃຈໃໝ່ນັ້ນຄືການເຫັນດ້ວຍກັບພຣະເຈົ້າແລະການກຽດຊັງຄວາມບາບຂອງເຮົາເອງ ຊາວອິດສະຣາເອນຈຳນວນຫຼາຍ ນະມັດສະການພຣະເຈົ້າໃນພຣະວິຫານທີ່ກະສັດຊາໂລໂມນໄດ້ຊົງສ້າງຂຶ້ນແລະຍັງນະມັດສະການຮູບເຄົາລົບດ້ວຍ ບັນດາຜູ້ປະກາດພຣະທຳຈຶ່ງບອກໃຫ້ປະຊາຊົນເລືອກວ່າພວກເຂົາຈະນະມັດສະການຜູ້ໃດ ພຣະເຈົ້າຫຼືຮູບເຄົາລົບ ຜູ້ປະກາດພຣະທຳເຫຼົ່ານີ້ໄດ້ບອກເຂົາທັງຫຼາຍວ່າພວກເຂົາບໍ່ສາມາດຈະນະມັດສະການພຣະເຈົ້າໄດ້ຢ່າງແທ້ຈິງຖ້າພວກເຂົາຍັງນະມັດສະການສິ່ງອື່ນດ້ວຍ.

ຫຼາຍຮ້ອຍປີກ່ອນທີ່ພຣະຜູ້ຊ່ວຍໃຫ້ລອດພົ້ນຈະສະເດັດມາ ພຣະເຈົ້າໄດ້ຊົງທຳນວາຍຫຼາຍສິ່ງກ່ຽວກັບພຣະຜູ້ຊ່ວຍໃຫ້ລອດພົ້ນໂດຍຜ່ານທາງບັນດາຜູ້ປະກາດພຣະທຳເຫຼົ່ານີ້ ຄຳທຳນວາຍທັງຫຼາຍໄດ້ຖືກບັນທຶກໄວ້ໃນພຣະຄຳພີ ຄຳທຳນວາຍກ່ຽວກັບພຣະຜູ້ຊ່ວຍໃຫ້ລອດພົ້ນມີຈຳນວນຫຼາຍກວ່າ 300 ຄຳທຳນວາຍ ລາຍການຂ້າງລຸ່ມ 20 ລາຍການນີ້ ເປັນຄຳທຳນວາຍທີ່ມີຊື່ສຽງ ພຣະເຈົ້າໄດ້ຊົງປະທານຄຳທຳນວາຍເຫຼົ່ານີ້ເພື່ອວ່າຈະບໍ່ມີໃຜພາດທີ່ຈະພົບພຣະອົງເມື່ອພຣະອົງສະເດັດມາແລ້ວ ພຣະເຈົ້າຊົງປາຖະໜາທີ່ຈະໃຫ້ພວກເຂົາຮູ້ວ່າ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ຈະເປັນຜູ້ໃດ ແລະພຣະອົງຈະສະເດັດມາເມື່ອໃດ ຄຳທຳນວາຍເຫຼົ່ານີ້ທັງໝົດໄດ້ຖືກປະທານໃຫ້ແກ່ມະນຸດເມື່ອ 400-1000 ປີ ກ່ອນທີ່ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ຈະກຳເນີດມາ. ຖ້າຈະປຽບທຽບໃນເລື່ອງນີ້ກໍຂໍໃຫ້ທ່ານລອງຈິນຕະນາການເຖິງການທຳນວາຍກ່ຽວກັບຜູ້ໃດຜູ້ໜຶ່ງທີ່ຈະມີຊີວິດຢູ່ນີ້ໃນອີກ 400, 700 ຫຼື 1 000 ປີຂ້າງໜ້າ ໂດຍທີ່ຄຳທຳນວາຍເຫຼົ່ານີ້ຈະລວມໄປເຖິງເມືອງທີ່ຄົນໆນັ້ນຈະເກີດມາ ມານດາ, ວົງຕະກຸນ, ເຫດ



*ມາຣະໂກ 1:23-25 ຂະນະນັ້ນ ໃນໂຮງທຳ ມີຄົນທີ່ມີຜີກ່ອຍຮ້າຍສິງຢູ່ແລະໄດ້ຮ້ອງຂຶ້ນວ່າ "ເຢຊູໄທນາຊາເລັດເອີຍ, ທ່ານມາຫຍຸ້ງກ່ຽວກັບພວກເຮົາເຮັດຫຍັງ ທ່ານມາທຳລາຍພວກເຮົາຫຼື ທ່ານແມ່ນຜູ້ໃດພວກເຮົາກໍຮູ້ແລ້ວ ທ່ານຄືຜູ້ບໍລິສຸດຂອງພຣະເຈົ້າ", ພຣະເຢຊູຊົງຫ້າມມັນວ່າ "ມິດແມ ອອກຈາກຄົນນີ້ເສຍ".*

ໂຮງທຳເປັນສະຖານທີ່ ທີ່ຊາວຢິວມາປະຊຸມກັນເພື່ອນະມັດສະການພຣະເຈົ້າ ວິນຍານຊົ່ວຫຼືຜີຮ້າຍ ຄືຜີປີສາດທັງຫຼາຍຊຶ່ງເມື່ອກ່ອນເຄີຍເປັນເທວະດາທີ່ໄດ້ກະບົດຂັດຂືນຕໍ່ພຣະເຈົ້າແລະປະພຶດຕາມຊາຕານ ພວກມັນມັກເຂົ້າສິງໃນຄົນແລະຄວບຄຸມຄົນໆນັ້ນ ຊາຕານແລະຜີປີສາດທັງຫຼາຍຮູ້ວ່າພຣະເຢຊູຊົງເປັນພຣະເຈົ້າ ຊຶ່ງເປັນພຣະຜູ້ສ້າງຂອງພວກມັນ ພວກມັນຍັງຮູ້ອີກວ່າ ພຣະເຢຊູຊົງສົມບູນພ້ອມແລະກຽດຊັງຄວາມບາບທຸກຢ່າງ ຜີປີສາດຕົນນີ້ຮູ້ວ່າບໍ່ມື້ໃດກໍມື້ໜຶ່ງມັນຈະຕ້ອງຖືກຖິ້ມລົງໃນບຶງໄຟແລະມັນຮູ້ວ່າພຣະເຢຊູຊົງມີລິດອຳນາດທີ່ຈະໂຍນມັນລົງໄປໃນແປວໄຟຕັ້ງແຕ່ເວລານັ້ນແລ້ວ.

*ມາຣະໂກ 1:33, 34 ແລະຄົນທັງເມືອງກໍພາກັນມາອັ່ງອໍຢູ່ໜ້າປະຕູ, ພຣະອົງຈຶ່ງຊົງໂຜດໃຫ້ຄົນທີ່ເຈັບປ່ວຍດ້ວຍພະຍາດຕ່າງໆໃຫ້ດີຫຼາຍຄົນແລະຊົງຂັບໄລ່ຜີຮ້າຍຫຼາຍໂຕອອກເສຍ ສ່ວນຜີຮ້າຍເຫຼົ່ານັ້ນພຣະອົງບໍ່ຊົງອະນຸຍາດໃຫ້ປາກເພາະວ່າມັນຮູ້ຈັກພຣະອົງ.*

ພຣະເຢຊູຄຣິດຊົງເປັນພຣະເຈົ້າ ແລະສັບພະສິ່ງທັງປວງກໍຢູ່ພາຍໃຕ້ລິດອຳນາດຂອງພຣະອົງ ພຣະເຢຊູຊົງມີພຣະໄທເມດຕາຕໍ່ຄົນເຈັບແລະຄົນຖືກຜີສິງເຫຼົ່ານີ້ ພຣະອົງຊົງຮູ້ວ່າບັນດາສິ່ງຊົ່ວຮ້າຍ



ໂຢຮັນໄດ້ເຮັດພາລະກິດໃນການຕຽມຫົນທາງສຳລັບອົງພຣະຜູ້ເປັນເຈົ້າສຳເລັດເສັດສິ້ນກ່ອນທີ່ທ່ານຈະຖືກຂ້າຕາຍ ບັດນີ້ກໍເຖິງເວລາທີ່ພຣະເຢຊູຈະເລີ່ມເຮັດການສັ່ງສອນແລ້ວ ພຣະເຢຊູໄດ້ຊົງສັ່ງສອນປະຊາຊົນໃຫ້ປ່ຽນທັດສະນະຄະຕິຂອງຕົນເອງແລະໃຫ້ເຫັນດ້ວຍກັບພຣະເຈົ້າວ່າພວກເຂົາເປັນຄົນບາບທີ່ຊ່ວຍເຫຼືອຕົນເອງບໍ່ໄດ້ແລະໃຫ້ເຊື່ອຂ່າວປະເສີດທີ່ພຣະອົງສະເດັດມາເພື່ອປະກາດແກ່ພວກເຂົາ ຄຳວ່າ **"ພະກິດຕິຄຸນ"** ນັ້ນ ໝາຍເຖິງຂ່າວປະເສີດຫຼືຂ່າວດີ, ເມື່ອອາດາມບໍ່ເຊື່ອຟັງພຣະເຈົ້າແລະປະພຶດຕາມຊາຕານ ຊາຕານຈຶ່ງກາຍເປັນຜູ້ຄອບຄອງໂລກນີ້ໄປເສຍແລ້ວຢ່າງໃດກໍຕາມ ພຣະເຈົ້າຊົງປ່ຽມລົ້ນດ້ວຍຄວາມຮັກ ພຣະເມດຕາແລະພຣະກະລຸນາຕໍ່ຄົນບາບ ພຣະອົງໄດ້ໃຊ້ພຣະເຢຊູໃຫ້ເຂົ້າມາໃນໂລກເພື່ອຈະເອົາຊະນະຊາຕານແລະຊ່ວຍມະນຸດໃຫ້ລອດພົ້ນຈາກການຄວບຄຸມຂອງຊາຕານ ເຮົາທັງຫຼາຍທີ່ເກີດມາໃນໂລກໂດຍຢູ່ພາຍໃຕ້ການຄວບຄຸມຂອງຊາຕານ ພຣະເຢຊູສັ່ງວ່າທາງດຽວສຳລັບຜູ້ໃດຜູ້ໜຶ່ງທີ່ຈະໜີພົ້ນຈາກການຄວບຄຸມຂອງຊາຕານ ກໍຄືການເຫັນດ້ວຍກັບພຣະເຈົ້າແລະເຊື່ອຂ່າວປະເສີດຂອງພຣະອົງ.



ການໃນຊ່ວງອາທິດສຸດທ້າຍຂອງຊີວິດບຸກຄົນນີ້ ລວມທັງລາຍລະອຽດຢ່າງສະເພາະເຈາະຈົງກ່ຽວກັບຄວາມຕາຍແລະການຝັງສົບຂອງເພິ່ນດ້ວຍ ແລະຄຳທຳນວາຍທຸກຂໍ້ຈະຕ້ອງຖືກຕ້ອງເຖິງ 100% ນີ້ເປັນເລື່ອງທີ່ຈະເຮັດໄດ້ງ່າຍຫຼື? ກໍຈະບໍ່ງ່າຍເລີຍ.

1. ເປັນເຊື້ອສາຍຂອງກະສັດດາວິດ (ເອຊາຢາ 9:6-7)
2. ປະສູດຈາກຍິງພົມມະຈາລີ (ເອຊາຢາ 7:14)
3. ປະສູດໃນເມືອງເບດເລເຮມ (ມີກາ 5:2)
4.ຖືກເອີ້ນວ່າເປັນຄວາມສະຫວ່າງແກ່ບັນດາປະຊາຊາດ(ເອຊາຢາ 42:6)
5. ຖືກເອີ້ນໃຫ້ກັບຈາກປະເທດອີຢິບ (ໂຮເຊອາ 11:1)
6. ຊົງຂີ່ລູກລາ (ເສກາຣີຢາ 9:9)
7. ຖືກເພື່ອນຄົນໜຶ່ງທໍລະຍົດ (ເພງສັນລະເສີນ 41:9)
8. ຖືກຂາຍດ້ວຍຫຼຽນເງິນ 30 ຫຼຽນ (ເສກາຣີຢາ 11:12, 13)
9. ຖືກກ່າວຫາໂດຍພະຍານບໍ່ຈິງ (ເພງສັນລະເສີນ 27:12)
10. ຖືກຕີແລະຖືກຖົ່ມນ້ຳລາຍ (ເອຊາຢາ 50:6)
11. ບໍ່ຕອບໂຕ້ຕໍ່ຂໍ້ກ່າວຫາ (ເອຊາຢາ 53:7)
12. ເປັນທີ່ກຽດຊັງຢ່າງໄຮ້ເຫດຜົນ (ເພງສັນລະເສີນ 9:4)
13. ຖືກຄົນຢິວ (ຊາວອິດສະຣາເອນ) ປະຕິເສດ (ເອຊາຢາ 53:3)
14. ທັງມືແລະຕີນຖືກແທງທະລຸ (ເພງສັນລະເສີນ 22:16)
15. ເສື້ອຜ້າຖືກນຳໄປໃຊ້ພະນັນກັນ (ເພງສັນລະເສີນ 22:18)
16. ສິ້ນພຣະຊົນພ້ອມກັບຄົນຊົ່ວ (ເອຊາຢາ 53:12)
17. ຖືກເຢາະເຢີ້ຍແລະຖືກດູໝິ່ນຢຽດຫຍາມ (ເພງສັນລະເສີນ 22:6-8)
18. ສຽງຮ້ອງຄ່ຳຄວນເພາະການແຍກຈາກກັນ (ເພງສັນລະເສີນ 22:1)
19. ຖືກຝັງໄວ້ທ່າມກາງພວກເສດຖີ (ເອຊາຢາ 53:9)
20. ສະເດັດກັບສູ່ສະຫວັນ (ເພງສັນລະເສີນ 68:18)

ໃນບົດຮຽນຕໍ່ໄປເຮົາຈະໄດ້ເຫັນວ່າພຣະເຈົ້າຜູ້ຊົງລິດທານຸພາບຈະຊົງກະທຳໃຫ້ສຳເລັດຕາມຄຳທຳນວາຍເຫຼົ່ານີ້ໃນພຣະຊົນຊີບຂອງພຣະຜູ້ຊ່ວຍໃຫ້ລອດໄດ້ຢ່າງໃດ ຄຳທຳນວາຍເຫຼົ່ານີ້ກໍສຳເລັດຕາມທີ່ໄດ້ບັນທຶກໄວ້ໃນພຣະຄຳພີ ສ່ວນຕໍ່ໄປທີ່ເອີ້ນວ່າພຣະຄຳພີໃໝ່.

ຊາວອິດສະຣາເອນສ່ວນຫຼາຍປະຕິເສດທີ່ຈະເຊື່ອຟັງພຣະຄຳຂອງພຣະເຈົ້າ ເຂົາທັງຫຼາຍໄດ້ຂົ່ມເຫງແລະຂ້າ "ຜູ້ສົ່ງຂ່າວ" ຂອງພຣະເຈົ້າໄປຫຼາຍຄົນ ພວກເຂົາຍັງຄົງບູຊາຮູບເຄົາລົບແລະປະພຶດຕາມວິທີຂອງບັນດາປະຊາຊາດທັງຫຼາຍທີ່ຢູ່ອ້ອມຮອບ ນອກເໜືອຈາກຜູ້ປະກາດພຣະທຳທີ່ສົ່ງມາຈາກພຣະເຈົ້າແລ້ວ ຊາຕານເອງກໍໄດ້ສົ່ງຜູ້ປະກາດພຣະທຳປອມມາເວົ້າເລື່ອງຕົວະແກ່ຊົນຊາດອິດສະຣາເອນດ້ວຍ ຊາຕານຕ້ອງການທີ່ຈະເຮັດໃຫ້ພວກເຂົາຮູ້ສຶກສັບສົນວ່າເລື່ອງໃດເປັນຄວາມຈິງແລະເລື່ອງໃດເປັນຄວາມບໍ່ຈິງກັນແທ້ ຊາຕານເປັນຜູ້ຕົວະແລະຜູ້ຫຼອກລວງ ບັນດາຜູ້ປະກາດພຣະທຳປອມໄດ້ບອກແກ່ປະຊາຊົນວ່າ ທຸກຢ່າງຈະເປັນໄປດ້ວຍດີແລະພຣະເຈົ້າຈະບໍ່ລົງໂທດພວກເຂົາດອກ ຊາຕານຍັງຄົງເປັນເຊັ່ນນັ້ນ. ໃນປະຈຸບັນຊາຕານໄດ້ໃຊ້ "ຜູ້ສົ່ງຂ່າວ" ຂອງມັນມາບອກວ່າພຣະຄຳຂອງພຣະເຈົ້າບໍ່ເປັນຄວາມຈິງ ຫຼືບອກວ່າ ພຣະເຈົ້າຈະບໍ່ລົງໂທດຕໍ່ຄວາມບາບ, ຜູ້ຮັບໃຊ້ຂອງຊາຕານອາດຈະມາບອກແກ່ທ່ານວ່າພຣະເຈົ້າຈະບໍ່ສົ່ງຜູ້ໜຶ່ງຜູ້ໃດລົງໄປສູ່ບຶງໄຟດອກ.

ພຣະເຈົ້າຊົງອົດກັ້ນແລະບໍ່ຊົງລົງໂທດຄົນບາບໃນທັນທີ, ພຣະອົງໄດ້ຊົງເຕືອນຜູ້ຄົນໃນສະໄໝຂອງໂນອາ ເປັນເວລາດົນເຖິງ



# ບົດທີ 17

# ພຣະເຢຊູຊົງເລີ່ມກະທຳພາລະກິດຂອງພຣະອົງ

ໂຢຮັນໄດ້ສັ່ງສອນເຖິງຖ້ອຍຄຳຂອງພຣະເຈົ້າຢ່າງສັດຊື່ເພື່ອຕຽມປະຊາຊົນໃຫ້ໄວ້ວາງໃຈໃນພຣະເຢຊູຜູ້ຊົງເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ ມີບາງຄົນໄດ້ປ່ຽນແປງຄວາມຄິດກ່ຽວກັບຕົນເອງແລະຄວາມບາບຂອງເຂົາ ຄົນເຫຼົ່ານີ້ຮູ້ວ່າພວກເຂົາຕ້ອງການພຣະຜູ້ຊ່ວຍໃຫ້ລອດພົ້ນເພື່ອຈະຊ່ວຍພວກເຂົາໃຫ້ລອດພົ້ນຈາກການລົງໂທດສຳລັບຄວາມບາບຂອງຕົນເອງ ກະສັດເຮໂລດຜູ້ດຳເນີນຊີວິດທີ່ເຕັມໄປດ້ວຍຄວາມບາບບໍ່ພໍພະໄທໃນບາງສິ່ງທີ່ໂຢຮັນໄດ້ກ່າວໄວ້ ພະອົງຈຶ່ງຈັບໂຢຮັນໄປຂັງຄຸກແລະໃນທີ່ສຸດກໍຂ້າເພິ່ນເສຍ.

*ມາຣະໂກ 1:14, 15 ຄັນໂຢຮັນຖືກຈັບແລ້ວພຣະເຢຊູໄດ້ສະເດັດໄປຍັງແຂວງຄາລີເລ ຊົງປະກາດຂ່າວປະເສີດເລື່ອງພຣະເຈົ້າ, ແລະຊົງບອກວ່າ "ເວລາກຳນົດມາເຖິງແລ້ວ ລາຊະອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ ຈົ່ງກັ້ນໃຈເກົ່າເອົາໃຈໃໝ່ແລະເຊື່ອໃນຂ່າວປະເສີດ".*

120 ປີ ກ່ອນທີ່ນ້ຳຈະມາຖ້ວມທຳລາຍພວກເຂົາເສຍ ພຣະເຈົ້າໄດ້ໃຊ້ "ຜູ້ສົ່ງຂ່າວ" ຂອງພຣະອົງມາຍັງຊົນຊາດອິດສະຣາເອນເປັນເວລາຫຼາຍຮ້ອຍປີ, ຄົນເຫຼົ່ານີ້ໄດ້ມາເຕືອນພວກເຂົາເຖິງການພິພາກສາຂອງພຣະເຈົ້າທີ່ຈະມາເຖິງ ຖ້າພວກເຂົາບໍ່ກັບໃຈເສຍໃໝ່ ຊົນຊາດອິດສະຣາເອນກໍຍັງບໍ່ຍອມເຊື່ອພຣະເຈົ້າ ພຣະອົງຈຶ່ງຊົງປ່ອຍສັດຕູເຂົ້າມາຕໍ່ສູ້ແລະເອົາຊະນະພວກເຂົາ ເພາະວ່າຊົນຊາດອິດສະຣາເອນບໍ່ຍອມເຊື່ອແລະກັບໃຈເສຍໃໝ່.

ກອງທັບຂອງຊົນຊາດອັດຊີເຣຍ ສາມາດຮົບຊະນະຊົນເຜົ່າ 10 ຕະກຸນຂອງຊົນຊາດອິດສະຣາເອນທີ່ຢູ່ທາງຕອນເໜືອແລະນຳພວກເຂົາກັບໄປເປັນຊະເລີຍ ແລ້ວພວກອັດຊີເຣຍກໍນຳປະຊາຊົນຈາກປະເທດອື່ນໆ ເຂົ້າມາອາໄສໃນດິນແດນຕອນເໜືອຂອງປະເທດອິດສະຣາເອນ ຄົນເຫຼົ່ານີ້ບໍ່ຮູ້ຈັກພຣະເຈົ້າທ່ຽງແທ້ຜູ້ຊົງພຣະຊົນຢູ່ ໃນທີ່ສຸດຊາວອິດສະຣາເອນຈຳນວນຫຼາຍໄດ້ແຕ່ງງານກັບຄົນເຫຼົ່ານີ້ແລະລູກຫຼານຂອງພວກເຂົາກໍ ອີ້ນວ່າ "ຊາວສະມາເຣຍ".

ສ່ວນຊົນເຜົ່າ 2 ຕະກຸນທີ່ອາໄສຢູ່ທາງຕອນໃຕ້ ຊຶ່ງເອີ້ນວ່າຢູດາ ນັ້ນ ກໍປະຕິເສດທີ່ຈະກັບໃຈເສຍໃໝ່ເຊັ່ນກັນ, ພຣະເຈົ້າຈຶ່ງຊົງປ່ອຍໃຫ້ຊົນຊາດບາບີໂລນເຂົ້າມາກວາດຕ້ອນເອົາພວກເຂົາກັບໄປຍັງປະເທດຂອງຄົນເຫຼົ່ານີ້. ຊົນຊາດບາບີໂລນໄດ້ທຳລາຍກຳແພງຫີນຂອງກຸງເຢຣູຊາເລັມແລະໄດ້ເຜົາພຣະວິຫານຂອງພຣະເຈົ້າຊຶ່ງກະສັດຊາໂລໂມນໄດ້ຊົງສ້າງໄວ້ ພຣະເຈົ້າຊົງກະທຳຢ່າງທີ່ພຣະອົງໄດ້ຊົງເຕືອນເຂົາທັງຫຼາຍແລ້ວວ່າ ພຣະອົງຈະຊົງກະທຳຖ້າພວກເຂົາບໍ່ຍອມກັບໃຈເສຍໃໝ່.

ຫຼັງຈາກ 70 ປີຜ່ານໄປ ປະຊາຊົນຊາວຢູດາຊຶ່ງຢູ່ໃນກຸງບາບີໂລນໄດ້ກັບໃຈເສຍໃໝ່ແລະທູນຂໍໃຫ້ພຣະເຈົ້າຊົງນຳພວກເຂົາ

ກັບໄປຍັງແຜ່ນດິນຂອງພວກເຂົາ ພຣະເຈົ້າຊົງສະດັບຟັງຄຳຮ້ອງຂໍຄວາມຊ່ວຍເຫຼືອແລະໄດ້ຊົງນຳຄົນຈຳນວນຫຼາຍກັບໄປຍັງກຸງເຢຣູຊາເລັມ ພວກເຂົາໄດ້ສ້າງເມືອງແລະກຳແພງລ້ອມເມືອງຂຶ້ນໃໝ່ ນອກຈາກນີ້ພວກເຂົາຍັງໄດ້ສ້າງພຣະວິຫານຂຶ້ນມາໃໝ່ອີກດ້ວຍ ຊາວອິດສະຣາເອນທີ່ກັບໄປຍັງແຜ່ນດິນຂອງຕົນເອງກໍໄດ້ຮັບຊື່ອີກຊື່ໜຶ່ງ ພວກເຂົາຖືກເອີ້ນວ່າ ຄົນຢິວ ຊຶ່ງເປັນຊື່ທີ່ຍັງໃຊ້ເອີ້ນເຊື້ອສາຍຂອງຄົນເຫຼົ່ານີ້ໃນປະຈຸບັນ ຄົນຢິວຍັງນະມັດການພຣະເຈົ້າ ເຖິງແມ່ນວ່າຄົນສ່ວນຫຼາຍຈະບໍ່ໄດ້ເຮັດຈາກຈິດໃຈຂອງພວກເຂົາກໍຕາມ ເຂົາທັງຫຼາຍໄດ້ໄປຍັງພຣະວິຫານພ້ອມດ້ວຍເຄື່ອງບູຊາ ແຕ່ພວກເຂົາບໍ່ໄດ້ເຊື່ອຢ່າງແທ້ຈິງວ່າຕົນເອງເປັນຄົນບາບທີ່ຕ້ອງການພຣະເມດຕາຈາກພຣະເຈົ້າ

ເຊື້ອສາຍຂອງພວກເຂົາບໍ່ໄດ້ເຊື່ອຟັງພຣະເຈົ້າ ຫຼັງຈາກນັ້ນຫຼາຍຮ້ອຍປີ ພຣະເຈົ້າໄດ້ຊົງພິພາກສາພວກຢິວອີກໂດຍການປ່ອຍໃຫ້ພວກກຣີກ ເຂົ້າມາຮົບຊະນະແລະຄອບຄອງປະເທດຂອງພວກເຂົາແລະຍັງສອນໃຫ້ພວກເຂົາເວົ້າພາສາກຣີກອີກດ້ວຍ ຫຼາຍປີຕໍ່ມາກອງທັບໂລມັນໄດ້ ເອົາຊະນະພວກກຣີກແລະໄດ້ເຂົ້າຄອບຄອງກຸງເຢຣູຊາເລັມແລະແຜ່ນດິນອິດສະຣາເອນ ເຖິງວ່າຊາວຢິວຈຳນວນຫຼາຍບໍ່ເຊື່ອພຣະເຈົ້າແຕ່ກໍຍັງມີຄົນຢິວກຸ່ມນ້ອຍໆ ຈຳນວນໜຶ່ງສະເໝີທີ່ເຊື່ອພຣະເຈົ້າແລະເຊື່ອພຣະຄຳຂອງພຣະອົງທີ່ຜ່ານມາທາງ "ຜູ້ສົ່ງຂ່າວ" ທັງຫຼາຍຂອງພຣະອົງ ຄົນເຫຼົ່ານີ້ໄດ້ເຝົ້າຄອຍຖ້າພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ພຣະເຈົ້າຊົງສັນຍາໄວ້ວ່າຈະສະເດັດມານັ້ນ.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 14 ໃນໜ້າ 77 *



*ມັດທາຍ 4:8-10 ອີກເທື່ອໜຶ່ງພະຍາມານໄດ້ນຳພຣະອົງຂຶ້ນເມືອເທິງພູສູງໆ ແລະໄດ້ສະແດງບັນດາລາຊະແຜ່ນດິນໂລກທັງສະຫງ່າລາສີຂອງລາຊະແຜ່ນດິນເຫຼົ່ານັ້ນຊີ້ໃຫ້ພຣະອົງເຫັນ,ແລ້ວໄດ້ທູນພຣະອົງວ່າ "ຖ້າທ່ານຈະຂາບລົງໄຫວ້ເຮົາເຮົາຈະເອົາສິ່ງເຫຼົ່ານີ້ໃຫ້ແກ່ທ່ານ" ພຣະເຢຊູຊົງຕອບມັນວ່າ "ອ້າຍຊາຕານເອີຍ ຈົ່ງໜີໄປເສຍ ເພາະມີຄຳຂຽນໄວ້ໃນພຣະຄຳພີວ່າ ຈົ່ງຂາບໄຫວ້ພຣະອົງຜູ້ເປັນພຣະເຈົ້າຂອງເຈົ້າແລະປະຕິບັດພຣະອົງແຕ່ຜູ້ດຽວ".*

ຊາຕານສາມາດສະເໜີໃຫ້ພຣະເຢຊູມີອຳນາດຄວບຄຸມມະນຸດໃນໂລກນີ້ໄດ້ ເພາະຊາຕານກາຍເປັນເຈົ້າຂອງໂລກນີ້ໄປແລ້ວເມື່ອອາດາມໄດ້ກະບົດຂັດຂືນຕໍ່ພຣະເຈົ້າ ຊາຕານພະຍາຍາມຈະເຮັດໃຫ້ພຣະເຢຊູນະມັດສະການມັນ ແຕ່ພຣະເຢຊູຊົງມີໄຊຊະນະເໜືອຊາຕານໂດຍການຊົງບອກແກ່ມັນເຖິງຂໍ້ຄວາມທີ່ພຣະເຈົ້າໄດ້ກ່າວໄວ້ຢ່າງແທ້ຈິງໃນພຣະຄຳພີ ພຣະເຢຊູບໍ່ໄດ້ເຊື່ອຟັງຊາຕານເໝືອນທີ່ອາດາມໄດ້ເຮັດມາແລ້ວໃນສວນເອເດນ.

ທ່ານອາດຈະເຄີຍເບິ່ງລະຄອນທີ່ສະແດງເຖິງການຕໍ່ສູ້ດີ້ນຮົນລະຫວ່າງພະລັງຂອງຄວາມດີແລະຄວາມຊົ່ວ ຫຼາຍເທື່ອທີ່ການຕໍ່ສູ້ດີ້ນຮົນນີ້ຖືກນຳສະເໜີອອກມາຄືກັບວ່າມີພະລັງທີ່ເທົ່າທຽມກັນ 2 ຢ່າງກຳລັງສູ້ຮົບກັນຢູ່ ພຣະຄຳຂອງພຣະເຈົ້າບອກແກ່ເຮົາວ່າພຣະເຈົ້າຊົງເປັນພຣະຜູ້ສ້າງສູງສຸດຜູ້ຊົງສ້າງສາລະພັດທຸກສິ່ງ ຊາຕານບໍ່ສາມາດຈະເຮັດໃຫ້ພຣະເຢຊູເຮັດບາບໄດ້ ເຖິງວ່າຊາຕານຈະເປັນສັດຕູທີ່ແຂງແກ່ນ ແຕ່ມັນກໍບໍ່ແມ່ນຄູ່ຕໍ່ສູ້ຂອງພຣະເຈົ້າຜູ້ຊົງຣິດທານຸພາບຢ່າງແນ່ນອນ.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 16 ໃນໜ້າ 79 *

*ມັດທາຍ 4:5-7 ແລ້ວພະຍາມານກໍພາພຣະອົງໄປຍັງນະຄອນອັນສັກສິດແລະໃຫ້ພຣະອົງປະທັບຢູ່ເທິງຫຼັງຄາພຣະວິຫານ, ແລ້ວທູນພຣະອົງວ່າ "ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ ຈົ່ງໂຕນລົງເບິ່ງດູ ເພາະມີຄຳຂຽນໄວ້ໃນພຣະຄຳພີວ່າ "ພຣະເຈົ້າຈະຊົງຮັບສັ່ງພວກເທວະດາຂອງພຣະອົງກ່ຽວກັບເລື່ອງທ່ານ ແລະ ມືຂອງເທວະດາເຫຼົ່ານັ້ນຈະຮັບທ່ານໄວ້ ຢ້ານວ່າຕີນຂອງທ່ານຈະຕຳຫີນ" ພຣະເຢຊູຊົງຕອບວ່າ "ມີຄຳຂຽນໄວ້ໃນພຣະຄຳພີອີກວ່າຢ່າທົດລອງພຣະອົງຜູ້ເປັນພຣະເຈົ້າຂອງທ່ານ".*

ຊາຕານພະຍາຍາມຈະຍົກຂໍ້ພຣະຄຳພີບາງຕອນຈາກພຣະຄຳພີເດີມ ຊາຕານຮູ້ພຣະຄຳຂອງພຣະເຈົ້າແຕ່ມັນນຳໄປໃຊ້ໃນທາງທີ່ຜິດ ມັນບໍ່ໄດ້ຍົກຂໍ້ພຣະຄຳພີມາຢ່າງຖືກຕ້ອງ ມັນເລືອກແຕ່ພຽງສ່ວນທີ່ສາມາດຈະບັນລຸເປົ້າໝາຍຂອງມັນເທົ່ານັ້ນ ຊາຕານບິດເບືອນພຣະຄຳຂອງພຣະເຈົ້າເພື່ອຈະຫຼອກລວງໃຫ້ຄົນຫຼົງຜິດ ຊາຕານຍັງຄົງໃຊ້ວິທີການນີ້ໃນປະຈຸບັນ ມັນພະຍາຍາມຈະເຮັດໃຫ້ມະນຸດຄິດວ່າພວກເຂົາຄວນຈະຮຽກຮ້ອງໃຫ້ພຣະເຈົ້າສະແດງການອັດສະຈັນເພື່ອພິສູດພຣະອົງແກ່ພວກເຂົາ ຊາຕານບອກໃຫ້ພຣະເຢຊູໂດດລົງມາຈາກພຣະວິຫານເພື່ອທົດສອບພຣະເຈົ້າຜູ້ຊົງສັນຍາວ່າຈະຮັກສາພຣະບຸດຂອງພຣະອົງ ພຣະເຢຊູບໍ່ຈຳເປັນທີ່ຈະຕ້ອງທົດສອບພຣະບິດາຂອງພຣະອົງເພື່ອເບິ່ງວ່າພຣະບິດາຈະຊົງຮັກສາພຣະອົງຫຼືບໍ່ ພຣະເຈົ້າພຣະບິດາໄດ້ຊົງສັນຍາໄວ້ແລ້ວວ່າຈະຮັກສາພຣະອົງແລະພຣະເຢຊູຊົງໄວ້ວາງໃຈພຣະບິດາຂອງພຣະອົງ.



# ບົດທີ 15

# ພຣະເຈົ້າຊົງສົ່ງຜູ້ຊ່ວຍໃຫ້ລອດພົ້ນ ໃຫ້ສະເດັດເຂົ້າມາໃນໂລກ

ຜູ້ປະກາດພຣະທຳຄົນສຸດທ້າຍທີ່ເຜີຍພຣະຄຳໃນນາມຂອງພຣະເຈົ້າເປັນຊາຍທີ່ຊື່ວ່າ ມາລາກີ ເພິ່ນໄດ້ເຕືອນສະຕິຊົນຊາດຢິວໃຫ້ລະລຶກເຖິງພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ພຣະເຈົ້າຊົງສັນຍາວ່າຈະສະເດັດມາຊ່ວຍພວກເຂົາໃຫ້ລອດພົ້ນຈາກຄວາມທຸກຍາກ ມາລາກີຍັງໄດ້ບອກແກ່ຊົນຊາດຢິວໃຫ້ຮູ້ອີກວ່າ ພຣະເຈົ້າຈະຊົງໃຊ້ຜູ້ປະກາດພຣະທຳມາອີກຄົນໜຶ່ງກ່ອນທີ່ພຣະຜູ້ຊ່ວຍໃຫ້ລອດພົ້ນຈະສະເດັດມາ ແລະພາລະກິດຂອງຜູ້ປະກາດພຣະທຳທ່ານນີ້ ຄືການສັ່ງສອນປະຊາຊົນເພື່ອພວກເຂົາຈະພ້ອມສຳລັບພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຈະສະເດັດມານັ້ນ. ຢ່າງໃດກໍຕາມ ຫຼັງຈາກສະໄໝຂອງມາລາກີ ເວລາໄດ້ຜ່ານພົ້ນໄປເຖິງ 400 ປີ ໂດຍທີ່ພຣະເຈົ້າບໍ່ໄດ້ກ່າວຜ່ານຜູ້ປະກາດພຣະທຳຄົນໃດເລີຍ ຊ່ວງໄລຍະເວລານີ້ເປັນທີ່ຮູ້ຈັກກັນໂດຍທົ່ວໄປວ່າເປັນ "ຍຸກງຽບ".

ພາຍຫຼັງຈາກທີ່ ຍຸກງຽບ ຈົບສິ້ນລົງແລ້ວ ພຣະເຈົ້າກໍພ້ອມທີ່ຈະກະທຳສິ່ງທີ່ພຣະອົງໄດ້ຊົງສັນຍາໄວ້ຕັ້ງແຕ່ທຳອິດໃນສວນ ເອເດນ ພຣະອົງຊົງພ້ອມທີ່ຈະສົ່ງພຣະຜູ້ຊ່ວຍໃຫ້ລອດພົ້ນໃຫ້ສະເດັດ

ເຂົ້າມາໃນໂລກແລ້ວ ເວລານີ້ເຮົາຈະມາສຶກສາພຣະຄຳພີໃໝ່ນຳກັນ ໂດຍເລີ່ມທີ່ຄູ່ຜົວເມຍຊາວຢິວທີ່ເຖົ້າຫຼາຍ ຊຶ່ງເປັນຜູ້ທີ່ເຊື່ອພຣະເຈົ້າ ແລະກຳລັງລໍຄອຍຖ້າພຣະຜູ້ຊ່ວຍໃຫ້ລອດພົ້ນຢູ່.

*ລູກາ 1:5-6 ໃນລາຊະການຂອງເຮໂຣດ ກະສັດເມືອງຢູດາຍ. ມີປະໂຣຫິດຕົນໜຶ່ງຢູ່ໃນໝວດຂອງປະໂລຫິດອາບີຢາ ຊື່ເສກາຣີຢາ, ພັນລະຍາຂອງເສກາຣີຢາຢູ່ໃນເຊື້ອສາຍອາໂຣນຊື່ວ່າອາລີຊາເບັດ; ເຂົາທັງສອງເປັນຄົນຊອບທຳຕໍ່ພຣະພັກພຣະເຈົ້າ ໂດຍຂັບຕາມຂໍ້ບັນຍັດແລະກົດໝາຍທັງຫຼາຍຂອງອົງພຣະຜູ້ເປັນເຈົ້າບໍ່ມີບ່ອນຕິເລີຍ.*

ເສກາຣີຢາແລະອາລີຊາເບັດແກ່ຊະລາຫຼາຍແລ້ວແລະບໍ່ສາມາດມີລູກໄດ້ ເສກາຣີຢາເປັນປະໂລຫິດຄົນໜຶ່ງໃນພຣະວິຫານທີ່ກຸງເຢຣູຊາເລັມ ຂະນະທີ່ພວກເຂົາກຳລັງເຮັດພາລະກິດຂອງຕົນ ເອງຢູ່ນັ້ນ ເທວະດາອົງໜຶ່ງໄດ້ຖືກພຣະເຈົ້າໃຊ້ໃຫ້ມາບອກຂ່າວສຳຄັນແກ່ພວກເຂົາ; ພຣະເຈົ້າໄດ້ຊົງສັນຍາແກ່ເສກາຣີຢາຜູ້ຊະລາວ່າ ລາວຈະມີລູກຊາຍຄົນໜຶ່ງແລະຈະຕ້ອງຕັ້ງຊື່ລູກນັ້ນວ່າ **"ໂຢຮັນ"** ໂຢຮັນນີ້ແຫຼະທີ່ຈະເປັນຜູ້ປະກາດພຣະທຳຄົນສຸດທ້າຍຊຶ່ງຈະຈັດຕຽມປະຊາຊົນໃຫ້ພ້ອມສຳລັບພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຈະສະເດັດມາ ເທວະດາໄດ້ເອີ້ນພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຈະສະເດັດມານັ້ນວ່າ "ອົງພຣະຜູ້ເປັນເຈົ້າ" ພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຈະສະເດັດມາຊ່ວຍມະນຸດຊາດທັງປວງໃຫ້ລອດພົ້ນນັ້ນ ຄືພຣະເຈົ້ານັ້ນເອງ.

ຕໍ່ມາບໍ່ເທົ່າໃດອາທິດ ພຣະເຈົ້າໄດ້ໃຊ້ເທວະດາອີກອົງໜຶ່ງໃຫ້ໄປແຈ້ງແກ່ແມ່ຍິງພົມມະຈາລີຄົນໜຶ່ງທີ່ຊື່ ມາຣີອາ ວ່າ ພຣະເຈົ້າ



*ມັດທາຍ 4:3-4 ສ່ວນຜູ້ທົດລອງມາຫາພຣະອົງທູນວ່າ "ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ ຈົ່ງສັ່ງກ້ອນຫີນເຫຼົ່ານີ້ໃຫ້ກາຍເປັນອາຫານ" ຝ່າຍພຣະອົງຊົງຕອບວ່າ "ມີຄຳຂຽນໄວ້ໃນພຣະຄຳພີວ່າ ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວແຕ່ລ້ຽງດ້ວຍພຣະທຳທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະເຈົ້າ.*

ຊາຕານພະຍາຍາມຈະທ້າທາຍໃຫ້ພຣະເຢຊູພິສູດວ່າພຣະອົງຊົງເປັນພຣະບຸດຂອງພຣະເຈົ້າ ຊາຕານໄດ້ຂໍໃຫ້ພຣະເຢຊູຊົງເຮັດສິ່ງທີ່ພຣະເຈົ້າພຣະບິດາບໍ່ໄດ້ສັ່ງໃຫ້ພຣະເຢຊູເຮັດ ພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າ ດັ່ງນັ້ນພຣະອົງຍ່ອມສາມາດປັ້ນກ້ອນຫີນໃຫ້ເປັນອາຫານໄດ້ ແຕ່ຖ້າພຣະເຢຊູເຊື່ອຟັງຊາຕານ ພຣະອົງກໍຈະຖືກຊາຕານຄອບຄອງຊີວິດຂອງພຣະອົງ.

ມະນຸດເຮົາຕ້ອງການອາຫານເພື່ອໃຫ້ຮ່າງກາຍດຳລົງຊີວິດຢູ່ໄດ້ ແຕ່ພຣະເຈົ້າຕັດວ່າຍັງມີບາງສິ່ງທີ່ສຳຄັນຍິ່ງກວ່າອາຫານ ເຮົາຕ້ອງການພຣະຄຳຂອງພຣະເຈົ້າເພື່ອສະແດງໃຫ້ເຮົາເຫັນຄວາມຈິງ ແລະຫົນທາງທີ່ນຳໄປສູ່ຊີວິດນິລັນດອນ ອາຫານຈະມີປະໂຫຍດຫຍັງຖ້າເຮົາມີສຸຂະພາບຮ່າງກາຍທີ່ແຂງແຮງ ແຕ່ຕ້ອງຕາຍໂດຍປາສະຈາກພຣະເຈົ້າແລະຕ້ອງທົນທຸກທໍລະມານຈາກການລົງໂທດນິລັນດອນນັ້ນ? ເຮົາຈຳເປັນຕ້ອງກິນອາຫານເພື່ອໃຫ້ຮ່າງກາຍຂອງເຮົາດຳລົງຊີວິດຢູ່ໄດ້ ແຕ່ເຮົາກໍຈຳເປັນຕ້ອງຟັງແລະເຊື່ອພຣະຄຳຂອງພຣະເຈົ້າເພື່ອເຮົາຈະສາມາດຢູ່ກັບພຣະເຈົ້າຕະຫຼອດໄປເປັນນິດໄດ້.

*ມັດທາຍ 4:1-2 ຕໍ່ມາພຣະວິນຍານໄດ້ຊົງພາພຣະເຢຊູເຂົ້າໄປໃນປ່າ ເພື່ອພະຍາມານຈະໄດ້ທົດລອງພຣະອົງ. ເມື່ອພຣະອົງຊົງອົດອາຫານ ເປັນເວລາສີ່ສິບວັນສີ່ສິບຄືນແລ້ວຫຼັງຈາກນັ້ນພຣະອົງກໍຊົງຢາກ ອາຫານ.*



ຫຼັງຈາກທີ່ພຣະເຢຊູໄດ້ຮັບບັບຕິສະມາ ພຣະອົງກໍສະເດັດໄປຍັງຖິ່ນທຸລະກັນດານເພື່ອຊາຕານຈະໄດ້ທົດລອງພຣະອົງ ພຣະເຈົ້າໄດ້ສ້າງລູຊີເຟີ (ຊຶ່ງປະຈຸບັນເອີ້ນວ່າ ຊາຕານຫຼືພະຍາມານ) ໂດຍສົມບູນແບບທຸກຢ່າງ ແຕ່ລູຊີເຟີໄດ້ຕັດສິນໃຈເລືອກທີ່ຈະກະບົດຂັດຂືນຕໍ່ພຣະເຈົ້າຕັ້ງແຕ່ທຳອິດ ຕັ້ງແຕ່ນັ້ນເປັນຕົ້ນມາຊາຕານກໍເຮັດສິ່ງຊົ່ວຮ້າຍຢ່າງຕໍ່ເນື່ອງ ຊາຕານໄດ້ຕົວະຍົວະໃຫ້ອາດາມກະບົດຂັດຂືນຕໍ່ພຣະເຈົ້າ ບັດນີ້ມັນພະຍາຍາມທີ່ຈະຕົວະຍົວະໃຫ້ພຣະເຢຊູກະບົດຂັດຂືນຕໍ່ພຣະເຈົ້າເຊັ່ນກັນ ຊາຕານຕ້ອງການໃຫ້ພຣະເຢຊູຕົກຢູ່ໃຕ້ການຄວບຄຸມຂອງມັນເພື່ອພຣະເຢຊູຈະບໍ່ສາມາດເປັນພຣະຜູ້ຊ່ວຍໃຫ້ລອດພົ້ນໄດ້ ເຖິງແມ່ນວ່າພຣະເຢຊູຊົງເປັນພຣະເຈົ້າແຕ່ພຣະອົງກໍຊົງເປັນມະນຸດຢ່າງແທ້ຈິງ ຫຼັງຈາກທີ່ພຣະເຢຊູບໍ່ໄດ້ກິນອາຫານໃດໆ ເປັນເວລາ 40 ມື້ພຣະອົງກໍຊົງຫິວຫຼາຍ.



ໄດ້ຊົງເລືອກນາງໃຫ້ເປັນແມ່ຂອງພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຈະສະເດັດມານັ້ນ ແລະຈະຕ້ອງຕັ້ງຊື່ຂອງທ່ານຜູ້ນັ້ນວ່າ **"ເຢຊູ"** ຊຶ່ງໝາຍເຖິງພຣະຜູ້ຊ່ວຍໃຫ້ລອດພົ້ນຫຼືພຣະຜູ້ນຳພາໃຫ້ລອດພົ້ນ ພຣະເຈົ້າຊົງຮັກຊາວໂລກທັງປວງແລະພຣະອົງຊົງປາຖະໜາໃຫ້ຄົນບາບທັງຫຼາຍໄດ້ຮັບການຊ່ວຍເຫຼືອໃຫ້ລອດພົ້ນຈາກການລົງໂທດທີ່ພວກເຂົາສົມຄວນຈະໄດ້ຮັບນັ້ນ ພະເຢຊູບໍ່ພຽງແຕ່ຈະເປັນລູກຊາຍຂອງນາງມາຣີອາເທົ່ານັ້ນ ພຣະອົງຍັງຊົງເປັນພຣະບຸດອົງດຽວຂອງພຣະເຈົ້າ.

ເຮົາໄດ້ອ້າງເຖິງຕີເອການຸພາບໃນບົດທຳອິດ ຈາກການສຶກສາຂອງເຮົາມາແລ້ວໃນໜັງສືເຫຼັ້ມທີ 1 ເຮົາໄດ້ຮຽນຮູ້ວ່າແມ່ນຈະມີພຣະເຈົ້າພຽງອົງດຽວ ແຕ່ພຣະເຈົ້າຊົງເປັນ 3 ບຸກຄົນ ຊຶ່ງມີພຣະລັກສະນະແລະລິດທານຸພາບເທົ່າທຽມກັນ ບຸກຄົນເຫຼົ່ານີ້ ຄືພຣະເຈົ້າພຣະບິດາ, ພຣະເຈົ້າພຣະບຸດ ແລະພຣະເຈົ້າພຣະວິນຍານບໍລິສຸດ ແນວຄວາມຄິດນີ້ກໍຍາກທີ່ຈະເຂົ້າໃຈໄດ້ຢ່າງຖ່ອງແທ້ ພຣະບິດາກໍບໍ່ແມ່ນພຣະບຸດ ຫຼືພຣະວິນຍານບໍລິສຸດ ແຕ່ເຖິງຢ່າງນັ້ນກໍຕາມບຸກຄົນທັງ 3 ນີ້ກໍຊົງເປັນພຣະເຈົ້າອົງດຽວກັນທັງສິ້ນ. ຫຼາຍປີມາແລ້ວທີ່ມີຄວາມພະຍາຍາມໃນຫຼາຍໆຮູບແບບທີ່ຈະອະທິບາຍກ່ຽວກັບຕີເອການຸພາບ ຍົກຕົວຢ່າງເຊັ່ນ ມີການອະທິບາຍວ່າ ໄຂ່ທຸກໜ່ວຍປະກອບດ້ວຍເປືອກ, ໄຂ່ແດງ ແລະໄຂ່ຂາວ ສ່ວນຕ່າງໆເຫຼົ່ານີ້ເປັນສ່ວນທີ່ແຍກຈາກກັນຢ່າງຊັດເຈນ ແຕ່ກໍຍັງເປັນໄຂ່ໜ່ວຍດຽວກັນ ມິຕິຂອງກັບໃສ່ເຄື່ອງໜ່ວຍໜຶ່ງນັ້ນມີຄວາມຍາວ, ຄວາມກວ້າງແລະຄວາມສູງ ເຖິງແມ່ນວ່າແຕ່ລະມິຕິຈະບໍ່ຄືກັນ ແຕ່ມິຕິເຫຼົ່ານີ້ກໍບໍ່ສາມາດຈະຖືກແຍກອອກໄປເພື່ອຈະອະທິບາຍກັບໃສ່ເຄື່ອງທັງໝົດ

ໜ່ອຍໄດ້. ນ້ຳຢູ່ໄດ້ທັງ 3 ສະຖານະ ຄື ຂອງແຂງ, ຂອງແຫຼວ ແລະ ກ໊າສ ແຕ່ເຖິງແມ່ນວ່ານ້ຳຈະສາມາດຢູ່ໄດ້ທັງ 3 ສະຖານະກໍຕາມ ແຕ່ມັນກໍຍັງເປັນນ້ຳຄືເກົ່າ.

ເຖິງວ່າການອະທິບາຍໃຫ້ເຫັນພາບດ້ວຍຕົວຢ່າງເຫຼົ່ານີ້ຈະມີປະໂຫຍດຢູ່, ແຕ່ຕົວຢ່າງເຫຼົ່ານີ້ກໍຍັງບໍ່ສາມາດຈະຊ່ວຍໃຫ້ເຮົາເຂົ້າໃຈໄດ້ຢ່າງຄັກແນ່ ເຮົາຈຳເປັນທີ່ຈະຕ້ອງລະມັດລະວັງທີ່ຈະບໍ່ພະຍາຍາມດຶງພຣະເຈົ້າໃຫ້ລົງມາຢູ່ໃນລະດັບດຽວກັບເຮົາແລະເບິ່ງພຣະອົງເໝືອນກັບເປັນບຸກຄົນຄົນໜຶ່ງເຊັ່ນດຽວກັບເຮົາທັງຫຼາຍ ເມື່ອເຮົາເປັນເດັກນ້ອຍ ມີຫຼາຍສິ່ງທີ່ເຮົາບໍ່ເຂົ້າໃຈ ແຕ່ເຮົາກໍເຊື່ອພໍ່ແມ່ຂອງເຮົາ. ຍົກຕົວຢ່າງເຊັ່ນ ໄຟຟ້າເປັນສິ່ງທີ່ອັນຕະລາຍຫຼາຍ ແຕ່ມັນຄືຫຍັງກັນແທ້? ເມື່ອເຮົາຖອດສາຍອອກມາຈາກປັກສຽບແລ້ວເປັນຫຍັງມັນຈຶ່ງບໍ່ໄຫຼລົງໄປພື້ນ? ຂ້ອຍເບິ່ງບໍ່ເຫັນມັນເລີຍແທ້ໄດ໋ນີ້; ພໍ່ແມ່ເວົ້າເຖິງອັນໃດນໍ ທີ່ບອກວ່າມັນຈະເຮັດໃຫ້ຂ້ອຍຕ້ອງເຈັບຕົວຖ້າຂ້ອຍເອົານິ້ວມືເຂົ້າໄປໃນປັກສຽບນັ້ນ?.

ພຣະຜູ້ຊ່ວຍໃຫ້ລອດພົ້ນຈະຕ້ອງເປັນມະນຸດເຊັ່ນດຽວກັບເຮົາທັງຫຼາຍ ເວັ້ນແຕ່ວ່າພຣະອົງຈະຕ້ອງປາສະຈາກບາບເພື່ອຈະສາມາດຊ່ວຍເຮົາໃຫ້ລອດພົ້ນຈາກຊາຕານແລະຄວາມບາບໄດ້ ດັ່ງນັ້ນເພື່ອວ່າແຜນການຂອງພຣະເຈົ້າກ່ຽວກັບພຣະຜູ້ຊ່ວຍໃຫ້ລອດພົ້ນຈະສຳເລັດໄດ້ ພຣະເຈົ້າພຣະບຸດຈຶ່ງຕ້ອງສະເດັດມາປະສູດເປັນມະນຸດ, ພຣະເຈົ້າໄດ້ຊົງເລືອກນາງມາຣີອາເປັນແມ່ຂອງພຣະຜູ້ຊ່ວຍໃຫ້ລອດພົ້ນ ລູກຊາຍຂອງນາງມາຣີອາຈະເປັນທັງພຣະເຈົ້າແລະມະນຸດໃນພຣະກາຍດຽວກັນ ພຣະເຢຊູຈະເປັນທັງພຣະເຈົ້າຢ່າງເຕັມທີ່ແລະເປັນມະນຸດຢ່າງເຕັມທີ່ດ້ວຍ.



ພຣະທຳຂອງພຣະເຈົ້າ ຖ້າພຣະເຢຊູບໍ່ໄດ້ຮັບບັບຕິສະມາກ່ອນແລ້ວ, ປະຊາຊົນກໍຈະພາກັນຄິດວ່າພຣະອົງບໍ່ເຊື່ອຟັງພຣະບັນຊາຂອງພຣະເຈົ້າ ນອກຈາກນີ້ພຣະເຢຊູຍັງຊົງປາຖະໜາທີ່ຈະຢືນຢັນວ່າ ຄຳເວົ້າຂອງໂຢຮັນເປັນຄວາມຈິງ.

*ໂຢຮັນ 1:29 ລ່ວງໄປວັນໜຶ່ງ ໂຢຮັນໄດ້ເຫັນພຣະເຢຊູກຳລັງສະເດັດມາຫາທ່ານຈຶ່ງກ່າວວ່າ "ເບິ່ງແມ ພຣະເມສານ້ອຍຂອງພຣະເຈົ້າ ຜູ້ຊົງຮັບເອົາຄວາມຜິດບາບຂອງມະນຸດສະໂລກໄປເສຍ".*



ເມື່ອໂຢຮັນເຫັນພຣະເຢຊູ ໂຢຮັນກໍກ່າວວ່າພຣະເຢຊູຊົງເປັນລູກແກະທີ່ພຣະເຈົ້າຊົງປະທານແລະໃຊ້ໃຫ້ສະເດັດເຂົ້າມາໃນໂລກ ໂຢຮັນຮູ້ວ່າພຣະເຢຊູຊົງເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຂອງໂລກທີ່ພຣະເຈົ້າຊົງສັນຍາໄວ້. ໃນບົດຕໍ່ໆໄປເຮົາຈະໄດ້ສຶກສານຳກັນວ່າທີ່ໂຢຮັນເອີ້ນພຣະເຢຊູວ່າ ພຣະເມສານ້ອຍ (ລູກແກະ) ຂອງພຣະເຈົ້ານັ້ນໂຢຮັນໝາຍຄວາມວ່າແນວໃດ?

ຊະດູກາຍບໍ່ເຊື່ອຫຼາຍສິ່ງທີ່ພຣະເຈົ້າໄດ້ບັນທຶກໄວ້ໃນພຣະຄຳຂອງພຣະອົງ. ພວກຟາຣີຊາຍເພີ່ມເຕີມພຣະຄຳຂອງພຣະເຈົ້າຂະນະທີ່ພວກຊະດູກາຍຕັດຮອນຄວາມຈິງຫຼາຍຢ່າງອອກຈາກພຣະຄຳເຫຼົ່ານັ້ນ ພວກຊະດູກາຍຍັງເປັນຜູ້ນຳທາງການເມືອງຂອງຄົນຢິວອີກດ້ວຍ ດັ່ງນັ້ນພວກເຂົາຈຶ່ງມີສະຖານະພາບທີ່ດີໃນລັດຖະບານໂຣມັນຊຶ່ງຍ່ອມເປັນທີ່ກຽດຊັງຂອງຄົນຢິວອື່ນໆໂດຍທົ່ວໄປ.

ຜູ້ນຳທາງສາສະໜາເຫຼົ່ານີ້ມີຫຼາຍຄົນທີ່ບໍ່ຍອມຮັບວ່າຕົນເອງເປັນຄົນບາບ ຄົນເຫຼົ່ານີ້ເຊື່ອວ່າເຂົາດີພໍທີ່ພຣະເຈົ້າຈະຍອມຮັບເຂົາໄດ້ ຜົນທີ່ຕາມມາກໍຄືພວກເຂົາບໍ່ມັກຄຳເທດສະໜາຂອງໂຢຮັນກ່ຽວກັບການກັບໃຈເສຍໃໝ່ ໂຢຮັນໄດ້ບອກພວກຟາຣີຊາຍແລະພວກຊະດູກາຍວ່າ ຢ່າຈອງຫອງແລະຢ່າໄວ້ວາງໃຈໃນຂໍ້ເທັດຈິງທີ່ພວກເຂົາເປັນລູກຫຼານຂອງອັບຣາຮາມ ມີຄົນຈຳນວນຫຼາຍໃນພວກຄົນເຫຼົ່ານີ້ທີ່ຄິດວ່າພຣະເຈົ້າຈະຍອມຮັບພວກເຂົາເພາະພວກເຂົາເປັນລູກຫຼານຂອງອັບຣາຮາມ ຊຶ່ງທີ່ຈິງແລ້ວບໍ່ມີໃຜຈະໄດ້ຮັບການຍອມຮັບຈາກພຣະເຈົ້າເພາະເຫດຈາກບິດາມານດາຫຼືເພາະມີພື້ນຖານທາງສາສະໜາຢູ່ແລ້ວ ພຣະເຈົ້າຊົງພິພາກສາມະນຸດທຸກຄົນເປັນລາຍບຸກຄົນ.

ພຣະເຢຊູສະເດັດມາຮັບບັບຕິສະມາຈາກໂຢຮັນຂະນະທີ່ພຣະອົງອາຍຸປະມານ 30 ປີ ພຣະເຢຊູບໍ່ໄດ້ເປັນຄົນບາບທີ່ຕ້ອງການພຣະຜູ້ຊ່ວຍໃຫ້ລອດພົ້ນ ພຣະອົງຊົງບໍລິສຸດແລະບໍ່ມີບາບ ແຕ່ພຣະເຢຊູສະເດັດມາຮັບບັບຕິສະມາເພາະນີ້ເປັນພຣະບັນຊາຂອງພຣະເຈົ້າສຳລັບຊາວຢິວທຸກຄົນທີ່ຍອມຮັບວ່າໂຢຮັນເປັນຜູ້ປະກາດ



*ລູກາ 1: 34, 35 ຝ່າຍມາຣີອາຈຶ່ງທູນເທວະດານັ້ນວ່າ "ເຫດການນີ້ຈະເປັນໄປໄດ້ຢ່າງໃດ ເພາະຂ້ານ້ອຍຍັງບໍ່ທັນໄດ້ຮ່ວມຮູ້ກັບຊາຍຈັກເທື່ອ" ເທວະດາໄດ້ຕອບນາງວ່າ "ພຣະວິນຍານບໍລິສຸດຈະສະເດັດລົງມາເຖິງເຈົ້າແລະລິດເດດຂອງຜູ້ສູງສຸດຈະປົກຄອງເຈົ້າໄວ້ ເຫດສະນັ້ນບຸດທີ່ຈະເກີດມານັ້ນຈະໄດ້ເອີ້ນວ່າ ບໍລິສຸດ ຄືພຣະບຸດຂອງພຣະເຈົ້າ".*



ນາງມາຣີອາເຂົ້າໃຈວ່າຕົວນາງເອງຈະມີລູກໂດຍປາສະຈາກພໍ່ທີ່ເປັນມະນຸດໄດ້ຢ່າງໃດ ເທວະດາອົງນັ້ນກ່າວວ່າ ພຣະເຈົ້າພຣະວິນຍານບໍລິສຸດຈະຊົງກະທຳການອັດສະຈັນນີ້ເອງ ພຣະເຢຊູຈະປະສູດໂດຍບໍ່ມີບາບ ເພາະພຣະອົງປະສູດໂດຍປາສະຈາກພໍ່ທີ່ເປັນມະນຸດ, ບໍ່ມີເຊື້ອສາຍຄົນໃດຂອງອາດາມທີ່ບໍລິສຸດແລະຊອບທຳ ມະນຸດທຸກຄົນໃນໂລກຕ່າງກໍສືບທອດຄວາມບາບຂອງອາດາມມານຳກັນທັງສິ້ນ ແຕ່ພຣະບິດາຂອງພຣະເຢຊູ ຄືພຣະເຈົ້າຊຶ່ງສົມບູນພ້ອມທຸກຢ່າງແລະຊົງບໍລິສຸດ ພຣະເຢຊູບໍ່ໄດ້ສືບທອດທຳມະຊາດແຫ່ງຄວາມບາບຂອງອາດາມມາດ້ວຍ ເພາະພຣະເຢຊູຊົງເປັນພຣະບຸດທີ່ສົມບູນພ້ອມຂອງພຣະເຈົ້າ ຄືຊົງບໍລິສຸດແລະປາສະຈາກບາບ

ການທີ່ແມ່ຍິງພົມມະຈາລີຈະຖືພານັ້ນເປັນເລື່ອງທີ່ເປັນໄປບໍ່ໄດ້ຢ່າງໃດກໍຕາມສຳລັບພຣະເຈົ້າແລ້ວທຸກສິ່ງກໍເປັນໄປໄດ້ທັງສິ້ນ ພຣະເຈົ້າໄດ້ຊົງສ້າງອາດາມຂຶ້ນມາຈາກຂີ້ຝຸ່ນດິນ ດັ່ງນັ້ນ ຈຶ່ງບໍ່ເປັນການຍາກສຳລັບພຣະເຈົ້າທີ່ຈະປະທານລູກຜູ້ນີ້ແກ່ນາງມາຣີອາໂດຍປາສະຈາກພໍ່ທີ່ເປັນມະນຸດ.

ພຣະຜູ້ຊ່ວຍໃຫ້ລອດພົ້ນຊຶ່ງໂຢຮັນຈະມາຕຽມຫົນທາງໃຫ້ນັ້ນ ຄືພຣະເຈົ້ານັ້ນເອງ ບໍ່ມີມະນຸດທຳມະດາຄົນໃດທີ່ຈະສາມາດຊ່ວຍເຮົາໃຫ້ລອດພົ້ນຈາກຊາຕານ, ຄວາມບາບ ແລະຄວາມຕາຍໄດ້ ໃຜເປັນຜູ້ທີ່ຊ່ວຍໂນອາແລະຄອບຄົວໃຫ້ລອດພົ້ນຈາກນໍ້າຖ້ວມຄັ້ງໃຫຍ່? ໃຜເປັນຜູ້ທີ່ຊ່ວຍອີຊາກໃຫ້ລອດພົ້ນຈາກຄວາມຕາຍແລະຈັດຕຽມແກະໂຕຜູ້ໄວ້ເພື່ອຈະຕາຍແທນອີຊາກ? ໃຜເປັນຜູ້ທີ່ຊ່ວຍໂລດໃຫ້ລອດພົ້ນຈາກການທຳລາຍລ້າງເມືອງໂຊໂດມແລະເມືອງໂກໂມຣາ? ໃຜເປັນຜູ້ທີ່ຊ່ວຍຊົນຊາດອິດສະຣາເອນທັງຫຼາຍໃຫ້ລອດພົ້ນຈາກການເປັນຂ້າທາດໃນປະເທດອີຢິບ? ມີແຕ່ພຣະເຈົ້າສູງສຸດພຽງພຣະອົງດຽວເທົ່ານັ້ນທີ່ຊົງເປັນພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຍິ່ງໃຫຍ່ທີ່ສຸດ ພຣະເຈົ້າຊົງສັນຍາວ່າຈະສົ່ງພຣະຜູ້ຊ່ວຍໃຫ້ລອດພົ້ນມາພຽງອົງດຽວຊຶ່ງຈະຊົງກະທຳໃຫ້ເປັນໄປໄດ້ທີ່ເຮົາຈະມາເຖິງພຣະເຈົ້າ.

ນອກຈາກນີ້ພຣະເຢຊູຍັງເອີ້ນວ່າ **"ພຣະຄຣິດ"** ອີກດ້ວຍ "ພຣະຄຣິດ" ໝາຍເຖິງ "ຜູ້ທີ່ຖືກເຈີມ" ຊຶ່ງໝາຍເຖິງ ຜູ້ທີ່ພຣະເຈົ້າຊົງແຍກໄວ້ຕ່າງຫາກເພື່ອຈະກະທຳພາລະກິດພິເສດ ພຣະອົງຈະຊົງເປັນຜູ້ປະກາດພຣະທຳຂອງພຣະເຈົ້າ ຊົງເປັນປະໂລຫິດແລະເປັນ



ຄັນແກ່ທຸກຄົນວ່າບຸກຄົນຜູ້ນັ້ນເຫັນພ້ອມກັບພຣະເຈົ້າວ່າຕົວເຂົາເອງສົມຄວນຈະຕາຍສຳລັບຄວາມຜິດບາບທັງຫຼາຍຂອງເຂົາ ແຕ່ເຂົາໄດ້ໄວ້ວາງໃຈໃນພຣະເຈົ້າວ່າຈະສົ່ງພຣະຜູ້ຊ່ວຍໃຫ້ລອດພົ້ນມາຊ່ວຍເຂົາໃຫ້ລອດຊີວິດໄດ້ ການຮັບບັບຕິສະມາຂອງເຂົາເປັນໝາຍສຳຄັນທີ່ປາກົດໃຫ້ເຫັນພາຍນອກຊຶ່ງເປັນພາບທີ່ສະແດງໃຫ້ເຫັນເຖິງການກັບໃຈເສຍໃໝ່ທີ່ຢູ່ພາຍໃນຈິດໃຈແລະສະແດງໃຫ້ເຫັນເຖິງຄວາມເຊື່ອໃນຄຳເວົ້າຂອງໂຢຮັນ ການຮັບບັບຕິສະມາບໍ່ໄດ້ເຮັດໃຫ້ເຮົາເປັນທີ່ຍອມຮັບຂອງພຣະເຈົ້າ ການຮັບບັບຕິສະມາບໍ່ສາມາດຊຳລະຄວາມຜິດບາບທັງຫຼາຍຂອງເຮົາໃຫ້ອອກໄປໄດ້ຄ່າຈ້າງສຳລັບຄວາມບາບ ຄືຄວາມຕາຍ ພິທີບັບຕິສະມາເປັນພຽງໝາຍສຳຄັນທີ່ສະແດງໃຫ້ຄົນອື່ນຮູ້ວ່າ ບຸກຄົນຜູ້ນັ້ນເຫັນພ້ອມກັບຄຳເວົ້າຂອງພຣະເຈົ້າແລະສະແດງໃຫ້ເຫັນວ່າເຂົາໄວ້ວາງໃຈໃນພຣະເຈົ້າພຽງຜູ້ດຽວທີ່ຈະຊ່ວຍເຂົາໃຫ້ລອດໄດ້.

ໃນສະໄໝນັ້ນຜູ້ນຳທາງສາສະໜາເປັນຈຳນວນຫຼາຍຈອງຫອງເກີນກວ່າທີ່ຈະຍອມຮັບໄດ້ວ່າຕົນເອງເປັນຄົນບາບແລະສົມຄວນຈະຕ້ອງຕາຍ ຜູ້ນຳທາງສາສະໜາປະກອບດ້ວຍຄົນ 3 ກຸ່ມ ຄືພວກນັກທຳ, ພວກຟາຣີຊາຍແລະພວກຊະດູກາຍ ພວກນັກທຳຄືພວກທີ່ຄັດລອກພຣະຄຳຂອງພຣະເຈົ້າລົງໄປໃນມ້ວນໜັງສື ພວກເຂົາເປັນກຸ່ມທີ່ສົມຄວນຈະຮູ້ແລະອະທິບາຍຄວາມໝາຍທີ່ແທ້ຈິງຂອງພຣະຄຳພຣະເຈົ້າໄດ້. ຟາຣີຊາຍເປັນກຸ່ມທີ່ພະຍາຍາມຈະໄດ້ຮັບການຍອມຮັບຈາກພຣະເຈົ້າໂດຍອາໄສກົດລະບຽບປະຕິບັດຕ່າງໆທີ່ພວກເຂົາຂຽນຂຶ້ນມາ ພວກຟາຣີຊາຍເພີ່ມເຕີມພຣະຄຳຂອງພຣະເຈົ້າແລະບໍ່ຄິດວ່າຕົນເອງເປັນຄົນບາບຄືຄົນອື່ນໆ ພວກ

ຈະຕ້ອງເຫັນດ້ວຍວ່າພວກເຂົາໄດ້ກະທຳບາບຕໍ່ພຣະເຈົ້າໂດຍການບໍ່ເຊື່ອຟັງພຣະບັນຍັດຂອງພຣະອົງ ແລະເຫັນດ້ວຍວ່າພວກເຂົາບໍ່ສາມາດຈະເຮັດໃຫ້ຕົນເອງເປັນທີ່ຍອມຮັບຂອງພຣະເຈົ້າໄດ້ ແລະສຸດທ້າຍພວກເຂົາຈຳເປັນທີ່ຈະຕ້ອງເຫັນພ້ອມກັບພຣະເຈົ້າວ່າພຣະອົງຈະຊົງລົງໂທດຕໍ່ຄວາມບາບສະເໝີໂດຍການແຍກຄົນບາບອອກໄປໃຫ້ພົ້ນຈາກພຣະພັກພຣະອົງແລະໃຫ້ໄປຢູ່ໃນແປວໄຟທີ່ເຜົາໄໝ້ຕະຫຼອດໄປເປັນນິດ.

ສິ່ງເຫຼົ່ານີ້ເປັນສິ່ງດຽວກັບທີ່ພຣະເຈົ້າຊົງປາຖະໜາທີ່ຈະໃຫ້ເຮົາທຸກຄົນເຂົ້າໃຈກ່ຽວກັບຕົວເຮົາເອງແລະໃຫ້ເຫັນພ້ອມກັບພຣະເຈົ້າເຊັ່ນດຽວກັນ ຍັງຈື່ຕອນທີ່ເຮົາສຶກສາພຣະບັນຍັດ 10 ປະການນຳກັນໄດ້ບໍ? ບໍ່ມີໃຜເລີຍໃນພວກເຮົາທີ່ຈະສາມາດຖືຮັກສາພຣະບັນຍັດເຫຼົ່ານີ້ໄດ້ຢ່າງສົມບູນ ພຣະເຈົ້າຊົງເອີ້ນການບໍ່ເຊື່ອຟັງຂອງເຮົາວ່າ **"ຄວາມບາບ"** ການລົງໂທດສຳລັບຄວາມບາບກໍຄືຄວາມຕາຍແລະການຖືກແຍກຈາກພຣະເຈົ້າຕະຫຼອດໄປເປັນນິດ.

*ມັດທາຍ 3:5, 6 ຂະນະນັ້ນຊາວກຸງເຢຣູຊາເລັມ ແລະຄົນທົ່ວແຂວງຢູດາຍ ແລະຄົນທັງປວງທີ່ຢູ່ຕາມລຳນ້ຳຢໍດາເນ ກໍອອກໄປຫາໂຢຮັນ; ພວກເຂົາໄດ້ອອກໄປສາລະພາບຄວາມຜິດບາບຂອງຕົນແລະໄດ້ຮັບບັບຕິສະມາຈາກໂຢຮັນໃນແມ່ນ້ຳຢໍດາເນ.*

ຄົນຢິວຈຳນວນຫຼາຍເຊື່ອພຣະຄຳຂອງພຣະເຈົ້າ ຊຶ່ງໂຢຮັນໄດ້ປະກາດແກ່ເຂົາທັງຫຼາຍ; ພວກເຂົາຈຶ່ງໄປຫາໂຢຮັນເພື່ອຮັບບັບຕິສະມາຈາກທ່ານ ເມື່ອຜູ້ໃດຜູ້ໜຶ່ງຮັບບັບຕິສະມາກໍເປັນໝາຍສຳ



ກະສັດ ພຣະເຢຊູໄດ້ຖືກໃຊ້ໃຫ້ສະເດັດເຂົ້າມາໃນໂລກໃນຖານະຜູ້ປະກາດພຣະທຳຂອງພຣະເຈົ້າເພື່ອຈະປະກາດເຖິງຫົນທາງຂອງພຣະເຈົ້າທີ່ຈະຊ່ວຍໃຫ້ມະນຸດຊາດທັງປວງລອດພົ້ນຈາກຊາຕານ, ຄວາມບາບ ແລະການລົງໂທດນິລັນດອນ. ພຣະເຈົ້າຍັງໄດ້ໃຊ້ພຣະເຢຊູໃຫ້ມາເປັນມະຫາປະໂລຫິດທີ່ຍິ່ງໃຫຍ່ຄົນສຸດທ້າຍອີກດ້ວຍ ແລະໃນທີ່ສຸດພຣະເຢຊູຈະຊົງເປັນກະສັດຜູ້ຊົງຄອບຄອງສິ່ງສາລະພັດທັງໝົດ.

ນາງມາຣີອາຊຶ່ງຈະເປັນແມ່ຂອງພຣະເຢຊູນັ້ນໄດ້ຕົກລົງວ່າຈະແຕ່ງງານກັບຊາຍຜູ້ໜຶ່ງທີ່ມີຊື່ວ່າໂຢເຊບ, ໂຢໂຊບພົບວ່ານາງມາຣີອາຖືພາ ໂຢເຊບຮູ້ວ່າຕົນເອງບໍ່ແມ່ນພໍ່ຂອງເດັກນ້ອຍໃນມົດລູກນີ້, ຕາມທຳນຽມຊາວຢິວ ໂຢເຊບສາມາດຈະຮຽກຮ້ອງໃຫ້ຂ້ານາງມາຣີອາໂທດຖານທີ່ຖືພາໂດຍທີ່ເດັກນ້ອຍບໍ່ໄດ້ເກີດຈາກໂຢເຊບໄດ້, ຢ່າງໃດກໍຕາມໂຢເຊບຮັກນາງມາຣີອາແລະຕັດສິນໃຈວ່າຈະຖອນໝັ້ນກັນຢ່າງລັບໆແຕ່ພຣະເຈົ້າບໍ່ຊົງຍອມໃຫ້ໂຢເຊບແຍກຈາກມາລີອາ ເພາະໂຢເຊບເປັນຜູ້ຊາຍທີ່ດີແລະໄວ້ວາງໃຈໃນພຣະເຈົ້າໂຢເຊບເອງກໍເປັນຄົນບາບດ້ວຍ ແຕ່ລາວໄດ້ເຂົ້າມາຫາພຣະເຈົ້າຕາມວິທີທີ່ພຣະເຈົ້າຊົງຈັດຕຽມໄວ້ ພຣະເຈົ້າຊົງປາຖະໜາໃຫ້ໂຢເຊບຮັບນາງມາຣີອາມາເປັນເມຍເພື່ອວ່າ ພຣະເຢຊູ ຈະມີພໍ່ທີ່ດີຄົນໜຶ່ງໃນໂລກນີ້ດ້ວຍ ພຣະເຈົ້າຈຶ່ງໃຊ້ເທວະດາອົງໜຶ່ງໄປແຈ້ງແກ່ໂຢເຊບໃຫ້ຮູ້ຄວາມຈິງກ່ຽວກັບນາງມາຣີອາໃນຄວາມຝັນວ່າ ນາງມາຣີອາຍັງຄົງຊື່ສັດຕໍ່ໂຢເຊບແລະຍັງຄົງເປັນຍິງພົມມະຈາລີ.



*ເອຊາຢາ 7:14 ພຣະຜູ້ເປັນເຈົ້າຈະໃຫ້ເຈົ້າເຫັນໝາຍສຳຄັນຢ່າງໜຶ່ງ ຄື ຍິງສາວຜູ້ໜຶ່ງຈະກືພາແລະຈະອອກລູກເປັນຜູ້ຊາຍ ແລະຈະມີຊື່ວ່າ "ອິມມານູເອນ".*



ບັນດາຜູ້ປະກາດພຣະທຳທັງຫຼາຍໄດ້ກ່າວໄວ້ແລ້ວວ່າ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ຈະປະສູດຈາກຍິງພົມມະຈາລີ ພຣະເຢຊູ ຈະຊົງກຳເນີດເຂົ້າມາໃນໂລກເພື່ອຈະຊ່ວຍຄົນບາບໃຫ້ລອດພົ້ນຈາກການລົງໂທດຂອງພຣະເຈົ້າ ພຣະອົງສະເດັດມາເພື່ອຈະຊ່ວຍ



# ບົດທີ 16

# ການຮັບບັບຕິສະມາແລະ ການທົດລອງຂອງພະເຢຊູ

ບັດນີ້ໂຢຮັນຊຶ່ງໄດ້ຮັບການເລືອກສັນຈາກພຣະເຈົ້າໃຫ້ເປັນຜູ້ປະກາດພຣະທຳທີ່ຈະມາຕຽມຊາວຢິວທັງຫຼາຍໃຫ້ພ້ອມທີ່ຈະຕ້ອນຮັບພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ໄດ້ຈະເລີນຂຶ້ນເປັນຜູ້ໃຫຍ່ແລ້ວພຣະເຈົ້າຊົງຈັດຕຽມເວລານີ້ໃຫ້ໂຢຮັນເລີ່ມສັ່ງສອນປະຊາຊົນວ່າເວລາທີ່ພວກເຂົາຈະຕ້ອງກັບໃຈເສຍໃໝ່ໄດ້ມາເຖິງແລ້ວ.

*ມັດທາຍ 3:1-2 ຄາວນັ້ນໂຢຮັນບັບຕິສະໂຕ ມາປະກາດໃນປ່າແຂວງຢູດາຍວ່າ "ຈົ່ງກັ້ນໃຈເກົ່າ ເອົາໃຈໃໝ່ ເພາະວ່າລາຊະອານາຈັກສະຫວັນໄດ້ມາໃກ້ແລ້ວ".*

ໂຢຮັນໄດ້ປະກາດຂໍ້ຄວາມນີ້ຊຶ່ງມີຄວາມໝາຍວ່າ ປະຊາຊົນຈະຕ້ອງປ່ຽນແປງທັດສະນະຄະຕິທີ່ມີຕໍ່ພຣະເຈົ້າກ່ຽວກັບຕົວພວກເຂົາແລະຄວາມບາບຂອງຕົນເອງ ເຂົາທັງຫຼາຍຈຳເປັນຕ້ອງເຫັນພ້ອມກັບພຣະເຈົ້າວ່າ ພຣະອົງຊົງເປັນພຣະເຈົ້າທ່ຽງແທ້ແຕ່ພຽງພຣະອົງດຽວ ແລະພວກເຂົາຈະຕ້ອງຮັບໃຊ້ແລະນະມັດສະການພຣະອົງແຕ່ພຽງຜູ້ດຽວ ນອກຈາກນີ້ພວກເຂົາທັງຫຼາຍຍັງຈຳເປັນທີ່

ກ່ຽວກັບພຣະຜູ້ຊ່ວຍໃຫ້ລອດພົ້ນໄວ້ເປັນຈຳນວນຫຼາຍ ຂໍ້ມູນຂ້າງລຸ່ມນີ້ເປັນຕົວຢ່າງທີ່ສະແດງໃຫ້ເຫັນເຖິງຄຳທຳນວາຍບາງຢ່າງຊຶ່ງສຳເລັດຕາມທີ່ພຣະເຈົ້າໄດ້ຊົງສັນຍາໄວ້.

| <u>ຄຳທຳນວາຍໃນພຣະຄຳພີເດີມ</u> | | <u>ສຳເລັດໃນພຣະຄຳພີໃໝ່</u> |
|---|---|---|
| **ເປັນເຊື້ອສາຍຂອງກະສັດດາວິດ** | **ເອຊາຢາ 9:7** | **ມັດທາຍ 1:1** |
| **ປະສູດຈາກຍິງພົມມະຈາລີ** | **ເອຊາຢາ 7:14** | **ມັດທາຍ 1:18-25** |
| **ປະສູດໃນເມືອງເບດເລເຮມ** | **ມີກາ 5:2** | **ມັດທາຍ 2:1** |
| **ໜີໄປຍັງປະເທດອີຢີບ** | **ໂຮເຊອາ 11:1** | **ມັດທາຍ 2:14** |
| **ລັກສະນະບາງປະການຂອງພຣະອົງ** | **ເອຊາຢາ 11:2** | **ລູກາ 2:52** |

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 15 ໃນໜ້າ 78 *



ຊີວິດທຸກຄົນທີ່ເຫັນດ້ວຍກັບພຣະເຈົ້າວ່າຕົນເອງເປັນຄົນບາບທີ່ຕ້ອງການພຣະຜູ້ຊ່ວຍໃຫ້ລອດພົ້ນ ອິມມານູເອນ ແປວ່າ ພຣະເຈົ້າຊົງສະຖິດຢູ່ກັບເຮົາ. ຂໍ້ຄວາມນີ້ໝາຍຄວາມວ່າພຣະເຈົ້າເອງຈະສະເດັດເຂົ້າມາໃນໂລກໂດຍປະສູດເປັນເດັກນ້ອຍແລະຈະຊົງໃຊ້ຊີວິດກັບມະນຸດໃນໂລກນີ້ ພຣະເຢຊູປະສູດໃນເມືອງເບດເລເຮມຕາມທີ່ບັນດາຜູ້ປະກາດພຣະທຳຂອງພຣະເຈົ້າໄດ້ກ່າວເມື່ອຫຼາຍປີມາແລ້ວວ່າ ພຣະເຢຊູຈະປະສູດເປັນພຣະຜູ້ຊ່ວຍໃຫ້ລອດພົ້ນສຳລັບຄົນບາບເພື່ອຈະປົດປ່ອຍພວກເຂົາໃຫ້ເປັນອິດສະຫຼະຈາກການຄວບຄຸມຂອງຊາຕານແລະຄວາມບາບ.

*ມັດທາຍ 2:1-3 ເມື່ອພຣະເຢຊູຊົງປະສູດຢູ່ບ້ານເບດເລເຮມ ແຂວງຢູດາຍໃນສະໄໝຂອງກະສັດເຮໂລດ ເບິ່ງແມ, ມີພວກໂຫລາຈານຈາກທິດຕາເວັນອອກ ມາຍັງກຸງເຢຣູຊາເລັມ ຖາມວ່າ"ກຸມມານຜູ້ເກີດມາເປັນກະສັດຂອງຊາດຢິວຢູ່ທີ່ໃດ ເພາະເຮົາໄດ້ເຫັນດາວຂອງທ່ານປາກົດຂຶ້ນ ເຮົາຈຶ່ງມາເພື່ອຈະຂາບໄຫວ້ທ່ານ" ຄັນກະສັດເຮໂລດ ຊົງໄດ້ຍິນດັ່ງນີ້ແລ້ວກໍວຸ້ນວາຍພະໄທ ທັງຊາວກຸງເຢຣູຊາເລັມກໍພ້ອມກັນວຸ້ນວາຍດ້ວຍ.*



ເຮໂລດກໍເໝືອນກັບກະສັດຟາໂຣຂອງຊາວອີຢີບໃນຍຸກໂມເຊ ຊຶ່ງບໍ່ປາຖະໜາທີ່ຈະໃຫ້ໃຜມາປົກຄອງເໜືອຕົນເອງ ເຮໂລດຢ້ານວ່າພະອົງຈະສູນເສຍຕຳແໜ່ງກະສັດເມື່ອເດັກນ້ອຍນີ້ເຕີບໃຫຍ່ຂຶ້ນເປັນຊາຍໜຸ່ມ ພວກນັກປາດໄດ້ພົບພຣະກຸມມານເຢຊູຢູ່ກັບແມ່ຈຶ່ງນະມັດສະການແລະຖວາຍເຄື່ອງບັນນາການແກ່ພຣະອົງ ພຣະເຈົ້າໄດ້ຊົງເຕືອນພວກນັກປາດບໍ່ໃຫ້ກັບໄປຫາເຮໂລດ ເພາະເຮໂລດປາຖະໜາຈະຮູ້ວ່າພຣະກຸມມານເຢຊູຢູ່ທີ່ໃດເພື່ອຈະສັງຫານພຣະກຸມມານນັ້ນເສຍ ພວກນັກປາດຈຶ່ງກັບໄປຍັງປະເທດຂອງຕົນເອງໂດຍໃຊ້ເສັ້ນທາງອື່ນ ພຣະເຈົ້າຍັງກ່າວບອກໃຫ້ໂຢເຊບພາພຣະເຢຊູໄປຍັງປະເທດອີຢີບບ່ອນຊຶ່ງພຣະອົງຈະປອດໄພຈາກແຜນການຂອງ ເຮໂລດທີ່ຈະຂ້າພຣະອົງເສຍ ດັ່ງນັ້ນພຣະເຢຊູຈຶ່ງຖືກພາໄປຍັງປະເທດອີຢີບຕາມຄຳທີ່ບັນດາຜູ້ປະກາດພຣະທຳທັງຫຼາຍໄດ້ກ່າວໄວ້ເມື່ອຫຼາຍປີກ່ອນໜ້ານີ້.

ເມື່ອເຮໂລດສິ້ນພະຊົນ ພຣະເຈົ້າຊົງໃຊ້ໃຫ້ເທວະດາອົງໜຶ່ງໄປແຈ້ງແກ່ໂຢເຊບໃຫ້ພານາງມາລີອາແລະພຣະເຢຊູອອກຈາກປະເທດອີຢີບແລະເດີນທາງກັບໄປຍັງແຜ່ນດິນອິດສະຣາເອນອີກ ພວກເຂົາໄດ້ຕັ້ງຖິ່ນຖານທາງຕອນເໜືອຂອງປະເທດອິດສະຣາເອນໃນເມືອງທີ່ເອີ້ນວ່າເມືອງນາຊາເຣັດ.

*ລູກາ 2:40, 52 ພຣະກຸມມານນັ້ນກໍໃຫຍ່ຂຶ້ນແລະແຂງແຮງ, ເຕັມໄປດ້ວຍສະຕິປັນຍາ ແລະພຣະຄຸນຂອງພຣະເຈົ້າກໍສະຖິດຢູ່ນຳ. ພຣະເຢຊູກໍໄດ້ຈະເລີນຂຶ້ນທາງດ້ານສະຕິປັນຍາ, ໃນດ້ານຮ່າງກາຍ, ເປັນທີ່ຊອບຕໍ່ພຣະເຈົ້າແລະຕໍ່ມະນຸດເໝືອນກັນ.*





ພຣະເຢຊູຊົງເຕີບໃຫຍ່ ຈາກເດັກນ້ອຍເປັນຊາຍໜຸ່ມທີ່ແຂງແຮງແລະປະກອບດ້ວຍສະຕິປັນຍາ ພຣະບິດາຂອງພຣະອົງຊຶ່ງກໍຄືພຣະເຈົ້ານັ້ນເອງ ໄດ້ຊົງປົກປ້ອງຄຸ້ມຄອງແລະຊົງນຳພຣະເຢຊູໃນທຸກສິ່ງທີ່ພຣະອົງຄິດ, ກ່າວ ແລະກະທຳ ພຣະເຢຊູຊົງເຊື່ອຟັງພຣະບັນຊາຂອງພຣະເຈົ້າທຸກປະການ ພຣະອົງບໍ່ເຄີຍເຮັດບາບເພາະພຣະອົງບໍ່ໄດ້ກຳເນີດເປັນຄົນບາບ ເຖິງວ່າພຣະເຢຊູຈະຊົງເປັນພຣະເຈົ້າ ແຕ່ພຣະອົງກໍຍັງເປັນມະນຸດຢ່າງແທ້ຈິງດ້ວຍ ພຣະອົງໄດ້ເຕີບໃຫຍ່ຂຶ້ນເປັນຊາຍໜຸ່ມໃນຮ່າງກາຍຂອງມະນຸດ ເຮົາໄດ້ຮຽນຮູ້ມາແລ້ວວ່າພຣະຜູ້ຊ່ວຍໃຫ້ລອດພົ້ນຈະຕ້ອງເປັນທັງພຣະເຈົ້າແລະມະນຸດໃນພຣະກາຍດຽວກັນ ພຣະເຢຊູຊົງເປັນພຣະເຈົ້າແຕ່ພຣະອົງກໍໄດ້ປະສູດເປັນມະນຸດເຂົ້າມາໃນໂລກເພື່ອວ່າພຣະອົງຈະສາມາດເປັນພຣະຜູ້ຊ່ວຍໃຫ້ລອດພົ້ນສຳລັບມະນຸດຊາດທັງມວນໄດ້.

ຕາມທີ່ເຮົາໄດ້ກ່າວເຖິງໃນບົດຮຽນທີ່ຜ່ານມາແລ້ວວ່າ ບັນດາຜູ້ປະກາດພຣະທຳຈາກພຣະຄຳພີເດີມໄດ້ຂຽນຄຳທຳນວາຍ